ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ...3617.../ກປ

ນະຄອນຫຼວງວຽງຈັນ, ວັນທີ ...10 AUG 2022

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 1460/ກລປ, ລົງວັນທີ 09 ມິຖຸນາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງຫ້ອງການ ສະບັບເລກທີ 2842/ຫກ, ລົງວັນທີ 21 ກໍລະກົດ 2022.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ເຫັນດີ ຮັບຮອງ ແລະ ປະກາດໃຊ້ ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ.

**ມາດຕາ 2** ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງ ສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ, ສູນ ອ້ອມຂ້າງກະຊວງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມ ຮ່ວມມືໃນການຈັດຕັ້ງປະຕິບັດ ມາດຕະຖານດັ່ງກ່າວ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ./.

ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້ — ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ 01 ສະບັບ;
2. ຫ້ອງການ 01 ສະບັບ;
3. ກົມລ້ຽງສັດ ແລະ ການປະມົງ 01 ສະບັບ;
4. ພະແນກນິຕິກຳ 01 ສະບັບ;
5. ເກັບຮັກສາໄວ້ 01 ສະບັບ.

# ຄຳນຳ

ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າສະບັບນີ້ ສ້າງຂຶ້ນມາ ເພື່ອເປັນເອກະສານມາດຕະຖານທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ໂດຍມີຈຸດປະສົງເປັນຄູ່ມືແນະນຳ ໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ເຄື່ອນໄຫວວຽກງານກ່ຽວກັບສັດປ່າ ໃນການຈັດຕັ້ງປະຕິບັດການ ເຝົ້າລະວັງ, ກັນ, ຄວບຄຸມ ແລະ ໂຕ້ຕອບ ເຫດການລະບາດຂອງພະຍາດສັດປ່າ ແນໃສ່ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ ລວມໄປເຖິງຜົນກະທົບຕໍ່ເສດຖະກິດທີ່ອາດຈະເກີດຂຶ້ນຕາມມາ ຈາກເຫດການລະບາດຂອງພະຍາດສັດປ່າ.

ເອກະສານສະບັບນີ້ ໄດ້ມີການກຳນົດໜ້າທີ່ຮັບຜິດຊອບ ຂອງແຕ່ລະໜ່ວຍງານກ່ຽວຂ້ອງ ແລະ ຂັ້ນຕອນການປະຕິບັດ ໃນການເຝົ້າລະວັງ ແລະ ໂຕ້ຕອບ ຕໍ່ເຫດການສັດປ່າ ຕາຍຜິດປົກກະຕິ ຫຼື ເຫດການລະບາດຂອງພະຍາດສັດປ່າ ເຊັ່ນ: ການເກັບກຳຂໍ້ມູນ, ການລາຍງານເຫດການ, ການເກັບຕົວຢ່າງ ແລະ ຊາກສັດປ່າ ເພື່ອການວິໄຈ ຄົ້ນຫາສາເຫດການຕາຍ ຫຼື ເປັນພະຍາດ ລວມໄປເຖິງຂໍ້ແນະນຳພື້ນຖານ ໃນການປະຕິບັດການຄວບຄຸມ ການລະບາດຂອງພະຍາດສັດປ່າ ແລະ ການປະສານງານ ຮ່ວມມືກັບຫຼາຍພາກສ່ວນ ພ້ອມທັງຂັ້ນຕອນ ການຄຸ້ມຄອງຂໍ້ມູນພະຍາດສັດປ່າ.

ກົມລ້ຽງສັດ ແລະ ການປະມົງ ໃນນາມເປັນຄະນະຮັບຜິດຊອບຫຼັກ ໃນການພັດທະນາມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ຂໍແຈ້ງວ່າ ມາດຕະຖານຂັ້ນຕອນ ສະບັບນີ້ ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານ, ນັກວິຊາການ ທັງຂັ້ນສູນກາງ ແລະ ທ້ອງຖິ່ນແລ້ວ ແລະ ຫວັງວ່າຈະໃຫ້ກາຍເປັນບ່ອນອີງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດໃນສັດປ່າ ທີ່ເປັນເອກະພາບໃນຂອບເຂດທົ່ວປະເທດ.

ນະຄອນຫຼວງວຽງຈັນ, ວັນທີ 15 JUL 2022

ຫົວໜ້າກົມ

ກະຊວງກະສິກຳແລະປ່າໄມ້
ກົມລ້ຽງສັດແລະການປະມົງ

ນ. ວິໄລພອນ ວໍລະພົມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ມາດຕະຖານ
# ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ

**ລະຫັດມາດຕະຖານ: ມກປ-ລປ-2022-00018**
**STD CODE: AFSTD-LF-2022-00018**

**ນະຄອນຫຼວງວຽງຈັນ, ປີ 2022**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ມາດຕະຖານ
# ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ

**ລະຫັດມາດຕະຖານ: ມກປ-ລປ-2022-00018**
**STD CODE: AFSTD-LF-2022-00018**

ອົງການສ້າງມາດຕະຖານ:
ກົມລ້ຽງສັດ ແລະ ການປະມົງ
ຖະໜົນ ສຸພານຸວົງ, ບ້ານ ສີຖານເໜືອ, ເມືອງ ສີໂຄດຕະບອງ
ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ 6644
ເບີໂທລະສັບ: +856 21 215242-3
ເບີໂທລະສານ: +856 21 215141
ເວັບໄຊທ໌: http://dlf.maf.gov.la

**ນະຄອນຫຼວງວຽງຈັນ, ປີ 2022**

# ຄຳນຳ

ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າສະບັບນີ້ ສ້າງຂຶ້ນມາ ເພື່ອເປັນເອກະສານມາດຕະຖານທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ໂດຍມີຈຸດປະສົງເປັນຄູ່ມືແນະນຳ ໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ເຄື່ອນໄຫວວຽກງານກ່ຽວກັບສັດປ່າ ໃນການຈັດຕັ້ງປະຕິບັດການ ເຝົ້າລະວັງ, ກັນ, ຄວບຄຸມ ແລະ ໂຕ້ຕອບ ເຫດການລະບາດຂອງພະຍາດສັດປ່າ ແນໃສ່ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ ລວມໄປເຖິງຜົນກະທົບຕໍ່ເສດຖະກິດທີ່ອາດຈະເກີດຂຶ້ນຕາມມາ ຈາກເຫດການລະບາດຂອງພະຍາດສັດປ່າ.

ເອກະສານສະບັບນີ້ ໄດ້ມີການກຳນົດໜ້າທີ່ຮັບຜິດຊອບ ຂອງແຕ່ລະໜ່ວຍງານກ່ຽວຂ້ອງ ແລະ ຂັ້ນຕອນການປະຕິບັດ ໃນການເຝົ້າລະວັງ ແລະ ໂຕ້ຕອບ ຕໍ່ເຫດການສັດປ່າ ຕາຍຜິດປົກກະຕິ ຫຼື ເຫດການລະບາດຂອງພະຍາດສັດປ່າ ເຊັ່ນ: ການເກັບກຳຂໍ້ມູນ, ການລາຍງານເຫດການ, ການເກັບຕົວຢ່າງ ແລະ ຊາກສັດປ່າ ເພື່ອການວິໄຈ ຄົ້ນຫາສາເຫດການຕາຍ ຫຼື ເປັນພະຍາດ ລວມໄປເຖິງຂໍ້ແນະນຳພື້ນຖານ ໃນການປະຕິບັດການຄວບຄຸມ ການລະບາດຂອງພະຍາດສັດປ່າ ແລະ ການປະສານງານ ຮ່ວມມືກັບຫຼາຍພາກສ່ວນ ພ້ອມທັງຂັ້ນຕອນ ການຄຸ້ມຄອງຂໍ້ມູນພະຍາດສັດປ່າ.

ກົມລ້ຽງສັດ ແລະ ການປະມົງ ໃນນາມເປັນຄະນະຮັບຜິດຊອບຫຼັກ ໃນການພັດທະນາມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ຂໍແຈ້ງວ່າ ມາດຕະຖານຂັ້ນຕອນ ສະບັບນີ້ ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານ, ນັກວິຊາການ ທັງຂັ້ນສູນກາງ ແລະ ທ້ອງຖິ່ນແລ້ວ ແລະ ຫວັງວ່າຈະໃຫ້ກາຍເປັນບ່ອນອີງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດໃນສັດປ່າ ທີ່ເປັນເອກະພາບໃນຂອບເຂດທົ່ວປະເທດ.

ນະຄອນຫຼວງວຽງຈັນ, ວັນທີ

**ຫົວໜ້າກົມ**

## ພາກສ່ວນຮັບຜິດຊອບໃນການພັດທະນາ ແລະ ຈັດຕັ້ງປະຕິບັດ

ການພັດທະນາ ແລະ ຈັດຕັ້ງປະຕິບັດ "ມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າ" ປະກອບມີ ພາກສ່ວນຕົ້ນຕໍ ດັ່ງນີ້:

- ກະຊວງກະສິກຳ ແລະ ປ່າໄມ້ (ກົມລ້ຽງສັດ ແລະ ການປະມົງ, ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ທີ່ກ່ຽວຂ້ອງຕາມສາຍການຈັດຕັ້ງຂອງຕົນ);
- ກະຊວງສາທາລະນະສຸກ (ກົມຄວບຄຸມພະຍາດຕິດຕໍ່, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຫ້ອງການສາທາລະນະສຸກເມືອງ, ນະຄອນ ທີ່ກ່ຽວຂ້ອງຕາມສາຍການຈັດຕັ້ງຂອງຕົນ);
- ອົງການປົກຄອງທ້ອງຖິ່ນ (ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານ);
- ອົງການອະນຸລັກສັດປ່າ (WCS) ປະຈຳ ສປປ ລາວ;
- ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ ຂອງລັດ ແລະ ເອກະຊົນ;
- ສວນສັດ, ໂຮງລະຄອນສັດ ຂອງລັດ ແລະ ເອກະຊົນ;
- ຟາມຂະຫຍາຍພັນສັດປ່າ ຂອງລັດ ແລະ ເອກະຊົນ;
- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດວຽກງານອະນຸລັກສັດປ່າ ຢູ່ ສປປ ລາວ.

# ສາລະບານ


ພາກທີ 1 ພາກສະເໜີ……………………………………………………………………………1

1. ຄວາມເປັນມາ ......1
2. ຈຸດປະສົງລວມ ......2
3. ຂອບເຂດການນຳໃຊ້......2
4. ການອະທິບາຍຄຳສັບ......3

ພາກທີ 2 ມາດຕະຖານ ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າຢູ່ ສປປລາວ …………………… ..5

1. ມາດຕະຖານຂັ້ນຕອນການປະຕິບັດໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ......5
   - 1.1 ຈຸດປະສົງ......5
   - 1.2 ເປົ້າໝາຍການນຳໃຊ້ ......5
   - 1.3 ໜ່ວຍງານຈັດຕັ້ງປະຕິບັດ ......5
   - 1.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ ......5
   - 1.5 ວັດຖຸ ແລະ ອຸປະກອນ ......6
   - 1.6 ຂັ້ນຕອນການປະຕິບັດໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ ......7
2. ມາດຕະຖານຂັ້ນຕອນການປະຕິບັດ ການວິໄຈຕົວຢ່າງ ແລະ ຊາກສັດປ່າ ......19
   - 2.1 ຈຸດປະສົງ......19
   - 2.2 ເປົ້າໝາຍການນຳໃຊ້ ......19
   - 2.3 ໜ່ວຍງານຈັດຕັ້ງປະຕິບັດ ......19
   - 2.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ ......19
   - 2.5 ຂັ້ນຕອນການປະຕິບັດ ການວິໄຈຕົວຢ່າງ ແລະ ຊາກສັດປ່າ......20
3. ມາດຕະຖານ ຂັ້ນຕອນການປະຕິບັດ ການຄວບຄຸມການລະບາດຂອງພະຍາດສັດປ່າ ......21
   - 3.1 ຈຸດປະສົງ......21
   - 3.2 ເປົ້າໝາຍການນຳໃຊ້ ......21
   - 3.3 ໜ່ວຍງານຈັດຕັ້ງປະຕິບັດ ......22
   - 3.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ ......22
   - 3.5 ຂັ້ນຕອນການປະຕິບັດໃນການຄວບຄຸມການລະບາດຂອງພະຍາດສັດປ່າ......23
4. ມາດຕະຖານຂັ້ນຕອນການປະຕິບັດ ການຄຸ້ມຄອງຖານຂໍ້ມູນພະຍາດສັດປ່າ......27
   - 4.1 ຈຸດປະສົງ......27
   - 4.2 ເປົ້າໝາຍການນຳໃຊ້ ......27
   - 4.3 ໜ່ວຍງານຈັດຕັ້ງປະຕິບັດ ......27
   - 4.4 ໜ້າທີ່ຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ......27
   - 4.5 ຂັ້ນຕອນການປະຕິບັດ ການຄຸ້ມຄອງຖານຂໍ້ມູນເຝົ້າລະວັງພະຍາດສັດປ່າ ‘WHIP’......28

ພາກທີ 3 ການຮ່ວມມື ແລະ ປະສານງານ ...... 299

ເອກະສານອ້າງອີງ ...... 30

ເອກະສານຊ້ອນທ້າຍ ...... 31

# ພາກທີ 1
# ພາກສະເໜີ

## 1. ຄວາມເປັນມາ

ເປັນທີ່ຮັບຮູ້ກັນດີໃນທົ່ວໂລກວ່າ ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ມີການເຊື່ອມໂຍງເຊິ່ງກັນ ແລະ ກັນຢ່າງສະໜິດແໜ້ນ ແລະ ກໍາລັງໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກກິດຈະກໍາຂອງຄົນ, ຊຶ່ງເຫັນວ່າຄວາມຫຼາກຫຼາຍດ້ານຊະນິດພັນພືດ, ພັນສັດ ແລະ ລະບົບນິເວດນັບມື້ນັບຊຸດໂຊມ ແລະ ຫຼຸດໜ້ອຍຖອຍລົງ; ໃນຂະນະທີ່ການບຸກລຸກຖິ່ນທີ່ຢູ່ອາໄສຂອງສັດປ່າແມ່ນນັບມື້ນັບເພີ່ມຂຶ້ນ ອັນໄດ້ສ້າງເງື່ອນໄຂໃຫ້ມີພະຍາດເກີດຂຶ້ນໃໝ່ຫຼາຍຂຶ້ນ. ປັດຈຸບັນ, ໄດ້ມີການຮັບຮູ້ວ່າ ສັດປ່າມີບົດບາດຄວາມສໍາຄັນ ໃນການເປັນສັນຍານເຕືອນເຖິງເຫດການລະບາດຂອງພະຍາດທີ່ເກີດຂຶ້ນໃໝ່, ເປັນຕົວຊີ້ວັດໃຫ້ເຫັນເຖິງໄພຂົ່ມຂູ່ຕໍ່ຄວາມອຸດົມສົມບູນຂອງສິ່ງແວດລ້ອມ ແລະ ເປັນໂຕຖືເຊື້ອພະຍາດຕິດຕໍ່ລວມທັງພະຍາດຕິດຕໍ່ຈາກສັດສູ່ຄົນ “zoonotic diseases” ແລະ ຄວາມສ່ຽງດ້ານສຸຂະພາບຂອງສັດປ່າເອງ ຊຶ່ງທັງໝົດນີ້ສາມາດສົ່ງຜົນກະທົບທາງລົບໂດຍກົງຕໍ່ວຽກງານອະນຸລັກຊີວະນາໆພັນ.

ການລະບາດຂອງພະຍາດ ທີ່ມີສັດປ່າເປັນແຫຼ່ງກໍາເນີດຂອງເຊື້ອ ໃນໄລຍະຜ່ານມາ ເຊັ່ນ: ພະຍາດອີໂບລາ (Ebola), ຊາຣສ໌ (SARS) ແລະ ໂຄວິດ-19 (COVID-19) ໄດ້ຊີ້ໃຫ້ເຫັນວ່າ ເພື່ອປົກປ້ອງສຸຂະພາບຂອງຄົນ ພວກເຮົາຈະຕ້ອງດໍາເນີນການຕິດຕາມ ແລະ ຫຼຸດຜ່ອນຄວາມສ່ຽງຈາກພະຍາດຕິດຕໍ່ຈາກສັດສູ່ຄົນທີ່ອາດຈະເກີດຂຶ້ນ. ການລະບາດຂອງພະຍາດຕິດຕໍ່ລະຫວ່າງສັດລ້ຽງ ແລະ ສັດປ່າ ເຊັ່ນ: ການລະບາດພະຍາດອະຫິວາໝູອາຟຣິກາ (ASF) ທີ່ຜ່ານມາໄດ້ສ້າງຜົນເສຍຫາຍຢ່າງໃຫຍ່ຫຼວງຕໍ່ການລ້ຽງໝູ ແລະ ກະທົບຕໍ່ປະຊາກອນໝູປ່າ ລວມທັງຊະນິດໝູປ່າທີ່ໃກ້ຈະສູນພັນ. ສະນັ້ນ, ຈຶ່ງຈໍາເປັນຢ່າງຍິ່ງ ທີ່ບັນດາປະເທດຕ່າງໆຈະຕ້ອງໄດ້ສ້າງຄວາມພ້ອມໃນການຄົ້ນຫາ ແລະ ຈັດການກັບບັນຫາຕ່າງໆ ທີ່ກ່ຽວຂ້ອງກັບສຸຂະພາບສັດປ່າໃຫ້ທັນການ ແລະ ສ້າງລະບົບເຕືອນໄພລ່ວງໜ້າ ເພື່ອສືບຄົ້ນຫາ ແລະ ໂຕ້ຕອບ ຕໍ່ເຫດການເຈັບ ຫຼື ການຕາຍຂອງສັດປ່າ ທີ່ອາດສົ່ງຜົນກະທົບຢ່າງກວ້າງຂວາງຕໍ່ສຸຂະພາບຂອງຄົນ, ສັດລ້ຽງ, ສັດປ່າ ແລະ ສິ່ງແວດລ້ອມ.

ການປົກປັກຮັກສາ ແລະ ຕິດຕາມພະຍາດສັດປ່າ ມີຄວາມສໍາຄັນຕໍ່ວຽກງານອະນຸລັກ, ຄວາມອຸດົມສົມບູນຂອງລະບົບນິເວດ, ການພັດທະນາແບບຍືນຍົງ, ຄວາມປອດໄພ ແລະ ຄວາມໝັ້ນຄົງທາງດ້ານຊີວະພາບ. ອົງການສຸຂະພາບສັດສາກົນ (OIE) ໄດ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກ ສ້າງລະບົບຕິດຕາມ ແລະ ແຈ້ງເຕືອນກ່ຽວກັບພະຍາດທີ່ເກີດຈາກສັດປ່າ. ເປັນເວລາຫຼາຍກວ່າ 10 ປີ ທີ່ ສປປ ລາວ ໄດ້ລິເລີ່ມຫຼາຍກິດຈະກໍາກ່ຽວກັບການເຝົ້າລະວັງພະຍາດສັດປ່າ ໂດຍຜ່ານ ໂຄງການຄົ້ນຄວ້າ ແລະ ເຝົ້າລະວັງພະຍາດຕິດຕໍ່ຈາກສັດປ່າ ໂດຍການສະໜັບສະໜູນຂອງ USAID-PREDICT ແລະ ໂຄງການສຸຂະພາບໜຶ່ງດຽວເພື່ອເຝົ້າລະວັງ ແລະ ພັດທະນາເຄືອຂ່າຍຫ້ອງວິໄຈພະຍາດສັດສູ່ຄົນ ຢູ່ ສປປ ລາວ ໂດຍການສະໜັບສະໜູນຂອງສະຫະພາບເອີຣົບ ຫຼື EU-LACANET ຊຶ່ງໂຄງການດັ່ງກ່າວ ໄດ້ຄົ້ນພົບຫຼັກຖານສໍາຄັນກ່ຽວກັບບັນດາເຊື້ອພະຍາດທີ່ເກີດຂຶ້ນ ແລະ ສົ່ງຕໍ່ກັນລະຫວ່າງສັດປ່າທີ່ມີໃນທ້ອງຖິ່ນ ເຊັ່ນ: ໂຄໂຣນາໄວຣັດ (Coronaviruses), ອັດສ໌ໂຕຣໄວຣັດ (Astroviruses), ເຮີປີດສ໌ໄວຣັດ (Herpes viruses), ເລັບໂຕສ໌ປາຍຣາ (Leptospira spp), ຣິກແກັດເຊຍ (Rickettsia spp) ແລະ ອື່ນໆ. ນອກຈາກນີ້, ຍັງສາມາດລະບຸບັນດາປັດໃຈສໍາຄັນທີ່ເປັນໂຕຂັບເຄື່ອນ ການສົ່ງຕໍ່ພະຍາດລະຫວ່າງສັດປ່າ, ສັດລ້ຽງ ແລະ ສູ່ຄົນ ເຊັ່ນ: ການຕັດໄມ້ທໍາລາຍປ່າ, ການປ່ຽນແປງການນໍາໃຊ້ທີ່ດິນ, ການປ່ຽນແປງສະພາບດິນຟ້າອາກາດ ແລະ ການຄ້າຂາຍສັດປ່າທີ່ພົບເຫັນຢູ່ທົ່ວໄປໃນ ສປປ ລາວ. ມາຮອດປັດຈຸບັນ, ລັດຖະບານບໍ່ທັນມີມາດຕະຖານຂັ້ນຕອນການຈັດຕັ້ງປະຕິບັດການເຝົ້າລະວັງພະຍາດສັດປ່າເປັນອັນສະເພາະ ຍ້ອນວ່າໃນທີ່ຜ່ານມາລັດຖະບານໄດ້ສຸມໃສ່ການຕິດຕາມ ແລະ ຫຼຸດຜ່ອນຄວາມສ່ຽງໃນສັດລ້ຽງ ແລະ ໃນຄົນເປັນຫຼັກ. ສະນັ້ນ, ອົງການທີ່ກ່ຽວຂ້ອງຂອງລັດຖະບານ ຮ່ວມກັບ ອົງການອະນຸລັກສັດປ່າ ປະຈໍາ ສປປ ລາວ

ແລະ ບັນດາອົງການກ່ຽວຂ້ອງອື່ນໆ ຈຶ່ງໄດ້ຮ່ວມກັນພັດທະນາມາດຕະຖານ ຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າສະບັບນີ້ຂຶ້ນ ເພື່ອເປັນບ່ອນອີງດ້ານວິຊາການ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ.

ເປົ້າໝາຍຂອງມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ນີ້ ແມ່ນເພື່ອສ້າງເຄືອຂ່າຍ ແລະ ລະບົບການເຝົ້າລະວັງພະຍາດສັດປ່າທີ່ເປັນເອກະພາບໃນຂອບເຂດທົ່ວປະເທດ ພ້ອມທັງກຳນົດວິທີການໂຕ້ຕອບເບື້ອງຕົ້ນ ຕໍ່ເຫດການລະບາດຂອງພະຍາດສັດປ່າ ແລະ ໄພຂົ່ມຂູ່ຕໍ່ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມແບບມີສ່ວນຮ່ວມຂອງຫຼາຍຂະແໜງການ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າສະບັບນີ້ ຈະມີການກຳນົດບັນດາຄູ່ຮ່ວມງານທີ່ຊັດເຈນ ເພື່ອຮ່ວມກັນປະຕິບັດວຽກງານເຝົ້າລະວັງພະຍາດສັດປ່າ ຊຶ່ງລວມມີ: ການເກັບຕົວຢ່າງ, ການວິໄຈ, ການຮອບຮອມ, ວິເຄາະຂໍ້ມູນທີ່ກ່ຽວຂ້ອງກັບພະຍາດສັດປ່າຢ່າງເປັນປົກກະຕິ ແລະ ສະໜອງຂໍ້ມູນຊຶ່ງກັນ ແລະ ກັນ ລະຫວ່າງຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການໂຕ້ຕອບພະຍາດໃຫ້ທັນການ.

ຄາດໝາຍຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດ ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າສະບັບນີ້ ຕົ້ນຕໍ ຄື: ເຮັດໃຫ້ ສປປ ລາວ ມີຂັ້ນຕອນປະຕິບັດ ການເຝົ້າລະວັງພະຍາດສັດປ່າທີ່ເປັນມາດຕະຖານເອກະພາບທົ່ວປະເທດ; ເຄືອຂ່າຍການເຝົ້າລະວັງພະຍາດສັດປ່າທີ່ເປັນລະບົບໄດ້ຮັບການສ້າງຕັ້ງຂຶ້ນ ແລະ ການເຝົ້າລະວັງພະຍາດສັດປ່າໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ເພື່ອເຝົ້າລະວັງເຊື້ອພະຍາດສັດປ່າ ທີ່ອາດກໍ່ໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບຄົນ, ສັດລ້ຽງ ແລະ ສັດປ່າ ແລະ ສິ່ງຜົນກະທົບທາງລົບຕໍ່ເສດຖະກິດ-ສັງຄົມ ແລະ ລະບົບນິເວດ. ນອກຈາກນີ້, ການຈັດຕັ້ງປະຕິບັດ ມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າ ຍັງຈະສອດຄ່ອງກັບມາດຕະຖານ ແລະ ຄຳແນະນຳຂອງອົງການສຸຂະພາບສັດສາກົນ (OIE) ອີກດ້ວຍ.

## 2. ຈຸດປະສົງລວມ

ມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າມີຈຸດປະສົງ ດັ່ງນີ້:

1) ເພື່ອສ້າງເຄືອຂ່າຍໃນການເຝົ້າລະວັງ, ກັນ, ຄວບຄຸມ ແລະ ໂຕ້ຕອບ ເຫດການລະບາດຂອງພະຍາດສັດປ່າ ໂດຍການຮ່ວມມືກັບຫຼາຍຂະແໜງການ;
2) ເພື່ອໃຫ້ເປັນຄູ່ມືແນະນຳ ໃນການຈັດຕັ້ງປະຕິບັດການເຝົ້າລະວັງ ແລະ ການຄຸ້ມຄອງຂໍ້ມູນພະຍາດສັດປ່າ ທີ່ເປັນເອກະພາບທົ່ວປະເທດ;
3) ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດໃຫ້ແກ່ການຄົ້ນພົບກໍລະນີແຕ່ຫົວທີ, ການປະເມີນຄວາມສ່ຽງ, ການສືບຄົ້ນ, ການໂຕ້ຕອບໄວ ຕໍ່ເຫດການເຈັບ ຫຼື ການຕາຍຂອງສັດປ່າຢູ່ ສປປ ລາວ;
4) ເພື່ອປົກປ້ອງຊີວິດຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

## 3. ຂອບເຂດການນຳໃຊ້

ມາດຕະຖານຂັ້ນຕອນການປະຕິບັດການເຝົ້າລະວັງພະຍາດສັດປ່າສະບັບນີ້ ນຳໃຊ້ສຳລັບກໍລະນີ ການພົບເຫັນເຫດການເຈັບ ຫຼື ການຕາຍຂອງສັດປ່າໂດຍບໍ່ຮູ້ສາເຫດ ຊຶ່ງອາດພົບຢູ່ໃນຖິ່ນທີ່ຢູ່ອາໄສທຳມະຊາດ, ຟາມລ້ຽງສັດປ່າ, ສວນສັດ, ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ, ໂຮງລະຄອນສັດ ລວມໄປເຖິງ ຕ່ອງໂສ້ການຄ້າຂາຍສັດປ່າ, ໃນເຂດຊຸມຊົນ ຫຼື ສະຖານທີ່ອື່ນໆທີ່ກ່ຽວຂ້ອງກັບສັດປ່າ.

## 4. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນມາດຕະຖານສະບັບນີ້ ມີຄວາມໝາຍ ດັ່ງນີ້:

1) **ສັດປ່າ** ໝາຍເຖິງ ສັດທຸກຊະນິດ ທີ່ເກີດ ແລະ ຂະຫຍາຍຕົວ ຢູ່ໃນປ່າ ຫຼື ຖືກນຳເອົາຈາກປ່າ ມາລ້ຽງ ແລະ ຂະຫຍາຍພັນ ຊຶ່ງປະກອບດ້ວຍ ສັດລ້ຽງລູກດ້ວຍນ້ຳນົມ, ສັດເລືອຄານ, ສັດປີກ, ສັດເຄິ່ງບົກ ເຄິ່ງນ້ຳ ແລະ ສັດປ່າຊະນິດອື່ນໆ;
2) **ພະຍາດຕິດຕໍ່** ໝາຍເຖິງ ພະຍາດທີ່ມີສາເຫດມາຈາກການຕິດເຊື້ອພະຍາດຕິດຕໍ່ໃດໜຶ່ງ ເຊັ່ນ: ຈຸລິນຊີ, ຈຸລະໂລກ, ເຊື້ອເຫັດ, ເຊື້ອກາຝາກ ແລະ ອື່ນໆ ຊຶ່ງສາມາດສົ່ງຕໍ່ລະຫວ່າງສັດ ແລະ ຄົນ ໂດຍທາງກົງ ຫຼື ທາງອ້ອມ;
3) **ພະຍາດເກີດຂຶ້ນໃໝ່** ໝາຍເຖິງ ພະຍາດທີ່ປະກົດຂຶ້ນຢູ່ໃນປະຊາກອນໃດໜຶ່ງເປັນຄັ້ງທຳອິດ ຫຼື ພະຍາດທີ່ເຄີຍພົບມາກ່ອນ ແຕ່ມີອັດຕາການເກີດພະຍາດເພີ່ມຂຶ້ນຢ່າງໄວວາ ແລະ ຂະຫຍາຍເປັນວົງກວ້າງ;
4) **ເຊື້ອພະຍາດຕິດຕໍ່** ໝາຍເຖິງ ຈຸລະຊີບທີ່ພາໃຫ້ເກີດພະຍາດໃນຄົນໄດ້ ຊຶ່ງເຊື້ອພະຍາດດັ່ງກ່າວປະກອບດ້ວຍ ຈຸລິນຊີ, ຈຸລະໂລກ, ເຊື້ອເຫັດ ແລະ ເຊື້ອກາຝາກ;
5) **ພະຍາດຕິດຕໍ່ຈາກສັດສູ່ຄົນ** ໝາຍເຖິງ ພະຍາດ ທີ່ສາມາດສົ່ງຕໍ່ ລະຫວ່າງສັດ ແລະ ຄົນ;
6) **ລະບາດວິທະຍາ** ໝາຍເຖິງ ການສຶກສາ ວິໄຈ ທາງດ້ານວິທະຍາສາດ ກ່ຽວກັບ ຮູບແບບ, ສາເຫດ, ຜົນກະທົບ ແລະ ການແຜ່ກະຈາຍຂອງພະຍາດຢູ່ໃນກຸ່ມປະຊາກອນໃດໜຶ່ງ, ລວມເຖິງ ການສຶກສາກ່ຽວກັບ ມາດຕະການ, ວິທີການ ແລະ ເຄື່ອງມືທີ່ເໝາະສົມ ໃນການຄວບຄຸມພະຍາດດັ່ງກ່າວ;
7) **ການເຝົ້າລະວັງພະຍາດ** ໝາຍເຖິງ ຂະບວນການທາງລະບາດວິທະຍາ ໃນການຕິດຕາມສະຖານະພາບດ້ານສຸຂະພາບຂອງປະຊາກອນໃດໜຶ່ງ;
8) **ການເຝົ້າລະວັງພະຍາດແບບບຸກ (Active surveillance)** ໝາຍເຖິງ ການ ເກັບກຳຂໍ້ມູນ, ຈັດການ, ວິເຄາະ, ຕິດຕາມ ໂດຍສຸມໃສ່ເຊື້ອພະຍາດໃດໜຶ່ງ ຫຼື ຫຼາຍພະຍາດ ຢູ່ໃນສັດປ່າຊະນິດໃດໜຶ່ງ ຫຼື ຫຼາຍຊະນິດ;
9) **ການເຝົ້າລະວັງພະຍາດແບບຮັບ (Passive surveillance)** ໝາຍເຖິງ ລະບົບການຕິດຕາມ ແລະ ລາຍງານເຫດການເຫດການ ຢູ່ໃນເຂດທີ່ມີໂອກາດເກີດພະຍາດຂອງສັດປ່າໃດໜຶ່ງ ຫາອົງການກ່ຽວຂ້ອງ ເວລາມີເຫດ ການເກີດຂຶ້ນ ໂດຍທີ່ອົງການດັ່ງກ່າວບໍ່ໄດ້ລົງໄປຊອກຄົ້ນຫາພະຍາດດ້ວຍຕົນເອງ;
10) **ສະຖານທີ່ຈຳກັດບໍລິເວນສັດປ່າ** ໝາຍເຖິງ ສະຖານທີ່ໃດໜຶ່ງ ທີ່ສັດປ່າຖືກຂັງຢູ່ໃນກົງ, ຄອກ, ບໍລິເວນ ຫຼື ອານາເຂດ ທີ່ມີຮົ້ວອ້ອມຮອບ ເຊັ່ນ: ສວນສັດ, ຟາມຂະຫຍາຍພັນສັດປ່າ, ສູນອະນຸລັກສັດປ່າ, ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ, ສວນສັດ ແລະ ອື່ນໆ;
11) **ຖານຂໍ້ມູນການເຝົ້າລະວັງພະຍາດສັດປ່າ "WHIP" (Wildlife Health Intelligence Platform)** ໝາຍເຖິງ ລະບົບຖານຄຸ້ມຄອງຂໍ້ມູນທີ່ສາມາດເຊື່ອມຕໍ່ຫາກັນ ຊຶ່ງພັດທະນາຂຶ້ນສຳລັບການເຝົ້າລະວັງພະຍາດສັດປ່າ ໂດຍ Canadian Wildlife Health Cooperative (CWHC) ຮ່ວມກັບອົງການສຸຂະພາບສັດສາກົນ OIE;
12) **ຄຳສັ່ງໂຕ້ຕອບລະດັບຊາດ** ໝາຍເຖິງ ຄຳສັ່ງໂຕ້ຕອບເຫດການພະຍາດລະບາດ ລະຫວ່າງ ສັດ ແລະ ຄົນ ທີ່ແຜ່ລາມໃນວົງກວ້າງ ຢູ່ພາຍໃນປະເທດ ຫຼື ປະເທດໃກ້ຄຽງ ແລະ ເປັນຄວາມກັງວົນລະດັບຊາດ ໂດຍຄຳສັ່ງດັ່ງກ່າວແມ່ນມາຈາກ ຄະນະກຳມະການແຫ່ງຊາດຕ້ານ ແລະ ຄວບຄຸມພະຍາດຕິດຕໍ່;

13) **ຄຳສັ່ງໂຕ້ຕອບລະດັບສູນກາງ** ໝາຍເຖິງ ຄຳສັ່ງໂຕ້ຕອບເຫດການພະຍາດລະບາດ ລະຫວ່າງ ສັດ - ສັດ ຫຼື ສັດ - ຄົນ ທີ່ແຜ່ລາມຫຼາຍກວ່າໜຶ່ງແຂວງ/ນະຄອນຫຼວງ ແລະ ເປັນຄວາມກັງວົນລະດັບປະເທດ ໂດຍຄຳສັ່ງດັ່ງກ່າວແມ່ນມາຈາກ ຄະນະກຳມະການ ເຝົ້າລະວັງພະຍາດສັດປ່າ;

14) **ຄຳສັ່ງໂຕ້ຕອບລະດັບທ້ອງຖິ່ນ** ໝາຍເຖິງ ຄຳສັ່ງໂຕ້ຕອບເຫດການພະຍາດລະບາດ ລະຫວ່າງ ສັດ - ສັດ ຫຼື ສັດ - ຄົນ ທີ່ແຜ່ລາມພາຍໃນ ແຂວງ/ນະຄອນຫຼວງ ຫຼື ເມືອງ/ນະຄອນ ໃດໜຶ່ງ ແລະ ເປັນຄວາມກັງວົນລະດັບ ແຂວງ/ນະຄອນຫຼວງ ຫຼື ເມືອງ/ນະຄອນ ໂດຍຄຳສັ່ງດັ່ງກ່າວແມ່ນມາຈາກ ຫົວໜ້າ ພະແນກ ຫຼື ຫົວໜ້າ ຫ້ອງການ ກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງ ຫຼື ເມືອງ/ນະຄອນ ທີ່ກ່ຽວຂ້ອງ;

15) **ສຸຂະພາບສັດໜຶ່ງດຽວ (One Health)** ໝາຍເຖິງ ການເຮັດວຽກຮ່ວມກັນລະຫວ່າງຫຼາຍຂະແໜງການ ແລະ ຫຼາຍສາຂາວິຊາອາຊີບ ສະເພາະດ້ານ ເພື່ອປະກອບສ່ວນເຂົ້າໃນການປົກປ້ອງ ສຸຂະພາບ, ຈັດການກັບສິ່ງທ້າທາຍດ້ານສຸຂະພາບ ເຊັ່ນ: ການເກີດຂຶ້ນຂອງພະຍາດຕິດຕໍ່ ແລະ ເຊື້ອຈຸລະຊີບຕ້ານຕໍ່ຢາຕ້ານເຊື້ອ ແລະ ການສົ່ງເສີມດ້ານສຸຂະພາບ ແລະ ຄວາມອຸດົມສົມບູນຂອງລະບົບນິເວດວິທະຍາ (ອີງການອະນາໄມໂລກ).

# ພາກທີ 2
# ມາດຕະຖານ ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າຢູ່ ສປປ ລາວ

ມາດຕະຖານ ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າຢູ່ ສປປ ລາວ ແມ່ນມີຄວາມຈຳເປັນທີ່ສຸດໃນການເຝົ້າລະວັງພະຍາດແຕ່ຫົວທີ ຊຶ່ງປະກອບມີ 4 ມາດຕະຖານຂັ້ນຕອນ ຄື:

1) ມາດຕະຖານຂັ້ນຕອນການປະຕິບັດ ໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ;
2) ມາດຕະຖານຂັ້ນຕອນການປະຕິບັດ ການວິໄຈຕົວຢ່າງ ແລະ ຊາກສັດປ່າ;
3) ມາດຕະຖານຂັ້ນຕອນການປະຕິບັດ ການຄວບຄຸມການລະບາດຂອງພະຍາດສັດປ່າ;
4) ມາດຕະຖານຂັ້ນຕອນການປະຕິບັດ ການຄຸ້ມຄອງຖານຂໍ້ມູນພະຍາດສັດປ່າ.

## 1. ມາດຕະຖານຂັ້ນຕອນການປະຕິບັດໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ

### 1.1 ຈຸດປະສົງ

ເພື່ອກຳນົດຜູ້ຈັດຕັ້ງປະຕິບັດ, ໜ້າທີ່ຄວາມຮັບຜິດຊອບ ແລະ ບັນດາຂັ້ນຕອນການປະຕິບັດ ລວມທັງການກະກຽມເຄື່ອງມືອຸປະກອນທີ່ນຳໃຊ້ເຂົ້າໃນການຄົ້ນຫາ, ບັນທຶກ, ລາຍງານ ແລະ ດຳເນີນການເບື້ອງຕົ້ນຕໍ່ເຫດການຕາຍ ຫຼື ການລະບາດຂອງພະຍາດສັດປ່າ.

### 1.2 ເປົ້າໝາຍການນຳໃຊ້

ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າພາກນີ້ ນຳໃຊ້ໂດຍພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ບັນດາອົງການຈັດຕັ້ງທີ່ເຄື່ອນໄຫວກ່ຽວກັບວຽກງານສັດປ່າ, ລວມທັງຜູ້ປະກອບການກ່ຽວກັບສັດປ່າ, ສວນສັດ, ໂຮງລະຄອນສັດ, ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ ແລະ ຟາມຂະຫຍາຍພັນສັດປ່າ ທີ່ໄດ້ຮັບມອບໝາຍໃຫ້ເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ.

### 1.3 ໜ່ວຍງານຈັດຕັ້ງປະຕິບັດ

ໜ່ວຍງານຈັດຕັ້ງປະຕິບັດການເຝົ້າລະວັງພະຍາດສັດປ່ານີ້ ແມ່ນໜ່ວຍງານຈັດຕັ້ງຂອງລັດ ທີ່ເຮັດວຽກກ່ຽວຂ້ອງກັບສັດ (ທັງສັດປ່າ ແລະ ສັດລ້ຽງ) ແລະ ເຮັດວຽກໃນການປົກປັກຮັກສາຖິ່ນທີ່ຢູ່ອາໄສຂອງສັດປ່າ ຕັ້ງແຕ່ຂັ້ນທ້ອງຖິ່ນຈົນຮອດຂັ້ນສູນກາງ ລວມມີ: ໜ່ວຍກວດກາລາດຕະເວນ, ພະນັກງານຂອງ ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ, ຂະແໜງລ້ຽງສັດ ແລະ ການປະມົງ, ກອງຄຸ້ມຄອງປ່າສະຫງວນ, ກອງຄຸ້ມຄອງປ່າປ້ອງກັນ ແລະ ກອງຄຸ້ມຄອງປ່າຜະລິດ, ເຈົ້າໜ້າທີ່ປ່າໄມ້, ກົມລ້ຽງສັດ ແລະ ການປະມົງ, ກົມປ່າໄມ້ ແລະ ກົມກວດກາປ່າໄມ້ ລວມໄປເຖິງພະນັກງານຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ເຄື່ອນໄຫວວຽກງານອະນຸລັກສັດປ່າ ຢູ່ ສປປ ລາວ ເຊັ່ນ: ອົງການອະນຸລັກສັດປ່າ, ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ ແລະ ຜູ້ປະກອບການກ່ຽວກັບສັດປ່າ ເປັນຕົ້ນ ສວນສັດ, ຟາມສັດປ່າ, ໂຮງລະຄອນສັດ ແລະ ຟາມຂະຫຍາຍພັນສັດປ່າ ຢູ່ ສປປ ລາວ.

### 1.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ

ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ ມີດັ່ງນີ້:

1) ລາຍງານເຫດການເຈັບ ຫຼື ຕາຍຂອງສັດປ່າ ໄປຕາມສາຍລາຍງານໃນເຄືອຂ່າຍການເຝົ້າລະວັງພະຍາດສັດປ່າ;
2) ບັນທຶກຂໍ້ມູນເຫດການ ແລະ ທຳການສືບຄົ້ນຫາສາເຫດ;

3) ເກັບຕົວຢ່າງ ແລະ ຊາກສັດປ່າ ຖ້າໄດ້ຮັບການຝຶກອົບຮົມແລ້ວ ຫຼື ຊ່ວຍວິຊາການສັດຕະວະແພດໃນການເກັບຕົວຢ່າງ ແລະ ຊາກສັດປ່າ ແລະ ທຳການຜ່າຊາກສັດປ່າ ຖ້າຈຳເປັນ;
4) ທຳລາຍຊາກສັດປ່າ ຢ່າງຖືກຕ້ອງເໝາະສົມ;
5) ສົ່ງຂໍ້ມູນ, ຕົວຢ່າງ ແລະ ຊາກສັດປ່າ ໂດຍປະຕິບັດຕາມຄູ່ມືແນະນຳ ທາງດ້ານວິຊາການທີ່ກ່ຽວ ຂ້ອງ;
6) ປະຕິບັດມາດຕະການຄວາມປອດໄພທາງດ້ານຊີວະພາບຕໍ່ຕົນເອງ ແລະ ສິ່ງແວດລ້ອມ;
7) ເຂົ້າຮ່ວມຝຶກອົບຮົມດ້ານວິຊາການຕ່າງໆ ທີ່ກ່ຽວຂ້ອງກັບການເຝົ້າລະວັງພະຍາດສັດປ່າ;
8) ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຕາມທີ່ໄດ້ຮັບມອບໝາຍ.

### 1.5 ວັດຖຸ ແລະ ອຸປະກອນ

ວັດຖຸ ແລະ ອຸປະກອນຂັ້ນພື້ນຖານ ທີ່ໜ່ວຍກວດກາລາດຕະເວນ ຫຼື ຜູ້ເຮັດວຽກຢູ່ພາກສະໜາມ ຕ້ອງມີເວລາອອກກວດກາລາດຕະເວນໃນປ່າ ເພື່ອກຽມຄວາມພ້ອມໃນການເກັບກຳຂໍ້ມູນ ແລະ ເກັບຕົວຢ່າງ ແລະ ຊາກສັດປ່າ ສຳລັບ 2 ຄົນ ໃນການເກັບຕົວຢ່າງ ຫຼື ຊາກສັດ ມີດັ່ງນີ້:

1) ແບບພິມບັນທຶກເຫດການສັດປ່າເຈັບ ແລະ ຕາຍ ຕາມເອກະສານຊ້ອນທ້າຍ 01 ຈຳນວນ 1 ຊຸດ;
2) ເຄື່ອງຈັບຈຸດພິກັດ (GPS) 1 ເຄື່ອງ;
3) ກ້ອງຖ່າຍຮູບ ຫຼື ມືຖືທີ່ສາມາດຖ່າຍຮູບໄດ້ 1 ເຄື່ອງ;
4) ຊຸດປ້ອງກັນຕົນເອງຄົບຊຸດສຳລັບ 2 ຄົນ ປະກອບມີ: ຖົງມື ຄົນລະ 2 ຄູ່, ຜ້າອັດປາກ-ດັງ N95 2 ອັນ, ແວ່ນປ້ອງກັນຕາ (ແວ່ນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ) 2 ອັນ, ຜ້າຢາງກັນເປື້ອນ 2 ອັນ ແລະ ຖົງຫຸ້ມເກີບ ຫຼື ເກີບໂບກ 2 ຄູ່;
5) ມີດຕັດ ຫຼື ມີດ 1 ດວງ;
6) ສະວັບ (Swab) 2 ກ້ານ;
7) ຫຼອດຖາຍໂອ (cryovial) ສຳລັບໃສ່ຕົວຢ່າງ ຂະໜາດ 2 ມລ ທີ່ບັນຈຸ RNA later ຫຼື ສານເກັບຕົວຢ່າງອື່ນທີ່ຄ້າຍຄືກັນ ຈຳນວນ 2 ຫຼອດ;
8) ຫຼອດເປົ່າໃຫຍ່ 1 ຫຼອດ;
9) ແຜ່ນຕິດໝາຍຫຼອດຕົວຢ່າງ ແລະ ບິກເຟີດກັນນ້ຳ “Permanent Marker” ແລະ ບິກຂຽນ 1 ກ້ານ;
10) ຖົງຢາງຊິບລ໋ອກ ຂະໜາດໃຫຍ່ 3 ຖົງ (ທີ່ສາມາດບັນຈຸຊາກສັດປ່າຂະໜາດນ້ອຍ ຫາ ກາງ), ນ້ອຍ 1 ຖົງ (ບັນຈຸຫຼອດເກັບຕົວຢ່າງ);
11) ເຫຼົ້າ 70 % ຫຼື ນ້ຳຢາຂ້າເຊື້ອ;
12) ນ້ຳຢາລ້າງມື ຫຼື ສະບູ ແລະ ນ້ຳ;
13) ເມັດຊີລີກາ ເພື່ອດູດຄວາມຊຸ່ມ 1 ຖົງ.

ຊຸດວັດຖຸ ແລະ ອຸປະກອນຂັ້ນພື້ນຖານ ສຳລັບການລົງສືບຄົ້ນເຫດການ, ເກັບຕົວຢ່າງ, ເກັບຊາກສັດປ່າ ຫຼື ດຳເນີນການຜ່າຊາກສັດປ່າ ໂດຍພະນັກງານວິຊາການທີ່ກ່ຽວຂ້ອງ ຫຼື ຜູ້ທີ່ໄດ້ຜ່ານການຝຶກອົບຮົບສະເພາະ ເຊັ່ນ: ພະນັກງານຂອງໜ່ວຍງານລ້ຽງສັດ ຫຼື ສັດຕະວະແພດ, ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ, ລວມທັງພະນັກງານຂອງອົງການຈັດຕັ້ງທີ່ເຄື່ອນໄຫວວຽກງານສັດປ່າ ສຳລັບ 2 ຄົນ ໃນການເກັບຕົວຢ່າງ ຫຼື ຊາກສັດ ມີດັ່ງນີ້:

1) ແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ຕາມເອກະສານຊ້ອນທ້າຍ 01 ຈຳນວນ 1 ຊຸດ;

2) ແບບພິມສໍາລັບການບັນທຶກ ການເກັບຕົວຢ່າງ ຕາມເອກະສານຊ້ອນທ້າຍ 02 ຈໍານວນ 1 ຊຸດ;
3) ແບບພິມສໍາລັບການບັນທຶກການຜ່າຊາກສັດປ່າ ຕາມເອກະສານຊ້ອນທ້າຍ 03 ຈໍານວນ 1 ຊຸດ;
4) ເຄື່ອງຈັບຈຸດພິກັດ (GPS) 1 ເຄື່ອງ;
5) ກ້ອງຖ່າຍຮູບ ຫຼື ມືຖືທີ່ສາມາດຖ່າຍຮູບໄດ້ 1 ເຄື່ອງ;
6) ຊຸດປ້ອງກັນຕົນເອງຄົບຊຸດສໍາລັບ 2 ຄົນ ປະກອບມີ: ຖົງມື ຄົນລະ 2 ຄູ່, ຜ້າອັດປາກ-ດັງ N95 2 ອັນ, ແວ່ນປ້ອງກັນຕາ (ແວ່ນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ) 2 ອັນ, ຜ້າຢາງກັນເປື້ອນ 2 ອັນ ແລະ ຖົງຫຸ້ມເກີບ ຫຼື ເກີບໂບກ 2 ຄູ່;
7) ມີດຕັດ ຫຼື ມີດ 1 ດວງ;
8) ສະວັບ (Swab) 2 ກ້ານ;
9) ຫຼອດຖ່າຍໂອ (cryovial) ສໍາລັບໃສ່ຕົວຢ່າງ ຂະໜາດ 2 ມລ (ຫຼອດເປົ່າ, ຫຼອດບັນຈຸ RNA later ຫຼື ສານເກັບຕົວຢ່າງອື່ນທີ່ຄ້າຍຄືກັນ ແລະ ຫຼອດນໍ້າລ້ຽງເຊື້ອ VTM) ຈໍານວນ 2 ຫຼອດ;
10) ຫຼອດເປົ່າໃຫຍ່ 1 ຫຼອດ;
11) ກັບບັນຈຸຫຼອດຕົວຢ່າງສະເພາະ 1 ກັບ;
12) ແຜ່ນຕິດໝາຍຫຼອດຕົວຢ່າງ ແລະ ບິກເຟີດກັນນໍ້າ “Permanent Marker” ແລະ ບິກຂຽນ 1 ກ້ານ;
13) ຊຸດອຸປະກອນຜ່າຊາກສັດປ່າ 1 ຊຸດ;
14) ຖົງຢາງຊິບລ໋ອກ ທີ່ສາມາດບັນຈຸສັດປ່າຂະໜາດນ້ອຍ ຫາ ກາງ 3 ຖົງ;
15) ເຫຼົ້າ 70 % ຫຼື ນໍ້າຢາຂ້າເຊື້ອ;
16) ນໍ້າຢາລ້າງມື ຫຼື ສະບູ ແລະ ນໍ້າ;
17) ຖົງຢາງໃສ່ສິ່ງເສດເຫຼືອສະເພາະທາງການແພດ 1 ຖົງ;
18) ເມັດຊີລິກາ ເພື່ອດູດຄວາມຊຸ່ມ 1 ຖົງ.

### 1.6 ຂັ້ນຕອນການປະຕິບັດໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ

ການປະຕິບັດໃນເວລາພົບເຫັນສັດປ່າເຈັບ ຫຼື ຕາຍ ມີ 05 ຂັ້ນຕອນ ດັ່ງນີ້:

**ຂັ້ນຕອນທີ 1: ບັນທຶກເຫດການ**

1) ບັນທຶກຂໍ້ມູນຕ່າງໆກ່ຽວກັບເຫດການລົງໃສ່ ແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍຕາມເອກະສານຊ້ອນທ້າຍ 01;
2) ຖ່າຍຮູບສັດປ່າ ແລະ ພື້ນທີ່ອ້ອມຮອບເຫດການ;
3) ສອບຖາມຂໍ້ມູນເພີ່ມເຕີມຈາກຜູ້ທີ່ອາດຮູ້ເຫັນເຫດການ ຫຼື ກ່ຽວຂ້ອງກັບການຄົ້ນພົບເຫດການ;

ສໍາລັບ ໜ່ວຍກວດກາລາດຕະເວນ ຫຼື ຜູ້ທີ່ຜ່ານການຝຶກອົບຮົມ ຖ້າພົບເຫັນເຫດການໃນຂະນະກວດກາລາດຕະເວນຢູ່ໃນປ່າ, ຫຼັງຈາກບັນທຶກຂໍ້ມູນເຫດການແລ້ວ, ຖ້າມີຊຸດອຸປະກອນເກັບຕົວຢ່າງ ແລະ ມີຄວາມປອດໄພໃນການຈັດຕັ້ງປະຕິບັດ ແມ່ນໃຫ້ປະຕິບັດຕາມ ຂັ້ນຕອນທີ 03 ການເກັບຕົວຢ່າງ ແລະ ຊາກສັດປ່າ, ຈາກນັ້ນໃຫ້ແຈ້ງເຫດການ ຫາ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ຕາມພາຍຫຼັງ.

**ຂັ້ນຕອນທີ 2: ລາຍງານເຫດການ**

**1) ເຫດການທີ່ຕ້ອງລາຍງານ**

ລາຍງານທຸກກໍລະນີການພົບເຫັນສັດປ່າເຈັບ ຫຼື ມີພຶດຕິກໍາຜິດປົກກະຕິ ຫຼື ສັດປ່າຕາຍ ໂດຍບໍ່ຮູ້ສາເຫດ. ການລາຍງານບໍ່ລວມເອົາເຫດການພົບສັດປ່າຕາຍຈາກການຖືກລ່າ, ຖືກແຮ້ວ ຫຼື ອຸບັດຕິເຫດ.

2) **ວິທີການລາຍງານ** (ເບິ່ງສາຍການລາຍງານຢູ່ ໂຄງຮ່າງເຄືອຂ່າຍສາຍການລາຍງານ ການພົບເຫັນເຫດການສັດປ່າເຈັບ ແລະ ຕາຍ).

**ກ. ຜູ້ພົບເຫັນເຫດການແມ່ນ ພະນັກງານຂອງໜ່ວຍງານຈັດຕັ້ງປະຕິບັດຂອງລັດ**

ເມື່ອພົບເຫັນ ຫຼື ໄດ້ຮັບການລາຍງານເຫດການສັດປ່າເຈັບ ຫຼື ຕາຍ ບຸກຄົນດັ່ງກ່າວຈະຕ້ອງລາຍງານເຫດການ ຫາ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ຫຼັງຈາກນັ້ນ, ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈະຕ້ອງດຳເນີນການ ດັ່ງນີ້:

- ຊີ້ນຳພະນັກງານຂອງໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ ແລະ ໜ່ວຍງານກ່ຽວຂ້ອງຂັ້ນເມືອງລົງກວດກາ ແລະ ດຳເນີນການ ໂຕ້ຕອບເບື້ອງຕົ້ນ, ສືບຄົ້ນ, ບັນທຶກຂໍ້ມູນໃສ່ແບບພິມ ຕາມເອກະສານຊ້ອນທ້າຍ 01 ບັນທຶກເຫດການສັດປ່າເຈັບ ແລະ ຕາຍ ແລະ ໃຫ້ປະຕິບັດຕາມ ຂັ້ນຕອນທີ 3 ການເກັບຕົວຢ່າງ ແລະ ຊາກສັດປ່າ;
- ໃນກໍລະນີສິ່ງໄສ ຫຼື ເຫດການທີ່ໜ້າເປັນຫ່ວງ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃຫ້ປະຕິບັດ ດັ່ງນີ້:
  - ລາຍງານຫາ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ນະຄອນຫຼວງ ໂດຍໃຫ້ຄັດຕິດແບບພິມບັນທຶກເຫດການສັດປ່າເຈັບ ແລະ ຕາຍ ຕາມເອກະສານຊ້ອນທ້າຍ 01;
  - ສົມທົບ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ນະຄອນຫຼວງ (ຂະແໜງລ້ຽງສັດ ແລະ ການປະມົງ ແລະ ໜ່ວຍງານກ່ຽວຂ້ອງຂັ້ນແຂວງ) ເພື່ອດຳເນີນການໂຕ້ຕອບ, ສືບຄົ້ນ, ເກັບຂໍ້ມູນ ແລະ ເກັບຕົວຢ່າງ ແລະ ຊາກສັດ ໂດຍປະຕິບັດຕາມ ຂັ້ນຕອນທີ 3 ການເກັບຕົວຢ່າງ ແລະ ຊາກສັດປ່າ;
  - ຜູ້ດຳເນີນການໂຕ້ຕອບເຫດການ ຈະຕ້ອງລາຍງານເຫດການ ແລະ ສົ່ງຕົວຢ່າງ ແລະ ຊາກສັດປ່າ ຫາ ສູນວິໄຈພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ ໂດຍໃຫ້ຄັດຕິດແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ຕາມເອກະສານຊ້ອນທ້າຍ 01 ແລະ ແບບພິມບັນທຶກການເກັບຕົວຢ່າງຕາມເອກະສານຊ້ອນທ້າຍ 02 ໄປພ້ອມທຸກຄັ້ງ.

**ຂ. ຜູ້ພົບເຫັນເຫດການ ແມ່ນພະນັກງານຂອງບັນດາອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ**

ພະນັກງານຂອງບັນດາອົງການຈັດຕັ້ງອື່ນ ທີ່ເຄື່ອນໄຫວວຽກງານສັດປ່າ (ບັນດາອົງການອະນຸລັກສັດປ່າ ແລະ ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ) ແລະ ຜູ້ປະກອບການກ່ຽວກັບສັດປ່າ (ສວນສັດ, ຟາມສັດປ່າ, ສູນຂະຫຍາຍພັນສັດປ່າ, ໂຮງລະຄອນສັດ) ຢູ່ ສປປ ລາວ ເມື່ອພົບເຫັນເຫດການສັດປ່າເຈັບ ຫຼື ຕາຍ ໂດຍບໍ່ຮູ້ສາເຫດຢູ່ໃນເຂດພື້ນທີ່ຄວາມຮັບຜິດຊອບຂອງຕົນ ຈະຕ້ອງປະຕິບັດ ດັ່ງນີ້:

- ດຳເນີນການໂຕ້ຕອບເບື້ອງຕົ້ນ, ສືບຄົ້ນ ແລະ ເກັບຕົວຢ່າງ ແລະ ຊາກສັດປ່າ ດ້ວຍຕົນເອງ ແລະ ໃຫ້ບັນທຶກຂໍ້ມູນເຫດການລົງໃສ່ແບບພິມບັນທຶກ ຕາມເອກະສານຊ້ອນທ້າຍ 01 ແລະ ທຳການເກັບຕົວຢ່າງ ຫຼື ຊາກສັດ ໂດຍປະຕິບັດຕາມຫຼັກການທີ່ລະບຸໄວ້ຢູ່ ຂັ້ນຕອນທີ 3 ການເກັບຕົວຢ່າງ ແລະ ຊາກສັດປ່າ ແລະ ບັນທຶກຂໍ້ມູນຕົວຢ່າງທີ່ເກັບໃສ່ແບບພິມບັນທຶກ ຕາມເອກະສານຊ້ອຍທ້າຍ 02; ຖ້າມີການດຳເນີນການຜ່າຊາກສັດປ່າ ໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນ ເອກະສານຊ້ອນທ້າຍ 03. ແຕ່ຖ້າຫາກບໍ່ສາມາດປະຕິບັດໄດ້ ໃຫ້ແຈ້ງຫາໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ ທີ່ຢູ່ໃກ້ທີ່ສຸດລົງມາເກັບຕົວຢ່າງ;
- ໃຫ້ລາຍງານເຫດການ ຫາ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຫຼື ນະຄອນ ເພື່ອຮັບຊາບ ໂດຍຄັດຕິດແບບພິມບັນທຶກເຫດການຕາມ ເອກະສານຊ້ອນທ້າຍ 01;

- ພ້ອມນັ້ນ ໃຫ້ລາຍງານເຫດການ ແລະ ສົ່ງຕົວຢ່າງ ຫຼື ຊາກສັດ ຫາ ສູນວິໄຈພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ ໂດຍຄັດຕິດ ແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ຕາມເອກະສານຊ້ອນທ້າຍ 01 ແລະ ແບບພິມບັນທຶກການເກັບຕົວຢ່າງ ຕາມເອກະສານຊ້ອນທ້າຍ 02 ໄປພ້ອມ.

**<u>ຂໍ້ຄວນເອົາໃຈໃສ່:</u>**

- ໃນກໍລະນີ, ບຸກຄົນ ຫຼື ສະຖານປະກອບການລ້ຽງສັດປ່າໃດໜຶ່ງ ພົບເຫັນເຫດການສັດປ່າເຈັບ ຫຼື ຕາຍ ທີ່ສົງໄສວ່າຜິດປົກກະຕິ, ຕ້ອງລາຍງານເຫດການຮີບດ່ວນ ໄປຕາມເຄືອຂ່າຍສາຍການລາຍງານທີ່ລະບຸຢູ່ ຂໍ້ 2) ວິທີການລາຍງານ ກ່ອນຈະດໍາເນີນການຂັ້ນຕອນທີ 3;
- ໃນກໍລະນີ, ພົບເຫັນເຫດການສັດປ່າເຈັບ ຫຼື ຕາຍ ເປັນຈໍານວນຫຼວງຫຼາຍ ທີ່ມີການສົງໄສ ເປັນການລະບາດພະຍາດຮ້າຍແຮງໃດໜຶ່ງ ຕ້ອງລາຍງານຮີບດ່ວນຫາ ກົມລ້ຽງສັດ ແລະ ການປະມົງ ເພື່ອດໍາເນີນການສືບຄົ້ນ, ເກັບຕົວຢ່າງ ຫຼື ຊາກສັດ ແລະ ໃຫ້ການສະໜັບສະໜູນວິຊາການ ແກ່ໜ່ວຍງານທີ່ກ່ຽວຂ້ອງ.

### ຄ. ຜູ້ພົບເຫັນເຫດການ ບຸກຄົນທົ່ວໄປ

ບຸກຄົນທົ່ວໄປ ຖ້າພົບເຫັນສັດປ່າເຈັບ ຫຼື ຕາຍໂດຍບໍ່ຮູ້ສາເຫດ ຕ້ອງປະຕິບັດ ດັ່ງນີ້:

- ລາຍງານ ຫາ ນາຍບ້ານ, ຄະນະບ້ານ, ສັດຕະວະແພດບ້ານ ຫຼື ຈູງານປ່າໄມ້ບ້ານ;
- ນາຍບ້ານ, ຄະນະບ້ານ, ສັດຕະວະແພດບ້ານ ຫຼື ຈູງານປ່າໄມ້ບ້ານ ຈະຕ້ອງລາຍງານຫາ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ;
- ຜູ້ທີ່ພົບເຫັນເຫດການ ຕ້ອງນໍາພາພະນັກງານທີ່ກ່ຽວຂ້ອງຂັ້ນເມືອງ ໄປຫາຈຸດເກີດເຫດ ເພື່ອເກັບຂໍ້ມູນ, ເກັບຕົວຢ່າງ ແລະ ຊາກສັດປ່າ;
- ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ສົ່ງຕົວຢ່າງ ແລະ ຊາກສັດ ແລະ ລາຍງານເຫດການ ໂດຍໃຫ້ປະຕິບັດຕາມຂັ້ນຕອນການລາຍງານທີ່ລະບຸໄວ້ຢູ່ ຂັ້ນຕອນທີ 2 ຂໍ້ທີ 2) ວິທີການລາຍງານ.

## ໂຄງຮ່າງເຄືອຂ່າຍການເຝົ້າລະວັງພະຍາດສັດປ່າ ແລະ ສາຍການລາຍງານ ແລະ ໂຕ້ຕອບ



**ຂັ້ນຕອນທີ 3: ການເກັບຕົວຢ່າງ ແລະ ຊາກສັດປ່າ**

**1) ຜູ້ດໍາເນີນການເກັບຕົວຢ່າງ ແລະ ຊາກສັດປ່າ**

ຜູ້ຈະດໍາເນີນການເກັບຕົວຢ່າງ ແລະ ຊາກສັດປ່າ ຕ້ອງແມ່ນພະນັກງານຂອງໜ່ວຍງານຈັດຕັ້ງປະຕິບັດ (ທີ່ລະບຸໄວ້ໃນຂໍ້ 1.3 ໜ່ວຍງານຈັດຕັ້ງປະຕິບັດ), ທີ່ຜ່ານການຝຶກອົບຮົມກ່ຽວກັບການເກັບຕົວຢ່າງ (ສັດລ້ຽງ ຫຼື ສັດປ່າ) ມາແລ້ວ ຈຶ່ງຈະສາມາດດໍາເນີນການເກັບຕົວຢ່າງ ແລະ ຊາກສັດປ່າໄດ້.

**2) ຫຼັກການປະຕິບັດການເກັບຕົວຢ່າງ ແລະ ຊາກສັດປ່າ**

ຫຼັກການປະຕິບັດການເກັບຕົວຢ່າງ ແລະ ຊາກສັດປ່າ ຕ້ອງປະຕິບັດຕາມຫຼັກການຄວາມປອດໄພ ດ້ານຊີວະພາບຕໍ່ຕົນເອງ ແລະ ສິ່ງແວດລ້ອມ. ສວມໃສ່ຊຸດປ້ອງກັນຕົນເອງຢ່າງຖືກຕ້ອງເໝາະສົມຕະຫຼອດເວລາ ຂະນະທໍາການເກັບຕົວຢ່າງ ແລະ ຊາກສັດ ຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ 04. ຖ້າຫາກບໍ່ມີຄວາມປອດໄພ ແມ່ນບໍ່ໃຫ້ມີການເກັບຕົວຢ່າງ ຫຼື ເກັບຊາກສັດ, ໃຫ້ພຽງແຕ່ບັນທຶກຂໍ້ມູນໃສ່ແບບພິມ ຕາມເອກະສານຊ້ອນທ້າຍ 01 ແລະ ລາຍງານຕາມສາຍລາຍງານຂອງຕົນ ຕາມທີ່ລະບຸໄວ້ໃນຂັ້ນຕອນທີ 2 ວິທີການລາຍງານ.

**ກ. ຫຼັກການປະຕິບັດການເກັບຕົວຢ່າງສັດປ່າ**

❖ **ສັດປ່າຍັງມີຊີວິດ ໃຫ້ເກັບ:**

- ຕົວຢ່າງສະວັບຜົ້ງປາກ;
- ຕົວຢ່າງສະວັບທາງຮູທະວານ ຫຼື ອາຈົມ;
- ຕົວຢ່າງນໍ້າຍ່ຽວ ຖ້າເປັນໄປໄດ້.

❖ **ສັດປ່າຕາຍ (ຍົກເວັ້ນກໍລະນີສົງໄສ ພະຍາດໄຂ້ເລືອດດໍາ) ໃຫ້ເກັບ:**

- ຕົວຢ່າງສະວັບຜົ້ງປາກ;
- ຕົວຢ່າງສະວັບທາງຮູທະວານ ຫຼື ອາຈົມ;
- ຕົວຢ່າງເລືອດ ຢອດໃສ່ເຈ້ຍ Filter Paper (ຖ້າມີເຈ້ຍ Filter Paper ແລະ ສັດປ່ານັ້ນມີຮອຍບາດແຜ ແລະ ມີເລືອດໄຫຼອອກມາ).

**ໝາຍເຫດ:** ຖ້າສັດປ່າທີ່ຕາຍມີຂະໜາດນ້ອຍ ໃຫ້ເກັບຕົວຢ່າງຕາມລາຍການທີ່ລະບຸໄວ້ໃນຂໍ້ ກ. ຫຼັກການປະຕິບັດການເກັບຕົວຢ່າງສັດປ່າ ໝາຍດາວ (❖) ທີ 2 ແລະ ຖ້າເປັນໄປໄດ້ ໃຫ້ເກັບເອົາຊາກສັດປ່າໝົດທັງໂຕ ໂດຍຕ້ອງປະຕິບັດຕາມຫຼັກການ ທີ່ລະບຸໄວ້ໃນຂໍ້ ຂ. ຫຼັກການປະຕິບັດ ການເກັບຊາກສັດປ່າ ແລະ ໃຫ້ນໍາເອົາຊາກສັດປ່າມາເກັບຮັກສາໄວ້ໃນຄວາມເຢັນຢູ່ຫ້ອງການໃຫ້ໄວທີ່ສຸດ.

**ຕາຕະລາງ 1:** ຫຼັກການປະຕິບັດ ການເກັບຕົວຢ່າງ

| ລາຍການຕົວຢ່າງ | ຫຼັກການປະຕິບັດ | ຮູບພາບປະກອບ |
|---|---|---|
| *ຕົວຢ່າງສະວັບຜົ້ງປາກ Oral swab (“OS”)* | *ຖ້າມີຄວາມປອດໄພ ໃນການປະຕິບັດ...*<br>1. ໃຊ້ສະວັບທີ່ອະເຊື້ອ ຖູເອົານໍ້າລາຍບໍລິເວນເພດານຮູຄໍ;<br>2. ເອົາສະວັບທີ່ຖູແລ້ວໃສ່ໃນຫຼອດຖ່າຍໂອ (cryovial);<br>3. ໃຊ້ມີດຕັດທີ່ສະອາດ ຕັດຫົວສະວັບລົງໃນຫຼອດ; | |

| | | |
|---|---|---|
| | 4. ໝາຍຫຼອດຕົວຢ່າງດ້ວຍ "OS", ຖ້າໃນຫຼອດບັນຈຸທາດແຫຼວ ໃຫ້ຂຽນຊື່ທາດແຫຼວນັ້ນນຳ (ຕົວຢ່າງ: ຖ້າຫຼອດບັນຈຸ RNA later ໃຫ້ໝາຍຫຼອດ "OS-RNA";<br>5. ເອົາຫຼອດຕົວຢ່າງນັ້ນ ເກັບໄວ້ໃນຖົງຊຸດອຸປະກອນເກັບຕົວຢ່າງຄືນ.<br>**ອີກວິທີໜຶ່ງ**, ຖ້າທ່ານສັງເກດເຫັນວ່າສັດປ່າກຳລັງຄ້ຽວອາຫານ, ເວລາມັນຄາຍອອກ ທ່ານສາມາດໃຊ້ສະວັບຖູເອົານ້ຳລາຍ ບໍລິເວນມັນຄ້ຽວ ແລ້ວເອົາໃສ່ໃນຫຼອດຖ່າຍໂອ ແລະ ໝາຍຫຼອດຕົວຢ່າງຕາມຮູບແບບດຽວກັນ. |  |
| *ຕົວຢ່າງສະວັບຮູທະວານ Rectal/cloacal swab ("RS")* | *ຖ້າມີຄວາມປອດໄພ ໃນການປະຕິບັດ...*<br>1. ນຳໃຊ້ສະວັບທີ່ອະເຊື້ອ ສອດເຂົ້າຮູທະວານ ແລະ ຖູເອົານ້ຳເມືອກ ຫຼື ເອົາອາຈົມເລີຍ ຖ້າມີ;<br>2. ເອົາສະວັບທີ່ຖູແລ້ວ ຫຼື ອາຈົມ ໃສ່ໃນຫຼອດຖ່າຍໂອ;<br>3. ໃຊ້ມີດຕັດທີ່ສະອາດ ຕັດຫົວສະວັບລົງໃນຫຼອດ;<br>4. ໝາຍຫຼອດຕົວຢ່າງດ້ວຍ "RS", ຖ້າໃນຫຼອດບັນຈຸທາດແຫຼວ ໃຫ້ຂຽນຊື່ທາດແຫຼວນັ້ນນຳ (ຕົວຢ່າງ: ຖ້າຫຼອດບັນຈຸ VTM ໃຫ້ໝາຍຫຼອດ "RS-VTM";<br>5. ເອົາຫຼອດຕົວຢ່າງນັ້ນ ເກັບໄວ້ໃນຖົງຊຸດອຸປະກອນເກັບຕົວຢ່າງຄືນ. |  |
| *ຕົວຢ່າງອາຈົມໃໝ່ Fresh Feces ("FF") ຫຼື ອາຈົມແຫ້ງ Dry Feces ("DF"):* | 1. ຖ້າເຫັນອາຈົມສັດຢູ່ພື້ນກົງ ຫຼື ພື້ນທີ່ອ້ອມຮອບສັດ, ນຳໃຊ້ເຫຼັກຄີບທີ່ສະອາດ-ອະເຊື້ອ ຫຼື ຖົງມືທີ່ສະອາດ ເກັບເອົາອາຈົມນັ້ນ;<br>2. ເອົາອາຈົມໃສ່ໃນຫຼອດຖ່າຍໂອ (ຂະໜາດຕົວຢ່າງປະມານເມັດໝາກຖົ່ວເຫຼືອງ);<br>3. ໝາຍຫຼອດຕົວຢ່າງດ້ວຍ "FF" ຫຼື "DF", ຖ້າໃນຫຼອດບັນຈຸທາດແຫຼວ ໃຫ້ຂຽນຊື່ ທາດແຫຼວນັ້ນນຳ (ຕົວຢ່າງ: ຖ້າຫຼອດບັນຈຸ RNA later ໃຫ້ໝາຍຫຼອດ "FF-RNA";<br>4. ເອົາຫຼອດຕົວຢ່າງນັ້ນ ເກັບໄວ້ໃນຖົງຊຸດອຸປະກອນເກັບຕົວຢ່າງຄືນ.<br>ຖ້າອາຈົມຖືກຖ່າຍອອກໃນຂະນະທີ່ມີການຈັບສັດປ່ານັ້ນ, ໃຫ້ເກັບເອົາອາຈົມນັ້ນເປັນຕົວຢ່າງ. |  |
| *ຕົວຢ່າງນ້ຳຍ່ຽວ Urine ("U"):* | 1. ຖ້າກຳລະນີສັດປ່າຢູ່ໃນກົງ, ໃຫ້ກວດກາເບິ່ງນ້ຳຍ່ຽວຢູ່ຖາດຮອງກົງ; ອີກວິທີໜຶ່ງ ວາງແຜ່ນຢາງທີ່ສະອາດໄວ້ກ້ອງກົງສັດ, ປະໄວ້ນັ້ນຈົນກ່ວາສັດຍ່ຽວ;<br>2. ໃຊ້ຫຼອດດູດອະເຊື້ອ (ໃຊ້ຄັ້ງດຽວແລ້ວຖິ້ມ) ເພື່ອດູດເອົານ້ຳຍ່ຽວ;<br>3. ເອົານ້ຳຍ່ຽວທີ່ເກັບໄດ້ ໃສ່ໃນຫຼອດຖ່າຍໂອ; |  |

| | | |
|---|---|---|
| | 4. ໝາຍຫຼອດຕົວຢ່າງດ້ວຍ "U", ຖ້າໃນຫຼອດບັນຈຸທາດແຫຼວໃດໜຶ່ງ ໃຫ້ຂຽນຊື່ທາດແຫຼວນັ້ນນຳ (ຕົວຢ່າງ: ຖ້າຫຼອດບັນຈຸ RNA later ໃຫ້ໝາຍຫຼອດ "U-RNA";<br>5. ເອົາຫຼອດຕົວຢ່າງນັ້ນ ເກັບໄວ້ໃນຖົງຊຸດອຸປະກອນເກັບຕົວຢ່າງຄືນ. | |
| *ຕົວຢ່າງເລືອດ ດ້ວຍເຈ້ຍຕອງ Filter paper (ຖ້າສັດປ່າມີເລືອດອອກ):* | 1. ດູດເອົາເລືອດດ້ວຍ ຫຼອດດູດ pipette ທີ່ອະເຊື້ອ;<br>2. ປອດເລືອດຈາກ pipette ໃສ່ໃນວົງມົນຂອງເຈ້ຍ Filter paper ຢ່າງຕ່ຳໃຫ້ໄດ້ 2 ວົງມົນ;<br>3. ປະແຜ່ນປອດເລືອດໃນອາກາດທີ່ໂລ່ງ ຢ່າງຕ່ຳສອງຊົ່ວໂມງຫຼັງການເກັບ ເພື່ອໃຫ້ມັນແຫ້ງ;<br>4. ເວລາມັນແຫ້ງແລ້ວ ໃຫ້ເອົາໃສ່ໃນຖົງຊິບລ໋ອກທີ່ມີ ເມັດດູດຄວາມຊຸ່ມ;<br>5. ເອົາແຜ່ນເກັບຕົວຢ່າງເລືອດ ເກັບໄວ້ໃນຖົງຊຸດອຸປະກອນເກັບຕົວຢ່າງຄືນ. |  |

❖ **ຊາກສັດປ່າເຫຼືອແຕ່ກະດູກ**: ການກວດຫາເຊື້ອພະຍາດຈາກຊາກກະດູກຂອງສັດປ່າ ໂອກາດທີ່ຈະພົບເຊື້ອແມ່ນເປັນໄປໄດ້ຍາກ. ແຕ່ໃນບາງເຊື້ອພະຍາດ ເຊັ່ນ: ເຊື້ອໄວຣັດອະຫິວາໝູອາຟຣິກາ (ASF) ແມ່ນມີຄວາມທົນທານ ຊຶ່ງສາມາດມີຊີວິດຢູ່ໃນອອກແອກກະດູກ ແລະ ໃນສະພາບແວດລ້ອມທົ່ວໄປໄດ້ເປັນເວລາດົນ. ໃນກໍລະນີນີ້ ໃຫ້ເກັບເອົາກະດູກຂາສ່ວນແຄ່ງ (ກະດູກຂາຕັ້ງ) ຈາກກໍລະນີທີ່ເປັນຊາກໝູປ່າເທົ່ານັ້ນ ໂດຍປະຕິບັດຕາມຫຼັກການ ທີ່ລະບຸໄວ້ຢູ່ຂໍ້ ຂ. ການປະຕິບັດ ການເກັບຊາກສັດປ່າ ແລະ ນຳກັບມາຫ້ອງການ ເພື່ອເກັບໄວ້ຄວາມເຢັນໃຫ້ໄວທີ່ສຸດ.

❖ **ສົງໄສເປັນພະຍາດໄຂ້ເລືອດດຳ:** ການເກັບຕົວຢ່າງກໍລະນີນີ້ ຈະຕ້ອງແມ່ນຜູ້ທີ່ໄດ້ຮັບການຝຶກອົບຮົມເປັນຜູ້ຊຳນານການເຮັດວຽກກັບສັດເທົ່ານັ້ນ ແລະ ຕ້ອງປະຕິບັດຕາມຫຼັກການເກັບຕົວຢ່າງທີ່ກຳນົດໃນ *"ຄູ່ມືສຳລັບການສອບສວນ ແລະ ໂຕ້ຕອບການລະບາດຮ່ວມກັນ ຂອງພະຍາດໄຂ້ເລືອດດຳ"* ລະຫວ່າງກະຊວງສາທາລະນະສຸກ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເຄັ່ງຄັດ; ຖ້າບໍ່ໄດ້ຜ່ານການຝຶກອົບຮົມສະເພາະ, ຫ້າມສຳພັດຈັບບາຍຊາກສັດດັ່ງກ່າວ ແລະ ໃຫ້ລາຍງານຮີບດ່ວນຫາ ຫົວໜ້າສາຍງານຂອງທ່ານ ຫຼື ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

❖ **ສົງໄສຕາຍຍ້ອນສານພິດ:** ນອກຈາກການເກັບຕົວຢ່າງຈາກສັດປ່າ ຕາມລາຍການທີ່ລະບຸຢູ່ຂໍ້ ກ. ຫຼັກການປະຕິບັດການເກັບຕົວຢ່າງສັດປ່າ ໝາຍດາວ (❖) ທີ 2, ໃຫ້ເກັບຕົວຢ່າງສິ່ງແວດລ້ອມອ້ອມຂ້າງ ບໍລິເວນພົບສັດປ່າຕາຍເພີ່ມຕື່ມ ເຊັ່ນ: ນ້ຳ, ເຫຍື່ອ ຫຼື ອາຫານຂອງສັດ ໃສ່ໃນຫຼອດເປົ່າທີ່ອະເຊື້ອ.

❖ **ພົບສັດປ່າຕາຍເປັນຈຳນວນຫຼາຍ**: ຄວນເຮັດການຜ່າຊາກສັດປ່າຢູ່ພາກສະໜາມ ທຸກໂຕ ຫຼື ສຸ່ມເລືອກ ໂດຍພະນັກງານໜ່ວຍງານລ້ຽງສັດ ຫຼື ສັດຕະວະແພດ ຫຼື ບຸກຄົນທີ່ໄດ້ຜ່ານການຝຶກອົບຮົມການຜ່າຊາກເປັນຜູ້ປະຕິບັດ ແລະ ຕ້ອງປະຕິບັດຕາມຫຼັກການທີ່ກຳນົດໄວ້ໃນ ເອກະສານຊ້ອນທ້າຍ 03.

**ຈາກນັ້ນ**:

1. ຕ້ອງຮັບປະກັນວ່າ ຊຸດອຸປະກອນເກັບຕົວຢ່າງ 1 ຊຸດ ແມ່ນໃຊ້ສຳລັບບັນຈຸຕົວຢ່າງ ຫຼື ຊາກສັດ 1 ໂຕ ເທົ່ານັ້ນ;
2. ເອົາຫຼອດຕົວຢ່າງທັງໝົດ ບັນຈຸໃສ່ໃນຖົງຢາງນ້ອຍ ພ້ອມກັບວັດຖຸດູດຄວາມຊຸ່ມຊື່ນ ເຊັ່ນ: ສຳລີ, ເຈ້ຍທິດຊູໜາ... ແລ້ວອັດປາກຖົງຢາງ;
3. ເອົາຖົງຕົວຢ່າງນັ້ນ ບັນຈຸໃນຖົງຢາງຊັ້ນທີສອງຕື່ມອີກ ຫຼື ໃສ່ໃນຖົງເກັບຊາກສັດຊັ້ນທີສາມ ຫຼື ຊັ້ນສຸດທ້າຍ ຖ້າກໍລະນີ ມີການເກັບຊາກສັດພ້ອມ;
4. ຕື່ມຂໍ້ມູນຕົວຢ່າງໃສ່ "ແບບພິມບັນທຶກການເກັບຕົວຢ່າງຈາກສັດປ່າ" ເອກະສານຊ້ອນທ້າຍ 02;
5. ເອົາແບບພິມບັນທຶກ ເອກະສານຊ້ອນທ້າຍ 01 ແລະ 02 ໃສ່ໃນຖົງຊັ້ນນອກສຸດ ຂອງຖົງບັນຈຸຕົວຢ່າງ ຫຼື ຊາກສັດ;
6. ນຳຖົງທີ່ບັນຈຸຫຼອດຕົວຢ່າງ ຫຼື ຊາກສັດ ໄປເກັບໄວ້ໃນຕູ້ແຊ່ ໃຫ້ໄວທີ່ສຸດ.

**ຂ. ຫຼັກການປະຕິບັດ ການເກັບຊາກສັດປ່າ**

1. ກ່ອນຈະດຳເນີນການເກັບຊາກສັດ ໃຫ້ໃສ່ອຸປະກອນປ້ອງກັນຕົນເອງ, ໂດຍປະຕິບັດຕາມວິທີແນະນຳສວມໃສ່ ອຸປະກອນປ້ອງກັນຕົນເອງ ຂັ້ນພື້ນຖານ (PPE) ຕາມ ເອກະສານຊ້ອນທ້າຍ 04;
2. ຖ້າເປັນເຫດການຊາກສັດປ່າຫຼາຍໂຕ, ແຕ່ລະໂຕຕ້ອງຖືກບັນຈຸແຍກຖົງກັນ;
3. ປີ້ນຖົງຢາງດ້ານໃນກວມເອົາມືຂອງທ່ານ (ຮູບທີ 1);
4. ຈາກນັ້ນ, ໄປຈັບເອົາຊາກສັດປ່າ ແລ້ວປີ້ນຖົງຢາງກັບຄືນກວມເອົາຊາກສັດປ່າ (ຮູບທີ 2);
5. ມ້ວນຖົງຊາກສັດປ່ານັ້ນ ເພື່ອໄລ່ອາກາດອອກໃຫ້ໝົດ, ໂດຍໃຫ້ຫ່າງຈາກໂຕທ່ານ (ຮູບທີ 3);
6. ມັດປາກຖົງຢາງໃຫ້ແໜ້ນດ້ວຍເຊືອກ ແລະ ຕິດທັບປາກຖົງດ້ວຍສະກ່ອດ ຫຼື ບີບຊິບລ໋ອກອັດປາກຖົງ;
7. ເອົາຊາກສັດປ່າທີ່ຖືກບັນຈຸໃນຖົງຊັ້ນທີໜຶ່ງ ໃສ່ບັນຈຸໃນຖົງຢາງຊັ້ນທີສອງ ໂດຍປະຕິບັດຕາມຂັ້ນຕອນແຕ່ຂໍ້ທີ 3 ຫາ 6 ຄືນ (ຮູບທີ 4 ແລະ 5);
8. ເອົາຊາກສັດປ່າທີ່ບັນຈຸຢູ່ໃນຖົງຢາງສອງຊັ້ນ ໃສ່ໃນຖົງຢາງຊັ້ນທີ 3; ພ້ອມທັງເອົາ "ແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ແລະ ແບບພິມບັນທຶກ ການເກັບຕົວຢ່າງສັດປ່າ" ທີ່ຕື່ມຂໍ້ມູນຄົບຖ້ວນແລ້ວ ໃສ່ໃນຖົງຊາກສັດປ່າຊັ້ນທີ 3, ກໍ້-ມ້ວນຖົງໄລ່ອາກາດອອກ, ອັດປາກຖົງ (ຮູບທີ 6);
9. ຈັດສົ່ງຊາກສັດປ່າ ຫາ ສູນວິໄຈພະຍາດສັດ, ນະຄອນຫຼວງວຽງຈັນໃຫ້ໄວທີ່ສຸດ;
10. ຖ້າຊາກສັດປ່າ ຈຳເປັນຕ້ອງໄດ້ນຳສົ່ງຈາກບ່ອນເກັບ ຫາ ຫ້ອງການພາກສະໜາມ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃຫ້ພະຍາຍາມເກັບຮັກສາຊາກສັດປ່ານັ້ນໄວ້ບ່ອນເຢັນ ອາດຈະໃສ່ຖັງທີ່ບັນຈຸນ້ຳກ້ອນ ຫຼື ຖຸກນ້ຳແຊ່ແຂງ.




**ຂັ້ນຕອນທີ 4: ການທຳລາຍຊາກສັດປ່າ ແລະ ອຸປະກອນ (ອຸປະກອນໃຊ້ຄັ້ງດຽວ) ປ້ອງກັນຕົນເອງ**

**1) ການທຳລາຍຊາກສັດປ່າທີ່ພົບຢູ່ໃນທຳມະຊາດ**

ຫຼັກການທົ່ວໄປ ສຳລັບການທຳລາຍຊາກສັດປ່າ ທີ່ພົບຢູ່ໃນທຳມະຊາດ ແມ່ນບໍ່ຈຳເປັນຕ້ອງມີການທຳລາຍ ເພາະວ່າຊາກສັດຍັງມີຄວາມສຳຄັນຕໍ່ລະບົບນິເວດ ແລະ ການທຳລາຍຊາກສັດປ່າຢູ່ໃນທຳມະຊາດ ແມ່ນມີຄວາມຫຍຸ້ງຍາກ ແລະ ຂໍ້ຈຳກັດຫຼາຍຢ່າງ ກ່ຽວກັບ ສະພາບພື້ນທີ່, ຂະໜາດຂອງສັດປ່າ, ເຄື່ອງມືອຸປະກອນ, ແຮງງານ, ເວລາ ແລະ ອື່ນໆ. ສະນັ້ນ, ການທຳລາຍຊາກສັດປ່າທີ່ພົບຢູ່ໃນທຳມະຊາດ ຈຶ່ງບໍ່ສາມາດກຳນົດຫຼັກການປະຕິບັດທີ່ແນ່ນອນ ຫຼື ອາດບໍ່ມີຄວາມຈຳເປັນ ເວັ້ນເສຍແຕ່ກໍລະນີເກີດການລະບາດພະຍາດຮ້າຍແຮງໃດໜຶ່ງ ແລະ ຊາກສັດປ່ານັ້ນ ສາມາດທຳລາຍໄດ້ງ່າຍ ແລະ ມີຄວາມປອດໄພໃນການທຳລາຍ.

ການທຳລາຍຊາກສັດປ່າຢູ່ໃນທຳມະຊາດ ໃຫ້ເຜົາ, ຝັງ ຫຼື ເຮັດທັງສອງແບບຮ່ວມກັນ ອີງຕາມຄວາມເໝາະສົມແຕ່ລະກໍລະນີ.

**ອຸປະກອນພື້ນຖານສຳລັບການທຳລາຍຊາກສັດປ່າ ດ້ວຍວິທີການເຜົາ ແລະ ຝັງ ມີ ດັ່ງນີ້:**

- ຊຸດອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ສຳລັບ 2 ຄົນປະກອບມີ: ຜ້າອັດປາກ-ດັງ N95, ຖົງມື, ແວ່ນປ້ອງກັນຕາ, ເກີບໂບກ ແລະ ເຈວລ້າງມືຂ້າເຊື້ອເປັນຕົ້ນ;
- ພ້າ, ຈົກ, ຊວ້ານ;
- ຟືນ;
- ນ້ຳມັນກາຊວນ (ຖ້າຈຳເປັນ);
- ກັບໄຟ;
- ຢາຂ້າເຊື້ອສຳລັບເຄື່ອງມືອຸປະກອນ.

**ກ. ການທຳລາຍຊາກສັດປ່າ ດ້ວຍການເຜົາ**

ວິທີການທຳລາຍຊາກສັດປ່າດ້ວຍການເຜົາໃຫ້ປະຕິບັດ ດັ່ງນີ້:

***ການເຜົາຊາກສັດປ່າຂະໜາດນ້ອຍ:***

- ອະນາໄມພື້ນທີ່ອ້ອມຮອບບໍລິເວນທີ່ຈະທຳການເຜົາຊາກສັດປ່າ ກໍ່ກອງຟືນແຫ້ງທີ່ສາມາດຊອກໄດ້ໃນພື້ນທີ່ອ້ອມຮອບ ທັບຊ້ອນກັນເປັນຊັ້ນ ໃນປະລິມານທີ່ເໝາະສົມວ່າ ຈະສາມາດເຜົາຊາກສັດປ່າໃຫ້ໄໝ້ໝົດ;
- ສວມຊຸດອຸປະກອນປ້ອງກັນຕົນເອງ ກ່ອນການສຳຜັດກັບສັດປ່າ;
- ວາງຊາກສັດປ່າໃສ່ເທິງກອງຟືນ ແລະ ເອົາຟືນວາງທັບໃສ່ເທິງສັດປ່າຕື່ມ ຖ້າຈຳເປັນ;
- ຈູດໄຟເຜົາ (ອາດໃສ່ນໍ້າມັນກາຊວນຊ່ວຍໃນການເຜົາໄໝ້ ຖ້າຈຳເປັນ);
- ຖົ້ມຟືນໃສ່ກອງໄຟເພີ່ມຕື່ມ ຖ້າຈຳເປັນ;
- ຖອດຊຸດອຸປະກອນປ້ອງກັນຕົນເອງ (ຖົງມື ແລະ ຜ້າອັດປາກ-ດັງ N-95) ໃສ່ກອງໄຟດ້ວຍຄວາມລະມັດລະວັງ;
- ອະນາໄມຂ້າເຊື້ອມື ແລະ ອຸປະກອນ.

***ການເຜົາຊາກສັດປ່າຂະໜາດໃຫຍ່ ຫຼື ຊາກສັດປ່າເນົ່າເປື່ອຍ ບໍ່ສາມາດເຄື່ອນຍ້າຍໄດ້:***

- ສວມຊຸດອຸປະກອນປ້ອງກັນຕົນເອງ ກ່ອນການສຳຜັດກັບສັດປ່າ;
- ອະນາໄມພື້ນທີ່ອ້ອມຮອບບໍລິເວນຊາກສັດປ່າ;
- ກໍ່ກອງຟືນແຫ້ງທັບຊາກສັດປ່າ ໃນປະລິມານທີ່ເໝາະສົມວ່າ ຈະສາມາດເຜົາຊາກສັດໃຫ້ໄໝ້ໝົດ;
- ຈູດໄຟເຜົາ (ອາດໃສ່ນໍ້າມັນກາຊວນຊ່ວຍໃນການເຜົາໄໝ້ ຖ້າຈຳເປັນ);
- ຖົ້ມຟືນໃສ່ກອງໄຟເພີ່ມຕື່ມ ຖ້າຈຳເປັນ;
- ຖອດຊຸດອຸປະກອນປ້ອງກັນຕົນເອງ (ຖົງມື, ຜ້າອັດປາກ-ດັງ N-95, ຜ້າຢາງກັນເປື້ອນ) ໃສ່ກອງໄຟ ດ້ວຍຄວາມລະມັດລະວັງ;
- ອະນາໄມຂ້າເຊື້ອ ມື ແລະ ອຸປະກອນ.

**<u>ຂໍ້ຄວນພິຈາລະນາ ໃນການເຜົາຊາກສັດປ່າ ມີດັ່ງນີ້:</u>**

- ຜູ້ປະຕິບັດຕ້ອງຮັບປະກັນທາງດ້ານຊີວະພາບຕໍ່ຕົນເອງ ແລະ ສິ່ງແວດລ້ອມ;
- ມີຜູ້ເຝົ້າຕິດຕາມ ຈົນກວ່າຊາກສັດປ່າຖືກເຜົາໄໝ້ໂດຍສົມບູນ ແລະ ໄຟມອດ;
- ກໍລະນີການຝັງມີຂໍ້ຈຳກັດ ບໍ່ມີເຄື່ອງມືອຸປະກອນສຳລັບການຂຸດຂຸມຝັງ;
- ຄວນມີນໍ້າແຮສຸກເສີນໄວ້ມອດໄຟ ເພື່ອປ້ອງກັນໄຟລາມປ່າ.

### ໒. ການທຳລາຍຊາກສັດປ່າ ດ້ວຍການຝັງ

ວິທີການທຳລາຍຊາກສັດປ່າ ດ້ວຍການຝັງໃຫ້ປະຕິບັດ ດັ່ງນີ້:

- ສວມຊຸດອຸປະກອນປ້ອງກັນຕົນເອງ ກ່ອນການສຳຜັດກັບສັດປ່າ;
- ເລືອກຈຸດຝັງທີ່ໃກ້ກັບບ່ອນສັດປ່າຕາຍ ເພື່ອຈຳກັດໄລຍະການເຄື່ອນຍ້າຍຊາກສັດປ່າ;
- ຂຸດຂຸມ ທີ່ມີຂະໜາດຄວາມກວ້າງສາມາດເອົາຊາກສັດປ່າທັງໝົດລົງໃນຂຸມໄດ້;
- ຂຸມຝັງຕ້ອງມີຄວາມເລິກພຽງພໍ ແລະ ຮັບປະກັນຄວາມສູງຂອງຊັ້ນດິນທີ່ຈະຖົມ ຈາກຊາກສັດປ່າໃນຂຸມ ຫາ ປາກຂຸມ ໃຫ້ໄດ້ຢ່າງໜ້ອຍ 1 ແມັດ;
- ຂ້າເຊື້ອອຸປະກອນເຄື່ອງມື ທີ່ຖືກນຳໃຊ້ຕອນທຳລາຍຊາກສັດປ່າ;
- ຖອດຊຸດປ້ອງກັນຕົນເອງ ແລະ ທຳການເຜົາ (ຖົງມື, ຜ້າອັດປາກ-ດັງ N-95, ຜ້າຢາງກັນເປື້ອນ);

- ອະນາໄມຂ້າເຊື້ອ ມື ແລະ ອຸປະກອນ ເຄື່ອງມື ທີ່ຖືກນໍາໃຊ້ຕອນທໍາລາຍຊາກສັດປ່າ.

**<u>ຂໍ້ຄວນພິຈາລະນາ ໃນການຝັງຊາກສັດປ່າ ມີດັ່ງນີ້:</u>**

- ຜູ້ປະຕິບັດຕ້ອງຮັບປະກັນຄວາມປອດໄພທາງດ້ານຊີວະພາບຕໍ່ຕົນເອງ ແລະ ສິ່ງແວດລ້ອມ;
- ບ່ອນຝັງຊາກສັດ ຄວນຢູ່ຫ່າງຈາກເຂດແຫຼ່ງນໍ້າ, ເຂດກະສິກໍາ, ເຂດຊອກຢູ່ຫາກິນ ແລະ ເຂດສັດລ້ຽງຂອງປະຊາຊົນ;
- ກໍລະນີ ຊາກສັດປ່າຂະໜາດໃຫຍ່, ໃຫ້ເລືອກວິທີການເຜົາເທົ່ານັ້ນ ຫຼື ວິທີເຜົາ ແລະ ຝັງລວມກັນ.

ຖ້າເລືອກວິທີການທໍາລາຍຊາກສັດປ່າ ດ້ວຍການເຜົາ ແລະ ຝັງລວມກັນ, ໃຫ້ປະຕິບັດຕາມ ວິທີການເຜົາກ່ອນ, ຈາກນັ້ນ ໃຫ້ຝັງສິ້ນສ່ວນທີ່ໄໝ້ບໍ່ໝົດ ໂດຍປະຕິບັດຕາມວິທີການຝັງ.

ກໍລະນີ ຊາກສັດປ່າພົບຢູ່ໃກ້ເຂດຊຸມຊົນ, ຕະຫຼາດ ຫຼື ຊາກສັດປ່າທີ່ໄດ້ຈາກການກວດຍຶດຂອງເຈົ້າໜ້າທີ່ ແມ່ນສາມາດທໍາລາຍ ໂດຍປະຕິບັດຕາມວິທີການເຜົາ ຫຼື ຝັງ.

**2) ການທໍາລາຍຊາກສັດປ່າ ຢູ່ໃນສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ, ສວນສັດ, ສູນອະນຸລັກຂະນິດພັນສັດປ່າ, ຟາມຂະຫຍາຍພັນສັດປ່າ, ໂຮງລະຄອນສັດ**

ການທໍາລາຍຊາກສັດປ່າ ຢູ່ໃນສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ, ສວນສັດ, ສູນອະນຸລັກຂະນິດພັນສັດປ່າ, ຟາມຂະຫຍາຍພັນສັດປ່າ, ໂຮງລະຄອນສັດ ເປັນຄວາມຮັບຜິດຊອບຂອງອົງກອນນັ້ນໆ ໂດຍຕ້ອງຮັບປະກັນຄວາມປອດໄພທາງດ້ານຊີວະພາບຕໍ່ຕົນເອງ ແລະ ສິ່ງແວດລ້ອມຢ່າງເຂັ້ມງວດ.

**ຂັ້ນຕອນທີ 5: ການເກັບຮັກສາຕົວຢ່າງ ແລະ ຊາກສັດປ່າ ໄລຍະຊົ່ວຄາວ ແລະ ການຈັດສົ່ງ**

**1) ການເກັບຮັກສາຕົວຢ່າງ ແລະ ຊາກສັດປ່າໄລຍະຊົ່ວຄາວ**

ຜູ້ເກັບຕົວຢ່າງ ແລະ ຊາກສັດປ່າ ທີ່ໄດ້ລະບຸໄວ້ຢູ່ຂັ້ນຕອນທີ 3 ຈະຕ້ອງຮັບຜິດຊອບການເກັບຮັກສາ ແລະ ຈັດສົ່ງຕົວຢ່າງ ແລະ ຊາກສັດປ່າ ຫາ ສູນວິໄຈພະຍາດສັດ.

ເກັບຮັກສາຕົວຢ່າງ ແລະ ຊາກສັດປ່າ ໄວ້ໃນຄວາມເຢັນ ໂດຍການແຊ່ໃນຖັງນໍ້າກ້ອນ, ຕູ້ເຢັນ ຫຼື ຕູ້ແຊ່ແຂງ ໃຫ້ໄວທີ່ສຸດ ພາຍຫຼັງຈາກການເກັບ ໃນຄະນະລໍຖ້າການຈັດສົ່ງ. ຕົວຢ່າງ ແລະ ຊາກສັດປ່ານັ້ນ ຈະຕ້ອງຫຸ້ມຫໍ່ໃນຖົງຢາງເປັນຢ່າງດີ. **<u>ຫ້າມນໍາຕົວຢ່າງ ແລະ ຊາກສັດ ເກັບໄວ້ໃນຖັງ ຫຼື ຕູ້ເຢັນ ຮ່ວມກັບອາຫານ ຫຼື ເຄື່ອງດື່ມທົ່ວໄປ.</u>**

**2) ການກຽມ ແລະ ຈັດສົ່ງຕົວຢ່າງ ແລະ ຊາກສັດປ່າ ສໍາລັບການວິໄຈ**

ບຸກຄົນທີ່ໄດ້ຮັບການຝຶກອົບຮົມ ຫຼື ຜູ້ຖືກແຕ່ງຕັ້ງ ຈະຕ້ອງເປັນຜູ້ກະກຽມ ແລະ ຈັດສົ່ງຕົວຢ່າງ ແລະ ຊາກສັດປ່າ ຫາ ສູນວິໄຈພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ ໂດຍໃຫ້ປະຕິບັດຕາມ ຫຼັກການຫຸ້ມຫໍ່ຕົວຢ່າງ ແລະ ຊາກສັດປ່າ ເພື່ອຈັດສົ່ງ ດັ່ງລຸ່ມນີ້:

- ໃຫ້ນໍາສົ່ງທັນທີ ເວລາຊາກສັດປ່າມາຮອດຫ້ອງການພາກສະໜາມ, ຖ້າຫາກການຂົນສົ່ງບໍ່ສາມາດເກີດຂຶ້ນທັນທີໄດ້ ໃຫ້ເອົາຊາກສັດປ່າເກັບໄວ້ໃນຕູ້ແຊ່;
- ການຈັດສົ່ງຕົວຢ່າງ ແລະ ຊາກສັດປ່າ ຕ້ອງຄັດຕິດແບບພິມບັນທຶກ ຕາມເອກະສານຊ້ອນທ້າຍ 01 ແລະ 02 ຮ່ວມໄປນໍາທຸກຄັ້ງ;
- ວິທີການຈັດສົ່ງຕົວຢ່າງ ສາມາດສົ່ງໄດ້ທາງເຮືອບິນ, ລົດໄຟ, ລົດໂດຍສານ ແລະ ບໍລິສັດຂົນສົ່ງ ທີ່ຮັບປະກັນໃຫ້ສາມາດຈັດສົ່ງຕົວຢ່າງເຖິງທີ່ໝາຍຢ່າງປອດໄພ ແລະ ເລືອກວິທີການຂົນສົ່ງທີ່ຮອດເປົ້າໝາຍໄວທີ່ສຸດ;

- ຕິດຕໍ່ຫາຜູ້ທີ່ຈະຮັບຕົວຢ່າງ ແລະ ຊາກສັດປ່າ ເພື່ອແຈ້ງຂໍ້ມູນລາຍລະອຽດກ່ຽວກັບການຈັດສົ່ງນັ້ນ, ປະເພດພາຫານະຂົນສົ່ງ, ຖ້ຽວລົດ-ເຮືອບິນ-ລົດໄຟ, ເລກທະບຽນລົດ, ເບີໂທລະສັບຜູ້ຂັບລົດ, ຄາດຄະເນ ວັນ ແລະ ເວລາ ທີ່ຊາກສັດປ່າຈະໄປເຖິງເປົ້າໝາຍ ເພື່ອໃຫ້ ສູນວິໄຈພະຍາດສັດ ມາຮັບຕົວຢ່າງ ແລະ ຊາກສັດປ່າທັນເວລາ ແລະ ຫ້າມບໍ່ໃຫ້ນຳສົ່ງຕົວຢ່າງ ຖ້າຍັງບໍ່ທັນໄດ້ຮັບການຢືນຢັນຈາກຜູ້ຮັບວ່າມີຄວາມພ້ອມທີ່ຈະມາຮັບຕົວຢ່າງດັ່ງກ່າວ ຕາມວັນ ແລະ ເວລາທີ່ນັດໝາຍ.

**<u>ຫຼັກການຫຸ້ມຫໍ່ຕົວຢ່າງ ແລະ ຊາກສັດປ່າ ເພື່ອຈັດສົ່ງມີ ດັ່ງນີ້:</u>**

1. ສວມໃສ່ອຸປະກອນປ້ອງກັນຕົນເອງທີ່ເໝາະສົມ ໃນຂະນະທຳການຫຸ້ມຫໍ່ຊາກສັດປ່າ;
2. ນຳໃຊ້ກ່ອງໂຟມທີ່ມີຄວາມໜາ ແລະ ຢູ່ໃນສະພາບດີ;
3. ປູຖົງຢາງທີ່ໜາ (ຖົງຢາງດຳໃສ່ຂີ້ເຫຍື້ອ) ລົງໃນກ່ອງໂຟມ (ຮູບທີ 1);
4. ເອົາຜ້າ ຫຼື ວັດຖຸດູດຊັບຂອງແຫຼວໃສ່ໃນຖົງຢາງ ເພື່ອດູດຊັບນໍ້າ ຫຼື ທາດແຫຼວທີ່ອາດຈະໄຫຼອອກມາ ໃນຂະນະຂົນສົ່ງ (ຮູບທີ 2);
5. ຈາກນັ້ນ, ນຳຊາກສັດປ່າ ຫຼື ຕົວຢ່າງທີ່ຖືກບັນຈຸຢູ່ໃນຖົງຊິບລ່ອກຈຳນວນສາມຊັ້ນ ວາງລົງໃນຖົງຢາງ ພ້ອມກັບຖົງນໍ້າກ້ອນ ຫຼື ຕຸກນໍ້າກ້ອນທີ່ມີຝາປິດຢ່າງດີ ຕ້ອງໝັ້ນໃຈວ່າການລະລາຍຂອງນໍ້າກ້ອນ ຈະບໍ່ສາມາດເຂົ້າຖົງຊາກສັດປ່າໄດ້. (ຮູບທີ 3 ແລະ 4);
6. ອັດປາກຖົງຢາງ ແລະ ມັດດ້ວຍເຊືອກ ຢູ່ພາຍໃນກ່ອງໂຟມ (ຮູບທີ 5);
7. ປິດຝາກ່ອງໂຟມ ແລະ ຕິດທັບປາກຝາ ແລະ ກ້ຽວອ້ອມກ່ອງໂຟມດ້ວຍສະກ໋ອດແຜ່ນໃຫຍ່ (ຮູບທີ 6);
8. ຕິດປ້າຍສັນຍາລັກ UN3373 ໃສ່ກ່ອງໂຟມ;
9. ຕິດລາຍລະອຽດຊື່ຜູ້ສົ່ງ-ຜູ້ຮັບ, ສະຖານທີ່ ແລະ ເບີຕິດຕໍ່.



## 2. ມາດຕະຖານຂັ້ນຕອນການປະຕິບັດ ການວິໄຈຕົວຢ່າງ ແລະ ຊາກສັດປ່າ

### 2.1 ຈຸດປະສົງ

ເພື່ອກຳນົດສະຖານທີ່ ທີ່ຈະດຳເນີນການວິໄຈຕົວຢ່າງ ແລະ ຊາກສັດປ່າ, ກຳນົດໜ້າທີ່, ຄວາມຮັບຜິດຊອບ ແລະ ບັນດາຂັ້ນຕອນການວິໄຈ ເພື່ອສະໜັບສະໜູນໃຫ້ແກ່ການສືບຄົ້ນຫາເຊື້ອພະຍາດ ທີ່ເປັນສາເຫດເຮັດໃຫ້ສັດປ່າ ຕາຍ ແລະ ເປັນພະຍາດ.

### 2.2 ເປົ້າໝາຍການນຳໃຊ້

ນຳໃຊ້ສຳລັບ ສູນວິໄຈພະຍາດສັດຂອງລັດຖະບານ, ສະຖາບັນວິໄຈຂອງອົງການທີ່ບໍ່ສັງກັດລັດຖະບານ, ຜູ້ທີ່ ກ່ຽວຂ້ອງກັບການເກັບຮັກສາ ແລະ ດຳເນີນການວິໄຈຕົວຢ່າງຈາກສັດປ່າ.

### 2.3 ໜ່ວຍງານຈັດຕັ້ງປະຕິບັດ

- ສູນວິໄຈພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ;
- ສະຖາບັນວິໄຈອື່ນໆໃນ ສປປ ລາວ ທີ່ມີຄວາມສາມາດໃນການວິໄຈຕົວຢ່າງຈາກສັດປ່າ ຕາມການຕົກລົງເຫັນດີຂອງ ກົມລ້ຽງສັດ ແລະ ການປະມົງ.

### 2.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ

ສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1) ຮັບຕົວຢ່າງ ແລະ ຊາກສັດປ່າ;
2) ຜ່າຊາກສັດປ່າ ແລະ ເກັບຕົວຢ່າງ (ກໍລະນີຊາກສັດປ່າ ຖືກສົ່ງມາສູນວິໄຈພະຍາດສັດ)
3) ດຳເນີນການວິໄຈ;
4) ລາຍງານຜົນການວິໄຈ;
5) ຄຸ້ມຄອງຂໍ້ມູນຕົວຢ່າງ ແລະ ຜົນການວິໄຈຕົວຢ່າງຈາກສັດປ່າ;
6) ທຳລາຍຊິ້ນສ່ວນ ຫຼື ຊາກສັດປ່າພາຍຫຼັງການວິໄຈ.

**ນອກຈາກນີ້ ຍັງມີໜ້າທີ່ ແລະ ຄວາມຮັບຜິດຊອບອື່ນໆ ດັ່ງນີ້:**

- ເຂົ້າຮ່ວມ ຫຼື ໃຫ້ການຝຶກອົບຮົມ ດ້ານວິຊາການກ່ຽວຂ້ອງກັບການເຝົ້າລະວັງພະຍາດສັດປ່າ ເພື່ອຍົກລະດັບ ແລະ ສ້າງຄວາມອາດສາມາດໃຫ້ແກ່ໜ່ວຍງານກ່ຽວຂ້ອງຂອງລັດ;
- ໃຫ້ການແນະນຳ ແລະ ສະໜັບສະໜູນ ແກ່ພະນັກງານວິຊາການຂັ້ນທ້ອງຖິ່ນ ໃນການເກັບຕົວຢ່າງ ແລະ ໂຕ້ຕອບເຫດການທີ່ກ່ຽວກັບພະຍາດສັດປ່າ;
- ເຂົ້າຮ່ວມການລົງສືບຄົ້ນເຫດການ ຮ່ວມກັບໜ່ວຍງານກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມຄວາມຈຳເປັນ;
- ປະຕິບັດຫຼັກການຄວາມປອດໄພ ແລະ ຄວາມໝັ້ນຄົງທາງດ້ານຊີວະພາບໃນຫ້ອງວິໄຈ;
- ປະສານງານກັບສະຖາບັນວິໄຈທີ່ເປັນຄູ່ຮ່ວມງານອື່ນໆ ເພື່ອດຳເນີນການວິໄຈດ້ວຍວິທີການທີ່ເໝາະສົມສຳລັບຕົວຢ່າງທີ່ສູນວິໄຈພະຍາດສັດ ບໍ່ສາມາດດຳເນີນການວິໄຈດ້ວຍຕົນເອງ;
- ຂໍຄຳແນະນຳ ແລະ ການສະໜັບສະໜູນດ້ານວິຊາການຈາກ ອົງການພາຍນອກ ເຊັ່ນ: ອົງການອະນຸລັກສັດປ່າ ຕາມຄວາມຈຳເປັນ;
- ລາຍງານຜົນການວິໄຈ ໃຫ້ແກ່ກົມລ້ຽງສັດ ແລະ ການປະມົງຊາບ ເພື່ອໃຊ້ເປັນຂໍ້ມູນລາຍງານໃຫ້ແກ່ອົງການສຸຂະພາບສັດສາກົນ ຫຼື ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງຮັບຊາບຢ່າງທັນການ.

### 2.5 ຂັ້ນຕອນການປະຕິບັດ ການວິໄຈຕົວຢ່າງ ແລະ ຊາກສັດປ່າ

**ຂັ້ນຕອນທີ 1: ການຮັບຕົວຢ່າງ ແລະ ຊາກສັດປ່າ**

ພະນັກງານສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ ຮັບຕົວຢ່າງ ແລະ ຊາກສັດປ່າ ຕາມລະບຽບການຮັບຕົວຢ່າງຂອງສູນວິໄຈພະຍາດສັດ.

**ຂັ້ນຕອນທີ 2: ການຜ່າຊາກສັດປ່າ**

- ພະນັກງານຂອງສູນວິໄຈພະຍາດສັດ ດຳເນີນການຜ່າຊາກສັດປ່າໃຫ້ໄວທີ່ສຸດ ໂດຍປະຕິບັດຕາມຫຼັກການຜ່າຊາກສັດປ່າ ຂອງສູນວິໄຈພະຍາດສັດ ຫຼື ຕາມຂັ້ນຕອນປະຕິບັດການຜ່າຊາກສັດປ່າທີ່ລະບຸໄວ້ໃນ ເອກະສານຊ້ອນທ້າຍ 03 ແບບບັນທຶກ ແລະ ຂັ້ນຕອນປະຕິບັດການຜ່າຊາກສັດ ພ້ອມທັງເກັບຕົວຢ່າງ ເພື່ອການວິໄຈຂັ້ນຕອນຕໍ່ໄປ;
- ບັນທຶກຂໍ້ມູນຄວາມຜິດປົກກະຕິ ຫຼື ພະຍາດວິທະຍາໃດໜຶ່ງ ທີ່ພົບເຫັນໃນຂະນະທຳການຜ່າຊາກ ແລະ ຂໍ້ມູນຕົວຢ່າງທີ່ຖືກເກັບ ລົງໃນ ແບບພິມບັນທຶກ ແລະ ຂັ້ນຕອນປະຕິບັດການຜ່າຊາກສັດ ຕາມເອກະສານຊ້ອນທ້າຍ 03 ແລ້ວນຳໄປຄັດຕິດໃສ່ແບບພິມບັນທຶກຂໍ້ມູນເຫດການ ສັດປ່າເຈັບ ຫຼື ຕາຍ ຕາມເອກະສານຊ້ອນທ້າຍ 01;
- ຂໍ້ມູນທີ່ບັນທຶກໃນແບບພິມການຜ່າຊາກສັດປ່ານັ້ນ ຕ້ອງປ້ອນລົງໃນຖານຂໍ້ມູນ WHIP ເຊັ່ນດຽວກັນ.

**ຂັ້ນຕອນທີ 3: ການວິໄຈຕົວຢ່າງ**

- ພະນັກງານຂອງສູນວິໄຈພະຍາດສັດ ຈະເປັນຜູ້ພິຈາລະນາວ່າ ຕົວຢ່າງທີ່ໄດ້ຮັບຄວນຈະດຳເນີນການວິໄຈພະຍາດຫຍັງແດ່ ໂດຍອີງໃສ່ຂໍ້ມູນທີ່ໄດ້ຮັບໃນບົດລາຍງານເບື້ອງຕົ້ນ ຕາມເອກະສານຊ້ອນທ້າຍ 01, ລາຍການຕົວຢ່າງທີ່ໄດ້ຮັບ ຕາມເອກະສານຊ້ອນທ້າຍ 02 ແລະ ຂໍ້ມູນຄວາມຜິດປົກກະຕິ ຫຼື ພະຍາດວິທະຍາ ທີ່ກວດກາພົບໃນເວລາດຳເນີນການຜ່າຊາກສັດປ່າ, ອາການທີ່ສະແດງອອກ (ຖ້າສັດປ່າຍັງມີຊີວິດ), ການບົ່ງມະຕິເບື້ອງຕົ້ນ ແລະ ຂໍ້ສົງໄສກ່ຽວກັບສາເຫດການເຈັບ ຫຼື ຕາຍຂອງສັດປ່າ ຈາກພາກສະໜາມ;
- ກວດກາເບິ່ງສະພາບຕົວຢ່າງ ເພື່ອໃຫ້ແນ່ໃຈວ່າຕົວຢ່າງດັ່ງກ່າວ ໄດ້ຖືກເກັບຮັກສາຖືກຕ້ອງເໝາະສົມ ຫຼື ບໍ່;
- ດຳເນີນການວິໄຈຕາມວິທີການ ແລະ ຂັ້ນຕອນດ້ານເຕັກນິກ ທີ່ສູນວິໄຈພະຍາດສັດ ກຳນົດໄວ້;
- ອອກໃບຢັ້ງຢືນຜົນຂອງການວິໄຈ;
- ເກັບຮັກສາຕົວຢ່າງ ຢ່າງເໝາະສົມ ເພື່ອການວິໄຈໃນຕໍ່ໜ້າ, ຖ້າມີຄວາມຕ້ອງການ.

ກໍລະນີຈຳເປັນ ສູນວິໄຈພະຍາດສັດ ຈະຕ້ອງປະສານຫາ ຫ້ອງວິໄຈອື່ນ ທີ່ເປັນຄູ່ຮ່ວມງານຢູ່ພາຍໃນ ຫຼື ຕ່າງປະເທດ ເພື່ອໃຫ້ດຳເນີນການວິໄຈຕົວຢ່າງ ໃດໜຶ່ງ ທີ່ຕ້ອງໄດ້ນຳໃຊ້ເຕັກນິກການວິໄຈສະເພາະ ທີ່ສູນວິໄຈພະຍາດສັດ ບໍ່ສາມາດວິໄຈໄດ້.

**ຂັ້ນຕອນທີ 4: ການລາຍງານຜົນການວິໄຈຕົວຢ່າງ**

ພາຍຫຼັງສຳເລັດການວິໄຈ ແລະ ອອກໃບຢັ້ງຢືນຜົນການວິໄຈແລ້ວ ໃຫ້ປະຕິບັດ ດັ່ງນີ້:

- ຖ້າກວດພົບເຊື້ອພະຍາດທີ່ບໍ່ຈຳເປັນຕ້ອງແຈ້ງ ຫຼື ບໍ່ເປັນເຊື້ອພະຍາດບູລິມະສິດ, ສູນວິໄຈພະຍາດສັດ ສາມາດແຈ້ງຜົນວິໄຈ ກັບຄືນຫາ ບຸກຄົນ ຫຼື ອົງການທີ່ສົ່ງຕົວຢ່າງມາໃຫ້ ໂດຍບໍ່ຈຳເປັນຕ້ອງຂໍອະນຸມັດຈາກຂັ້ນກົມກ່ອນ.

- ຖ້າກວດພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ ໃຫ້ປະຕິບັດຕາມ ຂັ້ນຕອນທີ 7 ການລາຍງານການກວດພົບພະຍາດ ໃຫ້ຂະແໜງການອື່ນ;
- ລາຍງານ ທຸກໆຜົນການວິໄຈຕົວຢ່າງ ຈາກການເຝົ້າລະວັງພະຍາດສັດປ່າ ໃຫ້ ອົງການອະນຸລັກສັດປ່າ ປະຈຳ ສປປ ລາວ (WCS) ຮັບຊາບ.

**ຂັ້ນຕອນທີ 5: ການຄຸ້ມຄອງຂໍ້ມູນການວິໄຈຕົວຢ່າງສັດປ່າ**

ພະນັກງານຜູ້ທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ຮັບຜິດຊອບຄຸ້ມຄອງຖານຂໍ້ມູນ ຢູ່ສູນວິໄຈພະຍາດສັດ ຈະຕ້ອງເປັນຜູ້ປ້ອນຂໍ້ມູນຜົນການວິໄຈນີ້ ລົງໃນຖານຂໍ້ມູນ WHIP ຕາມຂັ້ນຕອນທີ່ກຳນົດຢູ່ ຂໍ້ທີ 4 ມາດຕະຖານຂັ້ນຕອນການຄຸ້ມຄອງຖານຂໍ້ມູນພະຍາດສັດປ່າ ຂອງມາດຕະຖານສະບັບນີ້.

**ຂັ້ນຕອນທີ 6: ການທຳລາຍຊິ້ນສ່ວນ ຫຼື ຊາກສັດປ່າ**

ທຸກຊາກ ຫຼື ຊິ້ນສ່ວນສັດປ່າ ທີ່ຖືກສົ່ງມາ ສູນວິໄຈພະຍາດສັດ ເພື່ອເກັບຕົວຢ່າງ, ຜ່າຊາກ ແລະ ວິໄຈ ຫຼັງຈາກດຳເນີນການແລ້ວຈະຖືກທຳລາຍ ຕາມວິທີການທີ່ກຳນົດໄວ້ໃນ “ຄູ່ມືຄວາມປອດໄພດ້ານຊີວະພາບ ໃນຫ້ອງວິເຄາະແຫ່ງຊາດ ປີ 2016”.

**ຂັ້ນຕອນທີ 7: ການລາຍງານການກວດພົບພະຍາດ ໃຫ້ຂະແໜງການອື່ນ**

ພາຍຫຼັງທີ່ສູນວິໄຈພະຍາດສັດ ກວດພົບເຊື້ອພະຍາດທີ່ຈຳເປັນຕ້ອງແຈ້ງໃດໜຶ່ງ ໃຫ້ລາຍງານຫາຫົວໜ້າກົມລ້ຽງສັດ ແລະ ການປະມົງ ເພື່ອຊີ້ນຳພະແນກສັດຕະວະແພດ ຮ່າງໜັງສືເຖິງອົງການທີ່ກ່ຽວຂ້ອງ ດັ່ງນີ້:

1) ຂະແໜງການສາທາລະນະສຸກ (ໃນກໍລະນີ ທີ່ເປັນພະຍາດຕິດຕໍ່ຈາກສັດສູ່ຄົນ);
2) ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ທີ່ກ່ຽວຂ້ອງ;
3) ອົງການອະນຸລັກ ແລະ ຄຸ້ມຄອງສັດປ່າ;
4) ອົງການສຸຂະພາບສັດສາກົນ (OIE);
5) ກົມປ່າໄມ້;
6) ກົມກວດກາປ່າໄມ້;
7) ຜູ້ປະສານງານເຄືອຂ່າຍເຝົ້າລະວັງພະຍາດສັດປ່າ ຂັ້ນສູນກາງ ເພື່ອລາຍງານຫາຜູ້ປະສານງານເຄືອຂ່າຍພາກສະໜາມ, ສວນສັດ, ຟາມສັດປ່າ, ໂຮງລະຄອນສັດ ແລະ ສູນຊ່ວຍເຫຼືອ ແລະ ຟື້ນຟູສັດປ່າ.

## 3. ມາດຕະຖານ ຂັ້ນຕອນການປະຕິບັດ ການຄວບຄຸມການລະບາດຂອງພະຍາດສັດປ່າ

### 3.1 ຈຸດປະສົງ

ເພື່ອແນະນຳ ໃຫ້ຄະນະກຳມະການ ເຝົ້າລະວັງພະຍາດສັດປ່າ ແລະ ຄະນະສະເພາະກິດ ໃນການເຝົ້າລະວັງ ແລະ ໂຕ້ຕອບການລະບາດ ຂອງພະຍາດສັດປ່າ ເວລາມີເຫດການລະບາດຂອງພະຍາດສັດປ່າ.

### 3.2 ເປົ້າໝາຍການນຳໃຊ້

ແມ່ນນຳໃຊ້ໃນເວລາທີ່ຜົນການວິໄຈ ພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ ຫຼື ຄວາມສ່ຽງອື່ນໆທີ່ອາດມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດລ້ຽງ, ສັດປ່າ ແລະ ສິ່ງແວດລ້ອມ.

### 3.3 ໜ່ວຍງານຈັດຕັ້ງປະຕິບັດ

- ຄະນະກຳມະການ ເຝົ້າລະວັງພະຍາດສັດປ່າ ເປັນຄະນະກຳມະການ ຜູ້ປະຈຳການຕາມທີ່ໄດ້ກຳນົດໄວ້ໃນໂຄງຮ່າງເຄືອຂ່າຍສາຍການລາຍງານ ການພົບເຫັນເຫດການສັດປ່າເຈັບ ແລະ ຕາຍ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຜິດຊອບຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ, ໂດຍມີ ຫົວໜ້າກົມລ້ຽງສັດ ແລະ ການປະມົງ ເປັນປະທານ ມີຮອງຫົວໜ້າກົມປ່າໄມ້, ຮອງຫົວໜ້າກົມກວດກາປ່າໄມ້, ກົມຄວບຄຸມພະຍາດຕິດຕໍ່ ກະຊວງສາທາລະນະສຸກເປັນກຳມະການ ແລະ ມີຫົວໜ້າສູນວິໄຈພະຍາດສັດ, ຮອງຫົວໜ້າພະແນກສັດຕະວະແພດ ແລະ ພະນັກງານວິຊາການຈຳນວນໜຶ່ງ ເປັນກອງເລຂາ.
- ຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ແມ່ນການຈັດຕັ້ງທີ່ຖືກສ້າງຂຶ້ນ ໃນໄລຍະເວລາໃດໜຶ່ງ ໂດຍອົງການຄຸ້ມຄອງຂັ້ນສູນກາງ ຫຼື ທ້ອງຖິ່ນ ຕາມແຕ່ລະກໍລະນີ້ ເພື່ອເຮັດໜ້າທີ່ໃນການໂຕ້ຕອບເຫດການລະບາດຂອງພະຍາດສັດປ່າ.

### 3.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ

ຄະນະກຳມະການ ເຝົ້າລະວັງພະຍາດສັດປ່າ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

- ເປັນເສນາທິການໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນການວາງແຜນ, ກຳນົດຍຸດທະສາດ, ລະບຽບການ ແລະ ມາດຕະການ ໃນການເຝົ້າລະວັງພະຍາດສັດປ່າ;
- ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ;
- ສະເໜີ ການແຕ່ງຕັ້ງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ຕໍ່ ກະຊວງກະສິກຳ ແລະ ປ່າໄມ້;
- ບັນຊາສັ່ງການຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ໃນການດຳເນີນການໂຕ້ຕອບການລະບາດຂອງພະຍາດສັດປ່າ ໃຫ້ຖືກຕາມຫຼັກວິຊາການ, ກົດໝາຍ ແລະ ລະບຽບການ;
- ປະສານງານ ແລະ ອຳນວຍຄວາມສະດວກ ຈັດຕັ້ງປະຕິບັດໜ້າທີ່ຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ;
- ປະສານກັບພາກສ່ວນທີ່ກ່ຽວຂ້ອງ ລວມທັງ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເພື່ອຂໍການສະໜັບສະໜູນ;
- ເປັນຜູ້ໃຫ້ຂໍ້ມູນຂ່າວສານແກ່ສື່ມວນຊົນ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**ຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:**

- ວາງແຜນການໂຕ້ຕອບ ລວມມີ: ແຜນຄົນ, ແຜນເງິນ ແລະ ສະເໜີຂໍການສະໜັບສະໜູນດ້ານງົບປະມານ ແລະ ອຸປະກອນ ເພື່ອປະກອບສ່ວນເຂົ້າໃນວຽກງານໂຕ້ຕອບການລະບາດຂອງພະຍາດສັດປ່າ;
- ສະເໜີອົງການປົກຄອງທີ່ກ່ຽວຂ້ອງ ປະກາດເຂດພະຍາດລະບາດ ແລະ ວາງມາດຕະການໂຕ້ຕອບ;
- ປະສານງານ ການສືບຄົ້ນ ແລະ ຕິດຕາມ ການລະບາດຂອງພະຍາດສັດປ່າ ຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງອົງການຈັດຕັ້ງສາກົນ;
- ອຳນວຍຄວາມສະດວກ ໃຫ້ແກ່ການໂຄສະນາດ້ານສຸຂະສຶກສາ, ປຸກລະດົມປະຊາຊົນ ແລະ ຜູ້ປະກອບການໃຫ້ຄວາມຮ່ວມມື ໃນການຄວບຄຸມການລະບາດຂອງພະຍາດສັດປ່າ;
- ລາຍງານສະຖານະການລະບາດ ຂອງພະຍາດສັດປ່າ ຕໍ່ອົງການຄຸ້ມຄອງຂັ້ນສູນກາງ ແລະ ທ້ອງຖິ່ນ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

### 3.5 ຂັ້ນຕອນການປະຕິບັດໃນການຄວບຄຸມການລະບາດຂອງພະຍາດສັດປ່າ

ການຄວບຄຸມການລະບາດຂອງພະຍາດສັດປ່າ ເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນ ຊຶ່ງກ່ຽວຂ້ອງກັບຫຼາຍພາກສ່ວນໃນສັງຄົມ, ແຕ່ບາງສະຖານະການອາດເປັນໄປບໍ່ໄດ້ ຫຼື ອາດບໍ່ເໝາະສົມ ໃນການຈັດການ ຫຼື ຄວບຄຸມການລະບາດຂອງພະຍາດສັດປ່າ. ເຖິງຢ່າງໃດກໍຕາມ, ໃນສະຖານະການທີ່ຈຳເປັນ ແລະ ອາດຮຽກຮ້ອງໃຫ້ມີການຄວບຄຸມພະຍາດຮ່ວມກັນ ໂດຍພິຈາລະນາຕາມເງື່ອນໄຂ ດັ່ງນີ້:

1) ມີຜົນກະທົບຮ້າຍແຮງຕໍ່ປະຊາກອນສັດປ່າ, ລະບົບນິເວດ ແລະ ສິ່ງແວດລ້ອມ;
2) ສາມາດກໍ່ໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບຂອງຄົນ;
3) ກໍ່ໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບຂອງສັດລ້ຽງ, ການຜະລິດ ແລະ ເສດຖະກິດການຄ້າ;
4) ມີແຮງກົດດັນຈາກສັງຄົມໃຫ້ຕ້ອງມີການດຳເນີນມາດຕະການ.

ກໍລະນີ ພະຍາດເກີດຈາກກິດຈະກຳຂອງຄົນ ໂດຍທາງກົງ ຫຼື ທາງອ້ອມ, ມາດຕະການຄວບຄຸມ ຕ້ອງສຸມໃສ່ການຈຳກັດພຶດຕິກຳ ຫຼື ການກະທຳ ທີ່ເປັນສາເຫດກໍ່ໃຫ້ເກີດບັນຫານັ້ນໆກ່ອນ. ບັນດາຍຸດທະສາດການຄວບຄຸມພະຍາດສັດປ່າ ຕ້ອງຫຼີກລ່ຽງຜົນກະທົບທາງລົບທີ່ອາດຈະເກີດຂຶ້ນຕໍ່ປະຊາກອນສັດປ່າ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

**ຂັ້ນຕອນທີ 1: ແຕ່ງຕັ້ງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ**

1) ຄະນະກຳມະການເຝົ້າລະວັງພະຍາດສັດປ່າ ສະເໜີ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ເພື່ອສົ່ງລາຍຊື່ ຜູ້ທີ່ຈະປະກອບເປັນຄະນະສະເພາະກິດໃຫ້ ກົມລ້ຽງສັດ ແລະ ການປະມົງ ພາຍໃນ 24 ຊົ່ວໂມງ, ຫຼັງຈາກຄົ້ນພົບການລະບາດ;
2) ກົມລ້ຽງສັດ ແລະ ການປະມົງ ສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ອອກຂໍ້ຕົກລົງແຕ່ງຕັ້ງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ເພື່ອໂຕ້ຕອບການລະບາດຂອງພະຍາດສັດປ່າ;
3) ຄະນະກຳມະການເຝົ້າລະວັງພະຍາດສັດປ່າ ເປັນເຈົ້າການ ໃນການເຜີຍແຜ່ຂໍ້ຕົກລົງຂອງກະຊວງ ລົງຫາຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນ ແລະ ອົງການທີ່ບໍ່ສັງກັດລັດຖະບານທີ່ກ່ຽວຂ້ອງ.

**ຂັ້ນຕອນທີ 2: ຈັດກອງປະຊຸມຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ**

ຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ທີ່ໄດ້ຮັບການແຕ່ງຕັ້ງ ຈັດກອງປະຊຸມເພື່ອປຶກສາຫາລື ໂດຍເນື້ອໃນກອງປະຊຸມ ຕ້ອງກວມເອົາ:

1) ການລາຍງານຂໍ້ມູນສະພາບການເກີດພະຍາດ;
2) ການກຳນົດ ແລະ ການປະກາດເຂດລະບາດຂອງພະຍາດ, ຖ້າເປັນໄປໄດ້;
3) ແຜນງານ ແລະ ມາດຕະການຄວບຄຸມການລະບາດຂອງພະຍາດ;
4) ການແບ່ງຄະນະຮັບຜິດຊອບ ແລະ ກຳນົດໜ້າທີ່ລະອຽດ;
5) ກົນໄກການປະສານງານ, ການກວດກາ, ຕິດຕາມ ແລະ ການລາຍງານຄວາມຄືບໜ້າກ່ຽວກັບສະພາບ ແລະ ການໂຕ້ຕອບເຫດການ;
6) ແຜນຈັດກອງປະຊຸມ ເພື່ອຕິດຕາມການຄວບຄຸມການລະບາດຂອງພະຍາດ.

**ຂັ້ນຕອນທີ 3: ການກຳນົດ ແລະ ປະກາດເຂດລະບາດຂອງພະຍາດ ຫຼື ເຂດພື້ນທີ່ໄດ້ຮັບຜົນກະທົບ**

**1) ການກຳນົດເຂດລະບາດຂອງພະຍາດສັດປ່າ ຫຼື ເຂດພື້ນທີ່ໄດ້ຮັບຜົນກະທົບ**

ການກຳນົດເຂດລະບາດຂອງພະຍາດສັດປ່າ ຫຼື ພື້ນທີ່ໄດ້ຮັບຜົນກະທົບ ຈາກເຫດການສັດປ່າເຈັບ ຫຼື ຕາຍ ແມ່ນເປັນສິ່ງທີ່ທ້າທາຍຫຼາຍ ເພາະວ່າສັດປ່າເປັນສັດທີ່ມີການເຄື່ອນໄຫວຢ່າງເສລີ. ພາຍຫຼັງມີການຢັ້ງຢືນການລະບາດຂອງພະຍາດສັດປ່າໃດໜຶ່ງ ໃຫ້ກຳນົດເຂດ ໂດຍໃຫ້ພິຈາລະນາ ດັ່ງນີ້:

**i. ສັດປ່າຢູ່ໃນປ່າ ຫຼື ຖິ່ນອາໄສຕາມທຳມະຊາດ**

**ກ. ສັດປ່າຊະນິດປະຈຳຖິ່ນ:**

ຖ້າເຫດການລະບາດຂອງພະຍາດສັດປ່າ ຫາກເກີດຂຶ້ນຢູ່ພື້ນທີ່ປ່າ ຫຼື ຖິ່ນອາໄສຕາມທຳມະຊາດ ແມ່ນຊະນິດສັດປ່າປະຈຳຖິ່ນ, ໃຫ້ກຳນົດເຂດຖິ່ນທີ່ຢູ່ອາໄສດັ່ງກ່າວເປັນເຂດລະບາດຂອງພະຍາດ ຕາມການຕົກລົງເຫັນດີ ຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ.

**ຂ. ສັດປ່າອົບພະຍົບ:**

ຖ້າເຫດການລະບາດຂອງພະຍາດສັດປ່າ ຫາກເກີດຂຶ້ນຢູ່ພື້ນທີ່ປ່າ ຫຼື ຖິ່ນທີ່ຢູ່ອາໄສຕາມທຳມະຊາດ ແມ່ນຊະນິດສັດປ່າອົບພະຍົບ (ຍ້າຍຖິ່ນ) ທີ່ປະກົດເຫັນໃນຊ່ວງລະດູການ ແລະ ພື້ນທີ່ໃດໜຶ່ງ ໃນ ສປປ ລາວ, ໃຫ້ກຳນົດເຂດພື້ນທີ່ດັ່ງກ່າວເປັນເຂດລະບາດ ຕາມການຕົກລົງເຫັນດີ ຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ.

**ii. ສັດປ່າຢູ່ສະຖານທີ່ຈຳກັດບໍລິເວນ**

ໃນສະຖານທີ່ຈຳກັດບໍລິເວນ ສວນສັດ, ຟາມຂະຫຍາຍພັນສັດປ່າ ບ່ອນທີ່ສັດປ່າຖືກກັກຂັງຢູ່ໃນກົງ, ຄອກ ຫຼື ບ່ອນທີ່ມີຮົ້ວອ້ອມຮອບ ຂອບເຂດສະຖານທີ່ດັ່ງກ່າວ ສາມາດກຳນົດເປັນເຂດລະບາດຂອງພະຍາດ ຫຼື ເຂດໄດ້ຮັບຜົນກະທົບ ຕາມການກຳນົດຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ.

**2) ການປະກາດເຂດຄວບຄຸມການລະບາດຂອງພະຍາດສັດປ່າ**

ການປະກາດເຂດຄວບຄຸມພະຍາດລະບາດສັດປ່າ ແມ່ນອີງການປົກຄອງທ້ອງຖິ່ນ ຫຼື ສູນກາງເປັນຜູ້ປະກາດ ຕາມການສະເໜີຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ແລະ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດແຕ່ລະຂັ້ນ ດັ່ງນີ້:

- ຖ້າພະຍາດສັດປ່າ ຫາກມີການລະບາດໃນຂອບເຂດເມືອງ, ເທດສະບານ, ນະຄອນ ໃດໜຶ່ງ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນນັ້ນ ເປັນຜູ້ປະກາດ;
- ຖ້າພະຍາດສັດປ່າ ຫາກມີການລະບາດຫຼາຍກວ່າໜຶ່ງເມືອງ, ເທດສະບານ, ນະຄອນ ແຕ່ຢູ່ໃນຂອບເຂດແຂວງໃດໜຶ່ງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງນັ້ນ ເປັນຜູ້ປະກາດ;
- ຖ້າພະຍາດສັດປ່າ ຫາກມີລະບາດຫຼາຍກວ່າໜຶ່ງແຂວງ, ໃຫ້ນາຍົກລັດຖະມົນຕີ ຫຼື ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ປະກາດ.

**ຂັ້ນຕອນທີ 4: ການປະເມີນຄວາມສ່ຽງ**

ການປະເມີນຄວາມສ່ຽງ ແມ່ນໃຫ້ປະຕິບັດຕາມຫຼັກການປ້ອງກັນໄວ້ລ່ວງໜ້າ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະເກີດຂຶ້ນໃຫ້ຫຼາຍເທົ່າທີ່ຈະເຮັດໄດ້ ໂດຍອີງໃສ່ ຂໍ້ມູນຈາກການວິເຄາະ, ການທົບທວນບົດລາຍງານປະຈຳໄຕມາດ ແລະ

ປະສົບການທີ່ມີ, ຊຶ່ງຄວາມຮັບຜິດຊອບໃນການປະເມີນຄວາມສ່ຽງ ແລະ ການໂຕ້ຕອບເຫດການ ແມ່ນຢູ່ພາຍໃຕ້ 2 ຂະແໜງການຫຼັກ ຕາມແຕ່ລະກໍລະນີ ດັ່ງນີ້:

- ຂະແໜງກະສິກຳ ແລະ ປ່າໄມ້ (ກົມປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ) ເປັນເຈົ້າການດຳເນີນການປະເມີນຄວາມສ່ຽງກ່ຽວກັບສຸຂະພາບສັດປ່າ ແລະ ສັດລ້ຽງ ໂດຍສົມທົບກັບ ກົມກວດກາປ່າໄມ້ ໂດຍໃຫ້ຄຳນຶງເຖິງຄວາມສ່ຽງດັ່ງຕໍ່ໄປນີ້:
    1) ກໍລະນີທີ່ເປັນສັດປ່າ.
        - ມີສັດປ່າເຈັບ ຫຼື ຕາຍ ຫຼາຍກວ່າຊຸມປີທີ່ຜ່ານມາ ຫຼື ບໍ່?;
        - ສາເຫດ ກໍ່ໃຫ້ເກີດການເຈັບ ຫຼື ຕາຍ ໄດ້ຖືກລະບຸແລ້ວ ຫຼື ບໍ່ (ເຊັ່ນ: ພະຍາດ, ສານພິດ ແລະ ອື່ນໆ)?;
        - ຜົນກະທົບທີ່ອາດເປັນໄພຂົ່ມຂູ່ຕໍ່ປະຊາກອນສັດປ່າ ມີຫຍັງແດ່?;
        - ສັດນັກລ່າ ຂອງສັດຊະນິດທີ່ໄດ້ຮັບຜົນກະທົບ ຈະມີຄວາມສ່ຽງ ຫຼື ບໍ່?;
        - ສາເຫດທີ່ເຮັດໃຫ້ສັດປ່າເຈັບ ຫຼື ຕາຍ ແມ່ນເຊື້ອພະຍາດທີ່ຈຳເປັນຕ້ອງແຈ້ງບໍ່?;
        - ມີຫຍັງຕື່ມອີກບໍ່ ທີ່ອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ແຫຼ່ງທີ່ຢູ່ອາໄສ ຂອງສັດປ່າ?.

    2) ກໍລະນີທີ່ເປັນສັດລ້ຽງ.
        - ພະຍາດ ຫຼື ສາເຫດການຕາຍຂອງສັດປ່າ ໄດ້ກໍໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບສັດລ້ຽງ ຫຼື ບໍ່ (ເຊັ່ນ: ສັດລ້ຽງສາມາດຕິດເຊື້ອພະຍາດນີ້ໄດ້ບໍ່? ມີສັດລ້ຽງກຸ່ມສ່ຽງ ທີ່ອາໄສຢູ່ໃກ້ກັບສັດປ່າ ຫຼື ພື້ນທີ່ ໄດ້ຮັບຜົນກະທົບ ຫຼື ບໍ່? ມີກໍລະນີສົງໄສຕິດເຊື້ອໃນສັດລ້ຽງ ໃນພື້ນທີ່ດັ່ງກ່າວບໍ່?);
        - ຖ້າເຊື້ອພະຍາດໃນສັດປ່າ ສົ່ງຕໍ່ຫາສັດລ້ຽງໄດ້, ມັນຈະສົ່ງຜົນກະທົບຕໍ່ເສດຖະກິດ ແລະ ຊີວິດການເປັນຢູ່ຂອງຄົນ ແນວໃດ?;
        - ສາເຫດທີ່ເຮັດໃຫ້ສັດປ່າເຈັບ ຫຼື ຕາຍ ແມ່ນເຊື້ອພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ບໍ່?.

- ຂະແໜງການສາທາລະນະສຸກ (ກົມຄວບຄຸມພະຍາດຕິດຕໍ່) ເປັນເຈົ້າການດຳເນີນການປະເມີນຄວາມສ່ຽງກ່ຽວກັບສຸຂະພາບຂອງຄົນ ໂດຍໃຫ້ຄຳນຶງເຖິງຄວາມສ່ຽງ ດັ່ງຕໍ່ໄປນີ້:
    - ພະຍາດ ຫຼື ສາເຫດການຕາຍຂອງສັດປ່າ ໄດ້ກໍ່ໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບຂອງຄົນ ຫຼື ບໍ່ (ເຊັ່ນ: ແມ່ນພະຍາດຕິດຕໍ່ຈາກສັດສູ່ຄົນບໍ່? ມີປະຊາຊົນອາໄສຢູ່, ຊອກຢູ່ຫາກິນ ຫຼື ລ່າສັດປ່າຢູ່ໃກ້ກັບພື້ນທີ່ ໄດ້ຮັບຜົນກະທົບບໍ່? ມີກໍລະນີສົງໄສຕິດເຊື້ອໃນຄົນ ໃນພື້ນທີ່ດັ່ງກ່າວບໍ່?);
    - ຖ້າຄົນສາມາດຕິດເຊື້ອພະຍາດດັ່ງກ່າວ, ພະຍາດຈະມີຄວາມຮຸນແຮງແນວໃດ? ມັນສາມາດສົ່ງຕໍ່ຈາກຄົນສູ່ຄົນໄດ້ບໍ່?;
    - ສາເຫດທີ່ເຮັດໃຫ້ສັດປ່າເຈັບ ຫຼື ຕາຍ ແມ່ນເຊື້ອພະຍາດທີ່ຈຳເປັນຕ້ອງແຈ້ງບໍ່?.

ຜົນທີ່ໄດ້ຈາກການປະເມີນຄວາມສ່ຽງດັ່ງກ່າວ ຕ້ອງນຳມາສະເໜີຕໍ່ ກອງປະຊຸມວິຊາການສຸຂະພາບໜຶ່ງດຽວ (One Health) ເພື່ອຮັບຊາບ. ໃນກໍລະນີ ພະຍາດກ່ຽວຂ້ອງກັບສຸຂະພາບຄົນ ຫຼື ພະຍາດທີ່ມີຜົນກະທົບຮ້າຍແຮງຕໍ່ສຸຂະພາບສັດລ້ຽງ, ການຄ້າຂາຍຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງມີການວາງແນວທາງໃນການໂຕ້ຕອບການລະບາດຂອງພະຍາດສັດປ່າຮ່ວມກັບຄູ່ຮ່ວມງານສຸຂະພາບໜຶ່ງດຽວ.

ການປະເມີນ ແລະ ຈັດການຄວາມສ່ຽງ ຮຽກຮ້ອງໃຫ້ມີການປະສານງານກັບຫຼາຍຂະແໜງການ ທັງພາກລັດ, ຜູ້ປະກອບການ ລວມເຖິງຄູ່ຮ່ວມງານທີ່ບໍ່ສັງກັດລັດຖະບານ. ຫາກມີຄວາມຈໍາເປັນເກີດສະພາບວິກິດ ເພື່ອເຮັດໃຫ້ທັນການ ກໍສາມາດຈັດຕັ້ງຄະນະຄຸ້ມຄອງຄວາມສ່ຽງສະເພາະກິດໄດ້ ໂດຍການໝູນໃຊ້ກົນໄກປະສານງານທີ່ມີຢູ່ແລ້ວ ເພື່ອອໍານວຍຄວາມສະດວກໃຫ້ແກ່ການ ຈັດການຄວາມສ່ຽງ ໃຫ້ທັນເວລາ. ຈຶ່ງຈະເຮັດໃຫ້ວຽກງານຄຸ້ມຄອງຄວາມສ່ຽງສາມາດປ້ອງກັນ ແລະ ແກ້ໄຂບັນຫາຢ່າງມີປະສິດທິພາບ.

**ຂັ້ນຕອນທີ 5: ການຄວບຄຸມການເຄື່ອນຍ້າຍ**

**1) ສັດປ່າຢູ່ໃນຖິ່ນອາໄສທໍາມະຊາດ**

ໂດຍທົ່ວໄປແລ້ວ ສັດປ່າຢູ່ໃນຖິ່ນອາໄສທໍາມະຊາດແມ່ນບໍ່ໄດ້ຈໍາກັດການຄວບຄຸມການເຄື່ອນຍ້າຍ.

**2) ສັດປ່າຢູ່ສະຖານທີ່ຈໍາກັດບໍລິເວນ ແລະ ຈຸດຄ້າຂາຍສັດປ່າ**

ຖ້າເຫດການລະບາດຂອງພະຍາດເກີດຂຶ້ນຢູ່ໃນຟາມສັດປ່າ ຫຼື ສະຖານທີ່ກັກຂັງສັດປ່າອື່ນໆ, ກົມປ່າໄມ້ ສົມທົບກັບ ກົມກວດກາປ່າໄມ້, ກົມລ້ຽງສັດ ແລະ ການປະມົງ ແລະ ເຈົ້າຂອງສະຖານທີ່ ດໍາເນີນມາດຕະການຈໍາກັດການເຄື່ອນຍ້າຍສັດປ່າ ເຂົ້າ ແລະ ອອກໃນສະຖານທີ່ນັ້ນ ຫຼື ສັ່ງປິດສະຖານທີ່ ທີ່ມີການລະບາດເປັນການຊົ່ວຄາວ ຫຼື ຖາວອນ ຈົນກວ່າເຫດການພະຍາດດັ່ງກ່າວຈະໄດ້ຮັບການແກ້ໄຂສໍາເລັດ.

ຖ້າເຫດການລະບາດຂອງພະຍາດ ເກີດຂຶ້ນຢູ່ຈຸດຄ້າຂາຍສັດປ່າ ໃຫ້ກົມກວດກາປ່າໄມ້ ສົມທົບກັບ ກົມລ້ຽງສັດ ແລະ ການປະມົງ ສະເໜີຕໍ່ ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ປະກາດປິດສະຖານທີ່ດັ່ງກ່າວເປັນການຊົ່ວຄາວ ຫຼື ຖາວອນ. ພ້ອມທັງ ປະຕິບັດມາດຕະການຄວບຄຸມພະຍາດ ແລະ ມາດຕະການຕໍ່ຜູ້ລະເມີດ; ຖ້າຫາກແມ່ນພະຍາດຕິດຕໍ່ຈາກສັດສູ່ຄົນ ໃຫ້ປະສານງານກັບຂະແໜງການສາທາລະນະສຸກ ເພື່ອຄວບຄຸມພະຍາດຮ່ວມກັນ.

**3) ການເຄື່ອນຍ້າຍສັດລ້ຽງ**

ຖ້າການລະບຸເຊື້ອພະຍາດສັດປ່າ ບົ່ງຊີ້ໃຫ້ເຫັນເຖິງຄວາມສ່ຽງຕໍ່ສຸຂະພາບສັດລ້ຽງ ແມ່ນໃຫ້ມີການຈໍາກັດການເຄື່ອນຍ້າຍ ສັດລ້ຽງ ຕາມມາດຕະການຂອງ ຂະແໜງລ້ຽງສັດ ແລະ ການປະມົງ.

**4) ການເຄື່ອນຍ້າຍຂອງຄົນ**

ເມື່ອເຂດພື້ນທີ່ການລະບາດໄດ້ຖືກກໍານົດ ແລະ ອາດມີຄວາມສ່ຽງຕໍ່ສຸຂະພາບຂອງຄົນ ຕ້ອງມີການຈໍາກັດ ແລະ ເກືອດຫ້າມບໍ່ໃຫ້ຄົນ ເຂົ້າໄປໃນເຂດດັ່ງກ່າວ.

**ຂັ້ນຕອນທີ 6: ການສື່ສານຄວາມສ່ຽງສໍາລັບປະຊາຊົນໃນເວລາເກີດເຫດການລະບາດ**

ເມື່ອໄດ້ຮັບຜົນການວິໄຈວ່າ ພົບເຊື້ອພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ຫຼື ພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນ ແລະ ໄດ້ມີການປະກາດເຂດພະຍາດລະບາດແລ້ວ ຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າຄວບຄຸມການລະບາດຂອງພະຍາດສັດປ່າ ຕ້ອງມີການສື່ສານຄວາມສ່ຽງໃຫ້ປະຊາຊົນຢູ່ໃນເຂດດັ່ງກ່າວ ແລະ ເຂດໃກ້ຄຽງຮັບຊາບ ດັ່ງລຸ່ມນີ້:

- ສ້າງຕັ້ງທີມງານສື່ສານຄວາມສ່ຽງ;
- ຈັດປະຊຸມ, ໂຄສະນາເຜີຍແຜ່ ແລະ ນໍາໃຊ້ສື່ຕ່າງໆ ເພື່ອໃຫ້ຄໍາແນະນໍາກ່ຽວກັບການເຝົ້າລະວັງ, ການຈໍາກັດຄວາມສ່ຽງ ແລະ ມາດຕະການຄວບຄຸມການລະບາດຂອງພະຍາດສັດປ່າ ໃຫ້ແກ່ປະຊົນທີ່ຢູ່ພາຍໃນຂອບເຂດເຝົ້າລະວັງພິເສດ;
- ປຸກລະດົມປະຊາຊົນ ໃຫ້ລາຍງານການພົບເຫັນເຫດການສັດປ່າເຈັບ ຫຼື ຕາຍ ຢູ່ໃນເຂດພື້ນທີ່ຂອງຕົນ;

- ລາຍງານຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ປະຊາຊົນ ແລະ ອົງການຄຸ້ມຄອງແຕ່ລະຂັ້ນ ຮັບຮູ້ເຖິງ ສະຖານະການລະບາດຂອງພະຍາດສັດປ່າ.

**ຂັ້ນຕອນທີ 7: ການປະກາດຍົກເລີກ ເຂດຄວບຄຸມພະຍາດລະບາດສັດປ່າ**

ການປະກາດຍົກເລີກ ເຂດຄວບຄຸມພະຍາດລະບາດສັດປ່າ ແມ່ນອົງການປົກຄອງທ້ອງຖິ່ນ ຫຼື ສູນກາງ ເປັນຜູ້ປະກາດ ຕາມການສະເໜີຂອງຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ແລະ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດແຕ່ລະຂັ້ນ ຕາມກໍລະນີ ດັ່ງນີ້:

- ຖ້າຫາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນເປັນຜູ້ປະກາດເຂດຄວບຄຸມການລະບາດຂອງພະຍາດສັດປ່າ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນນັ້ນ ເປັນຜູ້ປະກາດຍົກເລີກ;
- ຖ້າຫາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ປະກາດເຂດຄວບຄຸມການລະບາດຂອງພະຍາດສັດປ່າ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງນັ້ນ ເປັນຜູ້ປະກາດຍົກເລີກ;
- ຖ້າຫາກນາຍົກລັດຖະມົນຕີ ຫຼື ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ປະກາດເຂດຄວບຄຸມການລະບາດຂອງພະຍາດສັດປ່າ ໃຫ້ນາຍົກລັດຖະມົນຕີ ຫຼື ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ປະກາດຍົກເລີກ.

**ຂັ້ນຕອນທີ 8: ການສືບຕໍ່ຕິດຕາມເຫດການລະບາດຂອງພະຍາດ**

ພາຍຫຼັງທີ່ມີການປະກາດຍົກເລີກເຂດລະບາດ ຢ່າງເປັນທາງການແລ້ວ ໃຫ້ຄະນະສະເພາະກິດ ຄວບຄຸມການລະບາດຂອງພະຍາດສັດປ່າ ຈັດກອງປະຊຸມຖອດຖອນບົດຮຽນ, ຈາກນັ້ນ ມອບໝາຍໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ສືບຕໍ່ຕິດຕາມເຝົ້າລະວັງພະຍາດຕາມລະບົບປົກກະຕິ ເພາະວ່າ ການສືບຕໍ່ເຝົ້າລະວັງສາມາດຊ່ວຍປ້ອງກັນການລະບາດໃຫຍ່ ຫຼື ການສົ່ງຕໍ່ເຊື້ອພະຍາດລະຫວ່າງ ສັດປ່າ-ສັດລ້ຽງ-ຄົນ ພ້ອມທັງສະໜອງຂໍ້ມູນທີ່ສຳຄັນໃຫ້ແກ່ການກຳນົດບູລິມະສິດ ໃນການຕິດຕາມ ແລະ ສຶກສາຄົ້ນຄວ້າໃນຕໍ່ໜ້າອີກດ້ວຍ.

## 4. ມາດຕະຖານຂັ້ນຕອນການປະຕິບັດ ການຄຸ້ມຄອງຖານຂໍ້ມູນພະຍາດສັດປ່າ

### 4.1 ຈຸດປະສົງ

ຈຸດປະສົງຂອງຂັ້ນຕອນນີ້ ແມ່ນເພື່ອກຳນົດຜູ້ຈັດຕັ້ງປະຕິບັດ ແລະ ໜ້າທີ່ຄວາມຮັບຜິດຊອບ ໃນການຄຸ້ມຄອງຂໍ້ມູນ ເຫດການພະຍາດສັດປ່າ ໃນຖານຂໍ້ມູນ ເຝົ້າລະວັງພະຍາດສັດປ່າ ‘WHIP’.

### 4.2 ເປົ້າໝາຍການນຳໃຊ້

ນຳໃຊ້ສຳລັບພະນັກງານ ຜູ້ທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບໃນການຄຸ້ມຄອງຖານຂໍ້ມູນ ເຝົ້າລະວັງພະຍາດສັດປ່າ WHIP.

### 4.3 ໜ່ວຍງານຈັດຕັ້ງປະຕິບັດ

ຜູ້ຄຸ້ມຄອງຖານຂໍ້ມູນ ການເຝົ້າລະວັງພະຍາດສັດປ່າແມ່ນ ພະນັກງານຂອງສູນວິໄຈພະຍາດສັດ ທີ່ຖືກແຕ່ງຕັ້ງຈາກ ກົມລ້ຽງສັດ ແລະ ການປະມົງ ແລະ ພະນັກງານເຄືອຂ່າຍສຸຂະພາບສັດປ່າ, ອົງການອະນຸລັກສັດປ່າ ທີ່ຜ່ານການຝຶກອົບຮົມ ໃນການປ້ອນຂໍ້ມູນ WHIP.

### 4.4 ໜ້າທີ່ຮັບຜິດຊອບຂອງໜ່ວຍງານຈັດຕັ້ງປະຕິບັດ

- ປ້ອນຂໍ້ມູນລົງໃນຖານຂໍ້ມູນ WHIP ໂດຍຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ;

- ວິເຄາະຂໍ້ມູນ, ປະເມີນຄວາມສ່ຽງ ແລະ ລາຍງານ;
- ສະໜອງຂໍ້ມູນຜົນໄດຮັບຈາກການວິເຄາະ ໃນຖານຂໍ້ມູນ WHIP ໃຫ້ສູນວິໄຈພະຍາດສັດ, ພະແນກສັດຕະວະແພດ ກົມລ້ຽງສັດ ແລະ ການປະມົງ ແລະ ພາກສ່ວນກ່ຽວຂ້ອງ ຕາມການຕົກລົງເຫັນດີຂອງ ກົມລ້ຽງສັດ ແລະ ການປະມົງ;
- ຮັກສາຄວາມລັບ;
- ເຂົ້າຮ່ວມ ແລະ ໃຫ້ການຝຶກອົບຮົມ ດ້ານວິຊາການທີ່ກ່ຽວຂ້ອງກັບການຄຸ້ມຄອງຂໍ້ມູນ WHIP ແລະ ການເຝົ້າລະວັງພະຍາດສັດປ່າ ເພື່ອສ້າງຄວາມອາດສາມາດໃຫ້ແກ່ຂະແໜງການ.

### 4.5 ຂັ້ນຕອນການປະຕິບັດ ການຄຸ້ມຄອງຖານຂໍ້ມູນເຝົ້າລະວັງພະຍາດສັດປ່າ 'WHIP'

**ຂັ້ນຕອນທີ 1: ການປ້ອນ ແລະ ເກັບຮັກສາຂໍ້ມູນພະຍາດສັດປ່າ**

ປ້ອນຂໍ້ມູນກ່ຽວກັບເຫດການ, ການເກັບຕົວຢ່າງ ຕາມເອກະສານຊ້ອນທ້າຍ 01 ແລະ 02 ແລະ ຜົນການວິໄຈຕົວຢ່າງຈາກຫ້ອງວິໄຈ ລົງໃນຖານຂໍ້ມູນ WHIP ໃຫ້ທັນຕາມກຳນົດເວລາ ໂດຍປະຕິບັດຕາມ ຄູ່ມືການນຳໃຊ້ຖານຂໍ້ມູນ WHIP.

**ຂັ້ນຕອນທີ 2: ການວິເຄາະຂໍ້ມູນ ຈາກຖານຂໍ້ມູນ WHIP**

ຜູ້ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ ວິເຄາະຂໍ້ມູນ ຕ້ອງໄດ້ຕິດຕາມ ການລາຍງານເຫດການຈາກພາກສະໜາມ, ເຮັດການວິເຄາະຂໍ້ມູນເປັນແຕ່ລະໄລຍະ ແລະ ລາຍງານຕາມລຳດັບເຫດການ ເພື່ອວິເຄາະໃຫ້ເຫັນເຖິງກຳລະນີການເພີ່ມຂຶ້ນ ຂອງອັດຕາການເກີດຂຶ້ນຂອງພະຍາດ ຫຼື ຄົ້ນຫາຄວາມເປັນໄປໄດ້ກ່ຽວກັບການອຸບັດຂຶ້ນຂອງພະຍາດໃດໜຶ່ງ ໂດຍປະຕິບັດຕາມຄູ່ມືແນະນຳຂອງ WHIP.

ໜ່ວຍງານຄຸ້ມຄອງຂໍ້ມູນ ຕ້ອງສ້າງບົດລາຍງານປະຈຳໄຕມາດ ແລະ ແລກປ່ຽນຂໍ້ມູນຂ່າວສານ ກັບບັນດາພະແນກການທີ່ກ່ຽວຂ້ອງຂອງ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ພະແນກການກ່ຽວຂ້ອງພາຍໃນເຄືອຂ່າຍ ຢ່າງເປັນປົກກະຕິ.

**ຂັ້ນຕອນທີ 3: ການລາຍງານ**

ສູນວິໄຈພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ ເປັນຜູ້ກະກຽມບົດລາຍງານປະຈຳໄຕມາດ ຫຼື ປະຈຳເດືອນ ແລະ ອື່ນໆ ຕາມຄວາມຈຳເປັນ, ກ່ຽວກັບການຄົ້ນພົບເຫດການພະຍາດສັດປ່າ ແລະ ຜົນການວິໄຈຕົວຢ່າງ ເພື່ອລາຍງານ ຄະນະກຳມະການເຝົ້າລະວັງພະຍາດສັດປ່າ ແລະ ຂະແໜງການກ່ຽວຂ້ອງພາຍໃນເຄືອຂ່າຍ.

## ພາກທີ 3
## ການຮ່ວມມື ແລະ ປະສານງານ

ຄະນະກຳມະການ ເຝົ້າລະວັງພະຍາດສັດປ່າ ແຫ່ງຊາດ ຈະເປັນເຈົ້າການປະສານງານ ແລະ ຮ່ວມມືກັບຂະແໜງການກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ ການຈັດຕັ້ງປະຕິບັດມາດຕະຖານສະບັບນີ້, ເປັນຜູ້ຂົນຂວາຍຫາແຫຼ່ງທຶນສະໜັບສະໜູນ ຈາກອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ພ້ອມທັງ ໃຫ້ການຮ່ວມມືດ້ານວິຊາການ ໃນການພັດທະນາລະບົບເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດສັດປ່າ ໃຫ້ມີປະສິດທິພາບ ແນໃສ່ປະຕິບັດພັນທະສາກົນທີ່ ສປປ ລາວ ເປັນພາຄີ.

# ເອກະສານອ້າງອີງ


ມາດຕະຖານຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າສະບັບນີ້ ສ້າງຂຶ້ນ ໂດຍອີງໃສ່:

1. ກົນໄກການປະສານງານລະຫວ່າງແຜນງານສຸຂະພາບສັດ ແລະ ແຜນງານສຸຂະພາບຄົນ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ຈາກສັດສູ່ຄົນ ປີ 2011;
2. ບົດບັນທຶກຄວາມເຂົ້າໃຈ ໂຄງການພັດທະນາເຄືອຂ່າຍ ການເຝົ້າລະວັງພະຍາດສັດປ່າ ລະຫວ່າງ ລັດຖະບານ ສປປ ລາວ ແລະ ອົງການອະນຸລັກສັດປ່າ ປະຈໍາ ສປປ ລາວ 'WildHealthNet Project' ປີ 2019;
3. ມາດຕະຖານ ຂັ້ນຕອນການປະຕິບັດ ໃນການໂຕ້ຕອບກັບພະຍາດໄຂ້ຫວັດສັດປີກ (ສະບັບປັບປຸງ), ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້ ປີ 2019;
4. OIE Wildlife Health Framework, World Health Organisation for Animal Health. 2020;
5. World Organisation for Animal Health (OIE). Training manual on surveillance and international reporting of diseases in wild animals (Focal Point Manual). 2nd OIE Training Workshop for Focal Points on Wildlife. 2015;
6. World Organisation for Animal Health (OIE). Guidelines for Terrestrial Animal Health Surveillance (GTAHS). 2014;
7. PREDICT Consortium. PREDICT Standard Operating Procedures for One Health Surveillance. One Health Institute, University of California, Davis, April 2020;
8. Guberti, V., Khomenko, S., Masiulis, M. & Kerba S. 2019. African swine fever in wild boar ecology and biosecurity. FAO Animal Production and Health Manual No. 22. Rome, FAO, OIE and EC;
9. Beltrán-Alcrudo, D., Arias, M., Gallardo, C., Kramer, S. & Penrith, M.L. 2017. African swine fever: detection and diagnosis – A manual for veterinarians. FAO Animal Production and Health Manual No. 19. Rome. Food and Agriculture Organization of the United Nations (FAO). 88 pages.

## ເອກະສານຊ້ອນທ້າຍ:

ເອກະສານຊ້ອນທ້າຍ 01: ແບບພິມບັນທຶກ ເຫດການສັດປ່າເຈັບ ແລະ ຕາຍ;
ເອກະສານຊ້ອນທ້າຍ 02: ແບບພິມບັນທຶກ ການເກັບຕົວຢ່າງຈາກສັດປ່າ;
ເອກະສານຊ້ອນທ້າຍ 03: ແບບພິມບັນທຶກ ແລະ ຂັ້ນຕອນປະຕິບັດການຜ່າຊາກສັດ;
ເອກະສານຊ້ອນທ້າຍ 04: ວິທີແນະນຳ ການສວມໃສ່ອຸປະກອນປ້ອງກັນຕົນເອງ (PPE).

## ເອກະສານຊ້ອນທ້າຍ 01: ແບບພິມບັນທຶກເຫດການສັດປ່າເຈັບ ແລະ ຕາຍ

| **ການລາຍງານເບື້ອງຕົ້ນ** | |
|---|---|
| ຊື່ຜູ້ລາຍງານ ຫຼື ຜູ້ສັງເກດ: | ວັນທີ: |
| ໜ່ວຍງານສັງກັດ: | ເບີໂທ: |
| ສະຖານທີ່ ພົບເຫດການ: | ຈຸດພິກັດ **GPS:** |
| ປະເພດຂອງພື້ນທີ່, ການນຳໃຊ້ທີ່ດິນ ຫຼື ສິ່ງອຳນວຍຄວາມສະດວກອື່ນໆ: | |
| ເປັນສັດປ່າທີ່ໄດ້ຮັບບາດເຈັບ/ຕາຍ ຈາກການຖືກລ່າ/ຖືກແຮ້ວ ຫຼື ບໍ່**?** □ ແມ່ນ □ ບໍ່ | |
| ວັນທີ, ເດືອນ, ປີ ທີ່ພົບສັດປ່າເຈັບ ຫຼື ຕາຍ ມື້ທຳອິດ: | |
| ຈຳນວນສັດປ່າ ທີ່ພົບໃນເຫດການທັງໝົດ (ໃນແຕ່ລະຊະນິດ):<br>***ຕົວຢ່າງ: ກວາງ 94 ໂຕ, ໝູປ່າ 6 ໂຕ*** | |
| ລາຍການຂອງສັດປ່າເຈັບ ຫຼື ຕາຍ ທີ່ພົບ: | |

| ລະຫັດ ໂຕສັດ | ຊະນິດສັດ | ປ່ອຍ ຫຼື ຕາຍ | ສະພາບສັດປ່າ (ຕາຍໃໝ່, ເລີ່ມເນົ່າ, ກຳລັງຍ່ອຍສະຫຼາຍ, ຍ່ອຍສະຫຼາຍສົມບູນເຫຼືອແຕ່ກະດູກ) | ອາຍຸ (ແລກເກີດ/ໂຕໜຸ່ມ/ໂຕເຕັມໄວ) | ເພດ (ຜູ້/ແມ່/ບໍ່ຮູ້) | ໄດ້ຖ່າຍຮູບບໍ່? |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |

**ຖ້າເປັນສັດເຈັບ/ຍັງມີຊີວິດ, ໃຫ້ອະທິບາຍອາການ ທີ່ມັນສະແດງອອກ** (ອະທິບາຍພຶດຕິກຳ):

**ຖ້າເປັນສັດຕາຍ, ໃຫ້ອະທິບາຍຮ່ອງຮອຍທີ່ພົບຕາມໂຕສັດ** (ຮອຍ/ບາດແຜຖືກກັດຈາກສັດນັກລ່າ, ອື່ນໆ):

**ສະພາບພື້ນທີ່ອ້ອມຂ້າງ ຫຼື ຮ່ອງຮອຍທີ່ປະກົດ:** (ປະເພດພື້ນທີ່, ການນຳໃຊ້ທີ່ດິນ, ກິດຈະກຳຂອງຄົນ, ສັດລ້ຽງ, ລະດູການປູກພືດ, ຮ່ອງຮອຍການຕໍ່ສູ້, ມົນລະພິດ/ສານເຄມີ ຫຼື ການສັງເກດເຫັນສິ່ງຜິດປົກກະຕິອື່ນໆ):

**ຂໍ້ມູນອື່ນໆທີ່ກ່ຽວຂ້ອງ** (ສະພາບອາກາດ, ເຫດການຜິດປົກກະຕິເກີດຂຶ້ນກ່ອນໜ້ານີ້ໆມານີ້, ຂໍ້ມູນການລາຍງານຈາກປະຊາຊົນທ້ອງຖິ່ນ, ການລາຍງານກ່ຽວກັບສັດລ້ຽງ ແລະ ຄົນ):

| **ຂໍ້ມູນເພີ່ມເຕີມ, ສຳລັບກໍລະນີສັດປ່າໃນສະຖານທີ່ຈຳກັດບໍລິເວນ (ສວນສັດ, ສູນຊ່ວຍເຫຼືອສັດ...)** |
| --- |
| ປະຫວັດຂອງສັດ (ທີ່ມາຂອງສັດ, ບັນຫາ/ພະຍາດທີ່ຜ່ານມາຂອງສັດ): |
| ອາຫານ, ແຫຼ່ງອາຫານ ແລະ ແຫຼ່ງນໍ້າ: |
| ສະພາບສະຖານທີ່ສັດປ່າອາໄສຢູ່ (ການຖ່າຍເທຂອງອາກາດ, ພື້ນຄອກສັດ, ປະເພດຄອກສັດ, ຄວາມໜາແໜ້ນຂອງຈຳນວນສັດໃນຄອກ): |
| ການປະເຊີນໜ້າກັບສັດປ່າອື່ນໆ: |
| ການປະເຊີນໜ້າກັບຜູ້ເບິ່ງແຍງສັດ: |
| ການປ່ຽນແປງການຈັດການຄຸ້ມຄອງສັດ ຫຼື ຄວາມສ່ຽງໃດໜຶ່ງທີ່ອາດຈະເກີດຂຶ້ນ: |

**ໝາຍເຫດ**: ຖ້າຫາກມີການເກັບຕົວຢ່າງຈາກເຫດການນີ້ ໃຫ້ຕື່ມຂໍ້ມູນໃສ່ ແບບພິມບັນທຶກຂໍ້ມູນການເກັບຕົວຢ່າງ ຕາມເອກະສານຊ້ອນທ້າຍ 02.

**ເອກະສານຊ້ອນທ້າຍ 02: ແບບພິມບັນທຶກການເກັບຕົວຢ່າງສັດປ່າ**

## ແບບພິມບັນທຶກ ການເກັບຕົວຢ່າງສັດປ່າ

ວັນທີເກັບຕົວຢ່າງ:______________________________ ສະຖານທີ່ເກັບຕົວຢ່າງ: _______________________ ຈຸດພິກັດ GPS: _____________________________

ຜູ້ເກັບຕົວຢ່າງ: _________________________________ຜູ້ບັນທຶກຂໍ້ມູນ: _________________________________

ໜ່ວຍງານສັງກັດ: ______________________________________________ ເບີໂທ: __________________________________

| ຊະນິດສັດ | ລະຫັດ ໂຕສັດ | ເພດ | ອາຍຸ | ນໍ້າໜັກ | ຂະໜາດ (ຄວາມຍາວ ໂຕສັດ HB, ຄວາມ ຍາວຫາງ T…) | ແຂງແຮງ/ ເຈັບ/ຕາຍ | ຊາກສັດ ຖືກນໍາ ກັບມາບໍ່? | ໄດ້ເຮັດການຜ່າ ຊາກສັດຢູ່ພາກ ສະໜາມບໍ່? | ນໍ້າຢ່ຽວ "U" | ສະວັບ ຜົ້ງປາກ | ສະວັບຮູ ທະວານ | ອາຈົມ | ຖ່າຍຮູບ/ ວິດີໂອ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |

## ເອກະສານຊ້ອນທ້າຍ 03: ແບບພິມບັນທຶກ ແລະ ຂັ້ນຕອນປະຕິບັດການຜ່າຊາກສັດ

| | |
|---|---|
| **ໜ່ວຍງານສັງກັດ:** | |
| **ຜູ້ດຳເນີນການຜ່າຊາກສັດ:** | |

# ແບບພິມບັນທຶກ ແລະ ຂັ້ນຕອນປະຕິບັດການຜ່າຊາກສັດ

<table>
<tr><th colspan="5">ຂໍ້ມູນເຫດການ</th></tr>
<tr><td colspan="5">ວັນທີ ພົບເຫດການ:</td></tr>
<tr><td colspan="5">ສະຖານທີ່ ພົບເຫດການ:</td></tr>
<tr><td colspan="5">ສະຖານທີ່ ຜ່າຊາກສັດ:</td></tr>
<tr><td>ວັນທີ ຜ່າຊາກສັດ:</td><td colspan="4">ໄລຍະເວລາຜ່າຊາກສັດ:</td></tr>
<tr><td>ການເກັບຮັກສາຊາກສັດ (ກ່ອນການຜ່າຊາກ):</td><td>☐ ພາຍນອກທົ່ວໄປ</td><td>☐ ຕູ້ເຢັນ</td><td>☐ ຖັງນ້ຳກ້ອນ</td><td>☐ ຕູ້ແຊ່ແຂງ</td></tr>
<tr><td colspan="2">ເປັນເຫດການສັດປ່າຕາຍເປັນຈຳນວນຫຼາຍ ຫຼື ບໍ່?: ☐ ແມ່ນ ☐ ບໍ່ແມ່ນ</td><td colspan="3">ຈຳນວນສັດປ່າຕາຍ (ຖ້າແມ່ນ):</td></tr>
</table>

**ໝາຍເຫດ:** ຖ້າເປັນການຜ່າຊາກຈຳນວນຫຼາຍໂຕ ໃນເຫດການດຽວກັນທີ່ມີການຕາຍຂອງສັດປ່າເປັນຈຳນວນຫຼາຍ, ໃຫ້ບັນທຶກຂໍ້ມູນກ່ຽວກັບເຫດການພຽງແຕ່ຄັ້ງດຽວ ແລະ ໃຫ້ຂຽນລະຫັດຂອງເຫດການດັ່ງກ່າວ ລົງໃນແບບພິມຜ່າຊາກສັດໂຕຕໍ່ໆໄປ.

<table>
<tr><th colspan="5">ຂໍ້ມູນຂອງສັດ</th></tr>
<tr><td colspan="5">ລະຫັດໝາຍໂຕສັດ:</td></tr>
<tr><td colspan="5">ຊະນິດສັດ:</td></tr>
<tr><td colspan="5">ຈຸດພິກັດ GPS:</td></tr>
<tr><td colspan="3">ວັນທີ ສັດປ່າຕາຍ (ຖ້າຮູ້):</td><td colspan="2">ເວລາ ສັດຕາຍ (ຖ້າຮູ້):</td></tr>
<tr><td colspan="3">ວັນທີ ເກັບຊາກສັດຖືກ:</td><td colspan="2">ເວລາ ເກັບຊາກສັດ:</td></tr>
<tr><td>ສະພາບຊາກສັດ:</td><td>☐ ຕາຍໃໝ່</td><td>☐ ຊາກເລີ່ມໄຄ່ເບັ່ງ</td><td>☐ ຊາກເນົ່າ</td><td>☐ ຊາກເຫຼືອໜັງຕິດກະດູກ</td></tr>
<tr><td>ເພດ:</td><td></td><td>☐ ຜູ້</td><td>☐ ແມ່</td><td>☐ ບໍ່ສາມາດຈຳແນກ</td></tr>
<tr><td>ອາຍຸ:</td><td>☐ ແລກເກີດ (ມື້)</td><td>☐ ຍັງນ້ອຍ (ອາທິດ/ເດືອນ)</td><td>☐ ໂຕໜຸ່ມ</td><td>☐ ໂຕເຖົ້າ</td></tr>
</table>

<table>
<tr><th colspan="5">ປະຫວັດຂອງສັດ</th></tr>
<tr><td colspan="5">ສາເຫດທີ່ເຮັດໃຫ້ສັດຕາຍ (ຕິກເອົາ 1 ຄຳຕອບ):</td></tr>
<tr><td>☐ ຖືກສັດອື່ນລ່າ</td><td>☐ ພະຍາດ</td><td>☐ ການກະທຳຂອງຄົນ</td><td>☐ ອຸບັດຕິເຫດ</td><td>☐ ບໍ່ສາມາດຮູ້ໄດ້</td></tr>
<tr><td colspan="5">ການກະທຳຂອງຄົນ ເປັນສາເຫດເຮັດໃຫ້ສັດຕາຍ (ຂີດອ້ອມເອົາໂຕທີ່ກ່ຽວຂ້ອງ):</td></tr>
<tr><td>□ ການວາງຢາໃຫ້ສັດຕາຍໂດຍບໍ່ທໍລະມານ</td><td>□ ການປ້ອງກັນ ຫຼື ຄວບຄຸມພຶດຕິກຳຮ້າຍຂອງສັດ</td><td>□ ການລັກລອບລ່າສັດ</td><td></td><td>□ ຖືກປືນຍິງ</td></tr>
</table>

| | | | |
|---|---|---|---|
| □ ຖືກແຮ້ວ | □ ທາດເບື່ອ ຫຼື ສານພິດ | □ ຖືກບາດເຈັບຈາກຍານພະຫະນະ | □ ອື່ນໆ |
| **ປະຫວັດອື່ນຂອງສັດທີ່ຮູ້:** | | | |
| **ຮ່ອງຮອຍສະພາບພື້ນທີ່ອ້ອມຂ້າງ:** *(ຮ່ອງຮອຍການຕໍ່ສູ້, ຮ່ອງຮອຍສະພາບອາກາດເຊັ່ນ: ຟ້າຜ່າ ຫຼື ນ້ຳຖ້ວມ, ຮ່ອງຮອຍຊັກດີ້ນ/ດຶງລາກ, ເຄື່ອງມື/ເສດອຸປະກອນ/ຫຼັກຖານອື່ນໆ ທີ່ພົບເຫັນຢູ່ບໍລິເວນໃກ້ກັບສັດຕາຍ ຫຼື ຫຼັກຖານມີນລະພິດທາງເຄມີ ຫຼື ທາດເບື່ອ)* | | | |

| **ການກວດກາຊາກສັດດ້ວຍຕາເປົ່າ *(GROSS NECROPSY EXAMINATION)*** |
|---|
| *ນຳໃຊ້ບ່ອນວ່າງລຸ່ມນີ້ ໃນການບັນທຶກຂໍ້ມູນ ຂະໜາດ, ຮູບຮ່າງ, ສີ, ຄວາມສະໝໍ່າສະເໝີ/ໂຄງສ້າງຂອງອະໄວຍະວະ ທີ່ໄດ້ຈາກການກວດກາ; ລວມທັງຈຸດ, ຈຳນວນ ແລະ ການກະຈາຍ ຂອງສິ່ງຜິດປົກກະຕິໃດໜຶ່ງ ທີ່ພົບເຫັນ.*<br>*ຖ່າຍຮູບເອົາທຸກຢ່າງ ທີ່ເຫັນວ່າຜິດປົກກະຕິ ຖ້າລະບົບ ທີ່ກວດກາແລ້ວ ເຫັນປົກກະຕິ ໃຫ້ຂຽນ NGL (no gross esions).*<br>*ຖ້າບໍ່ພົບເຫັນ ໃຫ້ຂຽນ NF (not found)* |

| **ການກວດກາພາຍນອກໂຕສັດ** | | | | |
|---|---|---|---|---|
| *ດຳເນີນການກວດກາ ຕາມຮ່າງກາຍພາຍນອກຂອງໂຕສັດ*<br>□ *ເກັບຕົວຢ່າງສະວັບຜົ້ງປາກ ແລະ ຮູທະວານ*<br>□ *ຖ່າຍຮູບ* | | | | |
| **ຮ່ອງຮອຍຕາມໂຕສັດ:** *(ອະທິບາຍໂດຍຫຍໍ້ກ່ຽວກັບອາການທາງຄຣີນິກ, ບາດແຜ, ກະດູກຫັກ, ແມ່ກາຝາກທາງນອກ, ກ້ອນຊີ້ນປົ່ງ, ລວມທັງການປ່ຽນແປງທາງດ້ານໂຄງສ້າງຮ່າງກາຍ ທີ່ເປັນສາເຫດອາດມາຈາກການກະທຳຂອງຄົນ ຢູ່ຕາມຫົວ/ອະໄວຍະວະປ້ອງກັນຕົນເອງ (ໄຫຼ່), ໜັງ/ຂົນ ຫຼື ຕາມຮ່າງກາຍສັດ):* | | | | |
| **ສະພາບຊາກສັດ** (ໝາຍຕິກ): | □ ຕາຍໃໝ່ | □ ເລີ່ມເນົ່າ | □ ເນົ່າເປື່ອຍ | □ ເຫຼືອແຕ່ຊາກກະດູກ |
| **ຄວາມຍາວ** (cm): | | **ນ້ຳໜັກ** (kg): | | |
| **ສະພາບໂພສະນາການຂອງສັດ** (*ໝາຍຕິກເອົາຄຳຕອບທີ່ເໝາະສົມ* ): | | | | |
| **ໄຂມັນກ້ອງຊັ້ນຜິວໜັງ:** | □ ຕຸ້ຍຫຼາຍ | □ ປົກກະຕິ | □ ເກືອບບໍ່ມີໄຂມັນ | |
| **ມວນກ້າມຊີ້ນ:** | □ ປົກກະຕິ | □ ຈ່ອຍ | □ ບາງລີບ | |
| **ຜົ້ງດັງ** *(ມີນ້ຳຂັບລັ່ງໄຫຼອອກມາ):* | | | | |
| **ຫູ** (*ມີນ້ຳຂັບລັ່ງໄຫຼອອກມາ, ບາດແຜ* ): | | | | |
| **ຕາ** *(ມີນ້ຳຂັບລັ່ງໄຫຼອອກມາ, ແກ້ວຕາໃສດີ ຫຼື ຂຸ່ນມົວ):* | | | | |
| **ປາກ** *(ລີ້ນ, ສະພາບແຂ້ວ, ບາດແຜ ຫຼື ຕຸ່ມຜິດປົກກະຕິອື່ນໆ):* | | | | |

| | |
|---|---|
| **ໜັງ/ຂົນ/ເລັບ** *(ສີ, ສະພາບ):* | |
| **ບາດແຜ/ຮອຍແປ້ວ** *(ຈຸດຂອງບາດແຜ, ຂະໜາດ, ຄວາມເລິກ, ມີຮອຍຊໍ້າ/ເລືອດບໍລິເວນອ້ອມຮອບບາດແຜ):* | |
| **ແມ່ກາຝາກພາຍນອກ** *(ຈຸດ, ປະເພດ, ຈຳນວນ ຫຼື ຈຳນວນຈາກການປະເມີນ):* | |
| **ເສັ້ນຮູທະວານທາອະໄວຍະວະເພດ:** | |
| **ລະບົບໂຄງສ້າງຮ່າງກາຍ** | |
| *ປາດຂໍ້ຕໍ່ກົກຂາໜ້າ ແລະ ຂາຫຼັງ*<br>*ປາດຂໍ້ຕໍ່ສະໂພກ*<br>*ລອກໜັງ*<br>*ເກັບຕົວຢ່າງ ຕາ, ໜັງ, ກ້າມຊີ້ນ, ເສັ້ນປະສາດກົກຂາໂຕ້, ໄຂກະດູກ*<br>□ *ຖ່າຍຮູບ* |    |
| **ລະບົບກ້າມຊີ້ນ ແລະ ໂຄງກະດູກ** *(ກວດກາໂຄງກະດູກ ແລະ ກ້າມຊີ້ນ ເບິ່ງການແຕກຫັກ, ການຫຼຸດໂບກ, ຂໍ້ອັກເສບ, ການເຊື່ອມຕໍ່ຂອງຂໍ້ຕໍ່, ກ້າມຊີ້ນຫົດລີບ ແລະ ມີການກະທົບກະແທກ):* | |
| *ຈາກນັ້ນ, ດຳເນີນການຜ່າເປີດຜົ້ງທ້ອງ, ຜົ້ງເອິກ ແລະ ເຍື່ອຫຸ້ມຫົວໃຈ*<br>□ *ຖ່າຍຮູບ* |    |
| **ຜົ້ງລຳໂຕ** *ກວດກາຜົ້ງເອິກ, ເຍື່ອຫຸ້ມຫົວໃຈ, ທາດແຫຼວໃນຜົ້ງທ້ອງ, ຮ່ອງຮອຍຈາກການກະທົບກະແທກ ແລະ ສິ່ງຜິດປົກກະຕິອື່ນໆ:* | |
| *ຍົກອະໄວຍະວະພາຍໃນອອກ ແລະ ກວດກາ*<br>*ເກັບຕົວຢ່າງຕ່ອມໄທລອຍ, ຫົວໃຈ, ລີ້ນ, ຫຼອດອາຫານ, ຫຼອດລົມ ແລະ ຕົວຢ່າງປອດ*<br>□ *ຖ່າຍຮູບ* |     |

<table>
<tr><td colspan="2">ລະບົບການໝູນວຽນຂອງເລືອດ (ຫົວໃຈ, ລີ້ນຫົວໃຈ, ເສັ້ນເລືອດ):</td></tr>
<tr><td colspan="2">ລະບົບທາງເດີນຫາຍໃຈ ຫຼອດສຽງ, ຫຼອດລົມ, ທໍ່ລົມ, ປອດ (ກວດກາພາຍນອກ ແລະ ທາງໃນຫລັງຈາກການຕັດ):</td></tr>
<tr><td colspan="2">ລະບົບຕ່ອມນໍ້າເຫຼືອງ (ມ້າມ, ຕ່ອມອາມິດານ, ຕ່ອມລູກໝູຕ່າງໆ ທີ່ຢູ່ທັງສອງຂ້າງຫຼອດລົມ, ຕາມລໍາໄສ້, ຕາມຜົ້ງຮ່າງກາຍທັງ 2 ຂ້າງ, ຕາມແກນຮ່າງກາຍຂາໜີບຕ່າງໆ ແລະ ອື່ນໆ):</td></tr>
<tr><td>ຍົກລະບົບທາງເດີນອາຫານອອກ ແລະ ກວດກາເບິ່ງລະບົບ ແລະ ຕັບ<br>ເກັບຕົວຢ່າງ ຕັບ, ຖົງນໍ້າບີ, ກະເພາະອາຫານ, ຕັບອ່ອນ<br>ຜ່າເປີດ ແລະ ກວດກາເບິ່ງລໍາໄສ້<br>ເກັບຕົວຢາງ ລໍາໄສ້ນ້ອຍ, ລໍາໄສ້ໃຫຍ່, ມ້າມ<br>□ ຖ່າຍຮູບ</td><td>   </td></tr>
<tr><td colspan="2">ລະບົບທາງເດີນອາຫານ (ຫຼອດອາຫານ, ກະເພາະອາຫານ, ລໍາໄສ້, ອາຈົມ, ຕັບອ່ອນ, ຕັບ, ຖົງນໍ້າບີ, ກະລຸນາບັນທຶກປະລິມານ ແລະ ປະເພດຂອງອາຫານທີ່ພົບຢູ່ໃນກະເພາະ ແລະ ການພົບເຫັນວັດຖຸສິ່ງຂອງຜິດປົກກະຕິອື່ນໆ):</td></tr>
<tr><td>ກວດກາ ແລະ ເກັບຕົວຢ່າງໝາກໄຂ່ຫລັງ, ຕ່ອມໝວກໄຕ, ທໍ່ໝາກໄຂ່ຫລັງ, ພົກຍ່ຽວ ແລະ ທໍ່ສົ່ງນໍ້າຍ່ຽວ<br><br>□ ຖ່າຍຮູບ</td><td> </td></tr>
<tr><td colspan="2">ລະບົບຂັບຖ່າຍປັດສະວະ (ໝາກໄຂ່ຫຼັງ, ທໍ່ສົ່ງນໍ້າຍ່ຽວທັ້ງພາຍໃນ ແລະ ພາຍນອກ):</td></tr>
<tr><td>ກວດກາ ແລະ ເກັບຕົວຢ່າງອະໄວຍະສືບພັນ<br><br>□ ຖ່າຍຮູບ</td><td></td></tr>
</table>

| | |
|---|---|
| **ລະບົບສືບພັນ** *(ຮັງໄຂ່, ໄຂ່ຫໍາ, ມົດລູກ, ການປະກົດມີໂຕອ່ອນ):* | |
| *ຕັດພາກສ່ວນຫົວ ແລະ ລອກໜັງຫົວອອກ, ຕັດເປີດກະໂຫລກຫົວ ແລະ ກວດກາເບິ່ງສະໝອງ*<br>*ເກັບຕົວຢ່າງສະໝອງ ແລະ ຕ່ອມໃຕ້ສະໝອງ*<br>□ *ຖ່າຍຮູບ* |    |
| **ລະບົບເສັ້ນປະສາດ** *(ສະໝອງ, ເສັ້ນປະສາດ, ເສັ້ນປະສາດຮອບນອກ):* | |

| **ການບົ່ງມະຕິສາເຫດການຕາຍເບື້ອງຕົ້ນ:** |
|---|
| |

## ລາຍງານຕົວຢ່າງທີ່ເກັບ (ໃຫ້ໝາຍ ✓ ໃສ່ຕົວຢ່າງທີ່ໄດ້ເກັບ):

**ເນື້ອເຍື້ອ Tissues**

ຕົວຢ່າງຈາກທຸກອະໄວຍະວະພາຍໃນ (ເບິ່ງຕາຕະລາງຂ້າງລຸ່ມ) ☐ ຟໍມາລິນ *10% (buffered formalin)*

| **ຕົວຢ່າງສະວັບ** | ***VTM*** | ***RNA later*** |
|---|---|---|
| ສະວັບຜົ້ງປາກ | ☐ | ☐ |
| ສະວັບຮູທະວານ | ☐ | ☐ |

**ຕົວຢ່າງເລືອດ**

| | |
|---|---|
| ເລືອດໃສ Serum | ☐ ຫຼອດເປົ່າຖຼາຍໂອ |
| ປອດເລືອດ Blood spot | ☐ ເຈ້ຍ filter paper |
| Blood smear | ☐ ແຜ່ນແກ້ວ |

| **ວິເຄາະທາງໂມເລກູນ (Molecular)** | ***ຫຼອດເປົ່າ*** | ***VTM*** | ***RNA later*** |
|---|---|---|---|
| ສະໝອງ Brain | ☐ | ☐ | ☐ |
| ໝາກໄຂ່ຫຼັງ Kidney | ☐ | ☐ | ☐ |
| ຕັບ Liver | ☐ | ☐ | ☐ |
| ປອດ Lung | ☐ | ☐ | ☐ |
| ມ້າມ Spleen | ☐ | ☐ | ☐ |

| **ວິເຄາະ ສານພິດ (Toxicology)** | ***foil*** | ***whirlpak*** |
|---|---|---|
| ເສດອາຫານໃນກະເພາະ | ☐ | ☐ |
| ສະໝອງ Brain | ☐ | ☐ |
| ຕັບ Liver | ☐ | ☐ |
| ໝາກໄຂ່ຫຼັງ Kidney | ☐ | ☐ |

| **Tissue impressions** | ***glass slide*** |
|---|---|
| ຕັບ Liver | ☐ |
| ປອດ Lung | ☐ |
| ມ້າມ Spleen | ☐ |

| **ວິເຄາະພັນທຸກໍາ (Genetic analysis)** | ***70% alcohol*** |
|---|---|
| ໜັງ Skin | ☐ |
| ກ້າມຊີ້ນ Muscle | ☐ |

| **ກາຝາກ (Parasites)** | **70% alcohol** | **ອາຈົມ Feces:** | ☐ empty cryovial |
|---|---|---|---|
| ກາຝາກພາຍໃນຮ່າງກາຍ Endo | ☐ | | ☐ VTM |

| TISSUE | GA | FF | Histo | Cyto | Photo | -20-70 | TISSUE | GA | FF | Histo | Cyto | Photo | -20-70 |
|---|---|---|---|---|---|---|---|---|---|---|---|---|---|
| GENERAL-external | | | | | | | ABDOMEN | | | | | | |
| Oral cavity & teeth | | | | | | | Diaphragm | | | | | | |
| Tonsils | | | | | | | Stomach | | | | | | |
| Skin and nails | | | | | | | Proventriculus | | | | | | |
| Subcutis | | | | | | | Ventriculus | | | | | | |
| Skeletal muscle | | | | | | | Small intestines | | | | | | |
| Peripheral nerves | | | | | | | Large intestines | | | | | | |
| Mammary gland | | | | | | | Pancreas | | | | | | |
| Umbilicus | | | | | | | Spleen | | | | | | |
| **BONES & JOINTS** | | | | | | | Liver & gall bladder | | | | | | |
| Bone marrow (femur) | | | | | | | Lymph nodes | | | | | | |
| Bones | | | | | | | Aorta & vessel | | | | | | |
| Hips | | | | | | | Kidneys | | | | | | |
| Knees | | | | | | | Ureters | | | | | | |
| Tarsi | | | | | | | Urinary bladder | | | | | | |
| Shoulders | | | | | | | Urethra | | | | | | |
| Carpi | | | | | | | Adrenal glands | | | | | | |
| Atlantooccipital | | | | | | | Ovaries | | | | | | |
| **CAVITIES** | | | | | | | Oviduct/Uterus | | | | | | |
| Thoracic cavity | | | | | | | Vagina/vulva | | | | | | |
| Abdominal cavity | | | | | | | Testes | | | | | | |
| **PLUCK** | | | | | | | Access sex gland | | | | | | |
| Tongue | | | | | | | Penis/prepuce | | | | | | |
| Thyroids/parathyroids | | | | | | | **HEAD** | | | | | | |
| Esophagus | | | | | | | Eyes | | | | | | |
| Crop | | | | | | | Ears & bullae | | | | | | |
| Trachea | | | | | | | Skull/nasal cavity | | | | | | |
| Lungs | | | | | | | Brain/Meninges | | | | | | |
| Heart/Pericardial sac | | | | | | | Pituitary gland | | | | | | |
| Aorta & other vessels | | | | | | | **SPINE** | | | | | | |
| Thymus/lymph nodes | | | | | | | Vertebral column | | | | | | |
| | | | | | | | Spinal cord | | | | | | |

**ຄວາມໝາຍສັບຫຍໍ້ ການກວດກາຊິ້ນສ່ວນ ແລະ ລາຍການຕົວຢ່າງ:**

GA =ການກວດກາດ້ວຍຕາເປົ່າ: NGL= no gross lesions (ບໍ່ມີຄວາມຜິດປົກກະຕິ ຈາກການເບິ່ງດ້ວຍຕາເປົ່າ); AB= abnormal (ຜິດປົກກະຕິ); NE= not examined (ບໍ່ໄດ້ກວດກາ); NF= not found (ບໍ່ພົບເຫັນ); NP= not present (ບໍ່ປະກົດເຫັນ).

FF = Tissue fixed in formalin (ຕົວຢ່າງເນື້ອເຍື່ອເກັບຮັກສາໃນສານຟໍມາລິນ)

Histo = Tissue submitted for histology (ຕົວຢ່າງເນື້ອເຍື່ອ ທີ່ຈະສົ່ງໄປສໍາລັບເບິ່ງຄວາມປ່ຽນແປງທາງຈຸລັງວິທະຍາ)

Cyto = Cytology slide prepared (e.g. tissue impression) ‘ແຜ່ນສະໄລທີ່ຖືກເອົາຕົວຢ່າງໃສ່ແລ້ວ (ເຊັ່ນ: ເນື້ອເຍື້ອທີ່ຖືກອັດໜີບໃສ່ແຜ່ນສະໄລໄວ້ແລ້ວ)

PHOTO = Photograph taken (ໄດ້ຖ່າຍຮູບ)

-20/-70 = ບອກຄ່າອຸ່ນຫະພູມ ຂອງການກັບຮັກສາເປັນ -20, -70 ຫຼື ຄ່າອຸນຫະພູມລະດັບອື່ນໆ ທີ່ໃຊ້ເກັບຮັກສາຕົວຢ່າງ.

## ເອກະສານຊ້ອນທ້າຍ 04: ວິທີການສວມໃສ່ອຸປະກອນປ້ອງກັນຕົນເອງ (PPE)

ຊຸດອຸປະກອນປ້ອງກັນຕົນເອງ ແບ່ງອອກເປັນ 2 ປະເພດຄື: ຊຸດອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ແລະ ແບບຄົບຊຸດ

### 1. ຊຸດອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ

ອຸປະກອນປ້ອງກັນຕົນເອງທີ່ຈຳເປັນ ສຳລັບໜ່ວຍງານກວດກາລາດຕະເວນປ່າ ຫຼື ຜູ້ດຳເນີນການກວດກາເບິ່ງອາການພາຍນອກຂອງສັດເຈັບ ຫຼື ຕາຍ, ອາການຂອງພະຍາດ ແລະ ການເກັບຊາກສັດ ຫຼື ເກັບຕົວຢ່າງ ຂັ້ນພື້ນຖານ ປະກອບມີ:

| 1. | 2. | 3. | 4. | 5. |
|---|---|---|---|---|
|  |  |  |  |  |
| ຖົງຫຸ້ມເກີບ ຫຼື ເກີບໂບກຢາງ | ຖົງມືສອງຊັ້ນ ຊ້ອນກັນ | ຜ້າອັດປາກ-ດັງ N95 | ຜ້າຢາງກັນເປື້ອນ | ແວ່ນປ້ອງກັນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ |

<u>ວິທີການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ:</u>

ຊອກຫາສະຖານທີ່ສະອາດ ແລະ ປອດໄພ ໃນການສວມໃສ່ອຸປະກອນປ້ອງກັນຕົນເອງ, ໃຫ້ຫ່າງຈາກຈຸດສັດປ່າເຈັບ ຫຼື ຕາຍ ແລະ ຕ້ອງສວມໃສ່ອຸປະກອນປ້ອງກັນຕົນເອງຢ່າງລະມັດລະວັງ ຕາມລຳດັບ ດັ່ງນີ້:

1. ສວມໃສ່ຖົງຫຸ້ມເກີບ, ຮັບປະກັນບໍ່ໃຫ້ຖົງຫຸ້ມເກີບຈີກຂາດ ຫຼື ຫຼຸດອອກ ໃນຄະນະກຳລັງເກັບຕົວຢ່າງ, ຖ້າບໍ່ມີຖົງຫຸ້ມເກີບ ໃຫ້ໃສ່ເກີບໂບກຢາງທີ່ສາມາດລ້າງທຳຄວາມສະອາດແທນ;
2. ສວມໃສ່ຜ້າຢາງກັນເປື້ອນ ຫຼື ເຄື່ອງນຸ່ງສະເພາະ;
3. ສວມໃສ່ຜ້າອັດປາກ-ດັງ N95, ຕ້ອງໝັ້ນໃຈວ່າຜ້າອັດປາກ-ດັງນັ້ນ ພໍດີກັບຮູບໜ້າຂອງທ່ານ ເພື່ອບໍ່ໃຫ້ມີຊ່ອງວ່າງທີ່ອາກາດ ແລະ ເຊື້ອພະຍາດຢູ່ພາຍນອກສາມາດເຂົ້າໄປໄດ້, ສວມໃສ່ຜ້າອັດປາກ-ດັງຈົນກວ່າທ່ານຈະເຮັດວຽກສຳເລັດ ບໍ່ໃຫ້ດຶງຜ້າປິດປາກ-ດັງ ລົງມາຫ້ອຍໄວ້ຢ຺ູ່ຄໍ ຫຼື ດຶງຂຶ້ນໄວ້ຢູ່ເທິງຫົວຂອງທ່ານ;
4. ສວມໃສ່ແວ່ນປ້ອງກັນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ;
5. ສວມໃສ່ຖົງມືສອງຊັ້ນຊ້ອນກັນ, ຮັບປະກັນບໍ່ໃຫ້ຖົງມືຈີກຂາດ, ຖ້າມີການຈີກຂາດ ໃຫ້ປ່ຽນໃສ່ຖົງມືໂຕໃໝ່ ແລະ ໃຫ້ໃສ່ຖົງມືສອງຊັ້ນທຸກຄັ້ງ.

<u>ວິທີຖອດຊຸດອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ:</u>

ເວລາທີ່ຈະຖອດອຸປະກອນປ້ອງກັນຕົນເອງ, ສິ່ງທີ່ສຳຄັນສຸດຕ້ອງຄຳນຶງວ່າ ທຸກອຸປະກອນທີ່ທ່ານສວມໃສ່ນັ້ນດ້ານນອກມັນອາດປົນເປື້ອນດ້ວຍເຊື້ອພະຍາດ, ໃຫ້ຄິດຢູ່ສະເໝີວ່າທ່ານກຳລັງສຳຜັດກັບຫຍັງ. ກຳນົດເອົາສະຖານທີ່ສະເພາະໃດໜຶ່ງທີ່ຫ່າງໄກຈາກຊາກສັດ ເພື່ອຖອດຊຸດອຸປະກອນປ້ອງກັນຕົນເອງ ແລະ ທຸກຄົນຄວນໄປຖອດຢູ່ສະຖານທີ່ດຽວກັນ. ຫຼັງຈາກຖອດຊຸດອຸປະກອນ (ສຳລັບໃຊ້ພຽງຄັ້ງດຽວ) ທີ່ເປື້ອນອອກແລ້ວ ໃຫ້ເອົາຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍທັນທີ. ການຖອດອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານຕ້ອງປະຕິບັດຕາມລຳດັບ ລຸ່ມນີ້:

1. ຂ້າເຊື້ອຖົງມືຊັ້ນນອກ;
2. ຖອດຜ້າຢາງກັນເປື້ອນ ຫຼື ຊຸດນຸ່ງສະເພາະອອກ, ແລ້ວຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
3. ຖອດຖົງຫຸ້ມເກີບ ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ, ຖ້າທ່ານໃສ່ເກີບໂບກຢາງ ໃຫ້ລ້າງທຳຄວາມສະອາດຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ;
4. ຖອດຖົງມືຊັ້ນນອກອອກ, ຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ;
5. ຖອດແວ່ນຕາປ້ອງກັນ ຫຼື ແຜ່ນຢາງປ້ອງກັນໃບໜ້າ, ລ້າງທຳຄວາມສະອາດແວ່ນຕາດ້ວຍນ້ຳຢາຂ້າເຊື້ອ ແລະ ສາມາດນຳກັບມາໃຊ້ຄືນໃໝ່;
6. ຖອດຜ້າອັດປາກ-ດັງ ໂດຍລະວັງບໍ່ໃຫ້ໄປຖືກພາກສ່ວນໃດຂອງຫົວທ່ານ, ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
7. ຖອດຖົງມືຊັ້ນໃນ ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
8. ປິດປາກຖົງຂີ້ເຫຍື້ອອັນຕະລາຍ;
9. ລ້າງມືດ້ວຍສະບູ ແລະ ຂ້າເຊື້ອດ້ວຍແຜ່ນຢາຂ້າເຊື້ອ ຫຼື ເຈວລ້າງມື.


1.

2.

3.

4.

5.

6.

7.

8.

9.

10

11

12

## 2. ຊຸດອຸປະກອນປ້ອງກັນຕົນເອງ ແບບຄົບຊຸດ

ໃນບາງສະຖານະການ ທີ່ຕ້ອງມີການຈັດການສັດປ່າທີ່ມີຄວາມສ່ຽງສູງ ຫຼື ດໍາເນີນການເກັບຕົວຢ່າງທີ່ມີການສໍາຜັດກັບສັດຫຼາຍພິເສດ ເຊັ່ນ: ການຜ່າຊາກສັດ, ການລົງສືບຄົ້ນເຫດການລະບາດ ແລະ ອື່ນໆ ຊຶ່ງຕ້ອງໄດ້ມີຄວາມປອດໄພດ້ານຊີວະພາບ ລະດັບສູງ, ອຸປະກອນປ້ອງກັນຕົນເອງ ແບບຄົບຊຸດ ປະກອບມີ:

| 1. | 2. | 3. | 4. | 5. | 6. |
|---|---|---|---|---|---|
|  |  |  |   |  |  |
| ຊຸດປົກຄຸມໂຕ | ຖົງຫຸ້ມເກີບ ຫຼື ເກີບໂບກຢາງ | ຜ້າອັດປາກ-ດັງ N95 | ແວ່ນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ | ຜ້າຢາງກັນເປື້ອນ | ຖົງມືສອງຊັ້ນຊ້ອນກັນ |

<u>ວິທີການສວມໃສ່ຊຸດອຸປະກອນປ້ອງກັນຕົນເອງ ແບບຄົບຊຸດ ປະຕິບັດດັ່ງນີ້:</u>

ຊອກຫາສະຖານທີ່ສະອາດ ແລະ ປອດໄພ ໃນການສວມໃສ່ຊຸດອຸປະກອນປ້ອງກັນຕົນເອງ, ໃຫ້ຫ່າງຈາກຈຸດສັດປ່າເຈັບ ຫຼື ຕາຍ ແລະ ຕ້ອງສວມໃສ່ອຸປະກອນປ້ອງກັນຕົນເອງຢ່າງລະມັດລະວັງ ຕາມລໍາດັບດັ່ງນີ້:

1. ທໍາອິດ ສວມໃສ່ຊຸດປົກຄຸມໂຕ;
2. ຕໍ່ມາ ສວມໃສ່ຖົງຫຸ້ມເກີບ ຫຼື ເກີບໂບກ;
3. ສວມໃສ່ຜ້າອັດປາກ-ດັງ N95;
4. ສວມໃສ່ແວ່ນປ້ອງກັນດວງຕາ (ແວ່ນປ້ອງກັນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ) ຫຼັງຈາກໃສ່ຜ້າອັດປາກ-ດັງ;
5. ສວມໃສ່ຜ້າຢາງກັນເປື້ອນ ປົກທັບຊຸດປົກຄຸມໂຕ ຫຼື ຊຸດເກັບຕົວຢ່າງ;
6. ສວມໃສ່ຖົງມືສອງຊັ້ນຊ້ອນກັນ.

<u>ວິທີຖອດຊຸດອຸປະກອນປ້ອງກັນຕົນເອງ ແບບຄົບຊຸດ ປະຕິບັດດັ່ງນີ້:</u>

1. ຂ້າເຊື້ອຖົງມືຊັ້ນນອກ;
2. ຖອດຜ້າຢາງກັນເປື້ອນ ຫຼື ຊຸດນຸ່ງສະເພາະອອກ ແລ້ວຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
3. ຖອດຖົງຫຸ້ມເກີບ ຖິ້ມໃສ່ຖົງຂີ້ເຫຍື້ອ, ຖ້າໃສ່ເກີບໂບກຢາງ ໃຫ້ລ້າງທໍາຄວາມສະອາດດ້ວຍນໍ້າຢາຂ້າເຊື້ອ;
4. ຖອດຖົງມືຊັ້ນນອກອອກ ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
5. ຖອດຊຸດປົກຄຸມໂຕ ໂດຍການມ້ວນຈາກດ້ານໃນໄລ່ລົງລຸ່ມ ແລ້ວຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
6. ຖອດແວ່ນປ້ອງກັນຕາ ຫຼື ແຜ່ນຢາງປ້ອງກັນໃບໜ້າ, ລ້າງທໍາຄວາມສະອາດແວ່ນຕາດ້ວຍນໍ້າຢາຂ້າເຊື້ອ ແລະ ສາມາດນໍາກັບມາໃຊ້ຄືນໃໝ່;
7. ຖອດຜ້າອັດປາກ-ດັງ ໂດຍລະວັງບໍ່ໃຫ້ໄປຖືກພາກສ່ວນໃດຂອງຫົວທ່ານ, ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
8. ຖອດຖົງມືຊັ້ນໃນ ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ;
9. ປິດປາກຖົງຂີ້ເຫຍື້ອອັນຕະລາຍ;
10. ລ້າງມືດ້ວຍສະບູ ແລະ ຂ້າເຊື້ອດ້ວຍແຜ່ນຢາຂ້າເຊື້ອ ຫຼື ເຈວລ້າງມື.


1.
2.
3.
4.
5.
6.
7.
8.
9.
10.
11.
12.
13.
14.
15.

ມາດຕະຖານ ຂັ້ນຕອນການປະຕິບັດ ການເຝົ້າລະວັງພະຍາດສັດປ່າ ຢູ່ ສປປ ລາວ ສະບັບນີ້  ຖືກພັດທະນາຂຶ້ນໂດຍ ກົມລ້ຽງສັດ ແລະ ການປະມົງ ແລະ ອົງການ ອະນຸລັກສັດປ່າ ປະຈຳ ສປປ ລາວ (WCS)

**ພາຍໃຕ້ໂຄງການພັດທະນາເຄືອຂ່າຍ ການເຝົ້າລະວັງພະຍາດສັດປ່າ (WildHealthNet)**

ໂດຍການສະໜັບສະໜູນຂອງ ອົງການປ້ອງກັນຫຼຸດຜ່ອນໄພຂົ່ມຂູ່ (DTRA) - ແຜນງານຫຼຸດຜ່ອນໄພຄຸກຄາມທາງດ້ານຊີວະວິທະຍາ (BTRP) ພາຍໃຕ້ກະຊວງປ້ອງກັນປະເທດຂອງສະຫະລັດອາເມລິກາ

ໂຮງພິມ ..............................
ໃບອະນຸຍາດຈັດພິມ ເລກທີ ........................
ນະຄອນຫຼວງວຽງຈັນ
ພິມຄັ້ງທີ 1
ຈຳນວນ 500 ຫົວ
ໂຄງການ ພັດທະນາເຄືອຂ່າຍການເຝົ້າລະວັງພະຍາດຈາກສັດປ່າ ລະດັບຊາດ